ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1- 4
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 6 -10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 6 -10
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 5, 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 5, 11-13
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Easter Lesson
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ບົດຮຽນທີ 1</u>
# ການເຜົາເຄື່ອງບູຊາຖວາຍແດ່ພຣະເຈົ້າ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ລະບຽບພວກເລວີ 1:1-3; 2:1-3; 3:1; 4:1-3, 13,22-23, 27-28; 5:1-6

<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u> ລະບຽບພວກເລວີ ບົດທີ 1 ຫາ ບົດທີ 7

<u>ຈຸດສໍາຄັນຂອງບົດຮຽນນີ້</u>: ການເຜົາເຄື່ອງບູຊາຖວາຍຂອງຊົນຊາດອິສຣາເອນ ແມ່ນເປັນເຄື່ອງໝາຍໃນການຍອມຖວາຍຕົວໃຫ້ກັບພຣະເຈົ້າ, ແມ່ນການຮູ້ບຸນຄຸນຂອງພຣະເຈົ້າ, ແມ່ນການມີຄວາມສັມພັນກັບພຣະເຈົ້າ ແລະກໍແມ່ນການຊົດໃຊ້ ທີ່ຕົນເອງໄດ້ກະທໍາບາບຜ່ານມາ.

<u>ຄໍາຖາມເພື່ອສໍາຣວດ</u>: ແມ່ນຫຍັງຄືຫລັກການ ທີ່ເຮັດໃຫ້ຄົນອິສຣາເອນ ມີການເຜົາເຄື່ອງບູຊາຖວາຍ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະອະທິບາຍເຖິງການຖວາຍຂອງຊາວອິສຣາເອນ ແລະການຖວາຍຂອງພວກເຂົາເຫລົ່ານັ້ນ ຈະມີຜົນສະທ້ອນຫຍັງແດ່ຕໍ່ພວກເຮົາທຸກວັນນີ້?

## <u>ຄໍານໍາ</u>

ມີປີນຶ່ງທີ່ຂ້າພະເຈົ້າເອງ ມີໂອກາດໄປທ່ຽວປະເທດໄທ (ພາກອີສານ) ໄລຍະນັ້ນກໍແມ່ນ ບຸນປີໃຫມ່, ຂ້າພະເຈົ້າ ໄດ້ໄປທ່ຽວທີ່ເດີ່ນ ບ່ອນທີ່ຝູງຊົນທັງຫລາຍນະມັສການຂາບໄຫວ້ ແລະ ຫົດສົງນໍ້າພຣະ. ພຣະເຫລົ່ານັ້ນເຄືອບດ້ວຍເງິນ ແລະຄໍາແຕກຕ່າງກັນໄປ. ກ່ອນທີ່ຈະໄປຫົດສົງນັ້ນ ພວກເຂົາກໍໄດ້ພາກັນລ້າງມື ລ້າງແຂນຊໍາຣະຕົວເອງເສັຍກ່ອນ ແລ້ວກໍໄປສົງນໍ້າພຣະເຫລົ່ານັ້ນ. ພວກເຂົາໄດ້ພາກັນປຸງແຕ່ງນໍ້າອົບ ນໍ້າຫອມ ດ້ວຍດອກໄມ້ແລະ ອື່ນໆອີກ ເພື່ອໃຫ້ມີກິ່ນອັນຫອມຫວນ. ອ້ອມຮອບຮ້ານພຣະນັ້ນ ກໍຍັງມີບ່ອນໄຕ້ກະທູບ ແລະບ່ອນວາງດອກໄມ້ ເພື່ອໃຫ້ເຫັນເປັນບ່ອນທີ່ສັກກາຣະບູຊາຂຶ້ນ.

ອີກມຸມນຶ່ງ, ກໍຍັງມີຍິງຜູ້ນຶ່ງ ນັ່ງຢູ່ຂ້າງໆຕຸ້ມນົກ ທີ່ວາງໄວ້ເພື່ອຂາຍ. ບາງຄົນກໍໄປຊື້ສັດເຫລົ່ານັ້ນແລ້ວກໍນໍາໄປປ່ອຍ ເພື່ອໃຫ້ນົກນັ້ນເປັນອິສລະ, ແລະບາງຄົນກໍປຸງແຕ່ງອາຫານ ໃຫ້ມີຣົດແຊບທີ່ສຸດເພື່ອນໍາໄປ ຖວາຍ.

ເຮົາຈະເຫັນໄດ້ວ່າການຖວາຍມີຢູ່ຫລາຍແບບ ຫລາຍວິທີ. ຄົນທີ່ບໍ່ເຊື່ອພຣະເຈົ້າ ສມັຍກ່ອນພວກເຂົາພະຍາຍາມຄິດເດົາເອົາວ່າພຣະຂອງພວກເຂົາມັກຢ່າງນັ້ນ ມັກຢ່າງນີ້ ແລ້ວພວກເຂົາກໍເຮັດໄປຕາມນັ້ນ.

ພຣະເຈົ້າໄດ້ກ່າວຢ່າງເປີດເຜີຍແກ່ໂມເຊທີ່ "ເຕັ້ນນັດພົບ" (ລະບຽບພວກເລວີ 1:1). ເຕັ້ນນັດພົບແມ່ນສະຖານທີ່ ຊາວ ອິສຣາເອນ ມາພົບກັນ ແລະກໍເປັນບ່ອນທີ່ພຣະເຈົ້າຊົງປາກົດແກ່ພວກເຂົາດ້ວຍ ແລະເປັນສະຖານທີ່ບໍຣິສຸດ ພວກເຂົາກໍໄດ້ຖວາຍເຄື່ອງບູຊາແກ່ພຣະເຈົ້າທີ່ນັ້ນເຫມືອນກັນ.

1. <u>ຄົນທີ່ເຊື່ອພຣະເຈົ້າຕ້ອງນັບຖືແລະໃຫ້ກຽດແກ່ພຣະອົງ</u> (1:1-17; 6:8-13)

ຊາວອິສຣາເອນໃຊ້ຊີວິດຄວາມເປັນຢູ່ນໍາຝູງສັດ, ຝູງແກະ ແລະຝູງແບ້. ການເຜົາເຄື່ອງບູຊາຈຶ່ງມີມາແຕ່ສມັຍເດີມ ແລະການເຜົາເຄື່ອງບູຊານີ້ຈຶ່ງມີຄວາມຫມາຍຫລາຍສໍາລັບຜູ້ຖວາຍ. ສັດທີ່ຈະຖວາຍນັ້ນຈະ

ຕ້ອງເປັນສັດທີ່ບໍ່ມີຮອຍຕຳໜິໃດໆທັງສິ້ນ (1:3) ເມື່ອມາເຖິງຕອນນີ້ ຂ້າພະເຈົ້າຢາກຖາມພີ່ນ້ອງແດ່ວ່າ: ທ່ານເຄີຍເອົາ ໂຕະ ຕັ່ງທີ່ຫັກ, ຫລືວ່າ ໂຊຟາທີ່ຂາດ ມອບໃຫ້ໂບດຫລືບໍ່? ເພາະທ່ານຢາກປ່ຽນເອົາຊຸດໃຫມ່ເຂົ້າມາໃນເຮືອນຂອງທ່ານ. ຄົນເຮັບເຣີສມັຍເດີມພິຖີພິຖັນທີ່ສຸດໃນການຖວາຍນີ້, ເພາະໃນນີ້ພວກເຮົາຈະສາມາດເຫັນຮູບພາບທີ່ຍິ່ງໃຫຍ່ໃນການຖວາຍ ຊຶ່ງເລັງເຖິງການຖວາຍຕົວທີ່ບໍຣິສຸດຂອງອົງພຣະເຢຊູຄຣິດ.

ຄຣິສຕະສາສນາ ແມ່ນປະວັດສາດການພົວພັນ ລະຫວ່າງຊົນຊາດອິສຣາເອນກັບພຣະເຈົ້າ. ພຣະເຈົ້າຊົງສຳແດງແກ່ມະນຸດໃນພັນທະສັນຍາຂອງຊົນຊາດອິສຣາເອນ, ແລະການຖວາຍເຄື່ອງເຜົາບູຊາກໍເພື່ອເປັນສັນຍາລັກຂອງການຍອມຖວາຍຕົວຢ່າງສົມບູນ.

ສັດຕ່າງໆເມື່ອຖືກນຳມາແລ້ວ ຜູ້ຖວາຍນັ້ນ ຕ້ອງໄດ້ວາງມືໃສ່ຫົວສັດນັ້ນ (1:4) ນີ້ກໍແມ່ນໝາຍຄວາມວ່າ ຄວາມບາບທີ່ຜູ້ນັ້ນກະທຳຜ່ານມາ ຈະສົ່ງຄ່ຽນໄປຫາສັດ ແລະເມື່ອເຜົາສັດແລ້ວ ຄວາມບາບນັ້ນກໍຈະຖືກລຶບລ້າງໄປໂດຍສິ້ນເຊີງ. ສັດທຸກຕົວທີ່ນຳມາຖວາຍຕ້ອງໄດ້ຖືກເຜົາບູຊາ ແລະກໍຄວນຈະເຜົາຢູ່ເທິງແທ່ນບູຊາເທົ່ານັ້ນ. ລະບຽບພວກເລວີ 1:1-17; 6:8-13.

## 2. <u>ຄົນຂອງພຣະເຈົ້າສະແດງການຮູ້ບຸນຄຸນຕໍ່ພຣະອົງ</u> (2:1-16; 6:14-18)

ການຖວາຍນີ້ແມ່ນການຖວາຍແປ້ງ, ແລະແປ້ງນັ້ນກໍຕ້ອງເປັນແປ້ງທີ່ລະອຽດ ແລ້ວເອົານ້ຳມັນມາເຫລືອງໃນແປ້ງນັ້ນ. ເຄື່ອງບູຊາຊະນິດນີ້ ແມ່ນການສະແດງຄວາມຮູ້ບຸນຄຸນ ແລະຄວາມຈົງຮັກພັກດີ ທີ່ພວກເຂົາຮູ້ວ່າພຣະເຈົ້າຊົງເປັນຜູ້ຄອບຄອງ ເຫນືອສັພທຸກສິ່ງແລະເຫນືອຊີວິດພວກເຂົາອີກ. ໃນ 1 ພົງສາວະດານ 29:14 "ເພາະວ່າສິ່ງຂອງທຸກຢ່າງ ມາຈາກພຣະອົງ ຂ້າພະອົງທັງຫລາຍໄດ້ຖວາຍຂອງທີ່ເປັນຂອງພຣະອົງ ແດ່ພຣະອົງເທົ່ານັ້ນ:"
ຂໍ້ 1-3 ເຄື່ອງເຜົາບູຊານີ້ຈະຖືກເຜົາພຽງສ່ວນນຶ່ງ ເພື່ອເປັນສັນຍາລັກ (ຂໍ້ 2) ສຳລັບສ່ວນທີ່ເຫລືອໃຫ້ປະໂຣຫິດຮັບປະທານ. ແປ້ງທີ່ນຳມາຖວາຍຈະຕ້ອງເປັນຍອດແປ້ງ ແລະບໍຣິສຸດຢ່າງເຂັ້ມງວດ (ຂໍ້ 3).
ຂໍ້ 4-7 ກ່າວເຖິງເຂົ້າຫນົມ ແລະ ເຄື່ອງໃຊ້ທີ່ເຮັດເຂົ້າຫນົມ ແລ້ວນຳມາຖວາຍ ນີ້ແມ່ນການຖວາຍທີ່ເປັນກຳລັງໃຈໃຫ້ຜູ້ຖວາຍ, ແມ່ນວ່າຈະເປັນແບບໃດກໍແມ່ນຂຶ້ນຢູ່ກັບສະພາບຄອບຄົວຂອງແຕ່ລະຄົນ. ເຖິງແມ່ນວ່າຈະບໍ່ໄດ້ກ່າວເຖິງກຳຍານກໍຕາມ ພວກເຂົາກໍຕ້ອງໃຊ້ຢ່າງແນ່ນອນ.
ຂໍ້ 11-13 ຫ້າມເຜົາບັນດາເຄື່ອງບູຊາ ທີ່ປະສົມເຊື້ອແລະນ້ຳເຜິ້ງ ເພາະເມື່ອຖືກໄຟເຜົາ ມັນຈະໂພງແລະມີສະພາບທີ່ບໍ່ເປັນຫນ້າຢາກເບິ່ງ. ທັງສອງຢ່າງນີ້ ຈະໃຊ້ເປັນຜົນແລກທີ່ນຳມາຖວາຍກໍໄດ້ ແຕ່ຫ້າມເຜົາ.
ຂໍ້ 12-13 ເວົ້າເຖິງເຣື່ອງເກືອ ຊຶ່ງເປັນສິ່ງທີ່ຊ່ວຍຮັກສາຂອງທີ່ໃຊ້, ແລະເພື່ອເຕືອນໃຫ້ຮັກສາພັນທະສັນຍາກັບພຣະເຈົ້າ. (ຂໍ້ 13) ອົບພະຍົບ 18:19, 2 ພົງສາວະດານ 13:5
ຂໍ້ 14-16 ເນື່ອງຈາກການຖວາຍເຄື່ອງບູຊາ ກ່ຽວຂ້ອງກັບອາຫານປະຈຳວັນຂອງຄົນອິສຣາເອນ ຕລອດຈົນເຖິງວິທີປຸງແຕ່ງ, ການຖວາຍບູຊາຊະນິດນີ້ ຈຶ່ງເປັນການອຸທິດຊີວິດປະຈຳວັນແດ່ພຣະເຈົ້າ ແລະບັນດາສິ່ງຈຳເປັນໃນແຕ່ລະວັນ ທີ່ຊົງປະທານໃຫ້ນັ້ນ, ສ່ວນນ້ຳມັນນັ້ນ ເປັນສັນຍາລັກຂອງພຣະວິນຍານບໍຣິສຸດ.

## 3. <u>ຄົນຂອງພຣະເຈົ້າຈະສເລີມສລອງມິຕພາບອັນດີກັບພຣະເຈົ້າ</u> (3:1-17; 7:11-36

ຄຳສັ່ງທີ່ກ່ຽວກັບເຄື່ອງບູຊາເປັນລະບຽບການທີ່ຕັກເຕືອນໃນການຖວາຍ ວ່າສິ່ງໃດເໝາະສົມແລະບໍ່ເໝາະສົມ. ໃນພຣະທັມຕອນນີ້ໄດ້ກ່າວບອກເຖິງ 3 ຢ່າງໃນການທີ່ຈະໃຊ້ສັດມາຖວາຍຄື: ງົວຄວາຍ(3:1-5) ແກະ (3:6-11) ແບ້, (3:12-17) ແລະວິທີການກະທຳຢ່າງລະອຽດ.

ເປັນຫຍັງມະນຸດຈຶ່ງຄວນມີມິດຕພາບອັນດີກັບພຣະເຈົ້າ? ກໍເພາະວ່າ (1) ພຣະເຈົ້າຊົງສ້າງມະນຸດເພື່ອໃຫ້ມີສັມພັນແລະມິດຕພາບອັນດີກັບພຣະອົງ, (2) ມະນຸດກະທຳບາບແລະຈະຕ້ອງຖືກລົງໂທດ, ( 3) ພຣະເຈົ້າຍັງຕິດຕໍ່ກັບມະນຸດຢູ່ທຸກເວລາ ຈົນເຖິງສມັຍດຽວນີ້, (4) ມະນຸດຍັງຕ້ອງການຜູ້ມີອຳນາດມາຊ່ວຍພວກເຂົາໃຫ້ຫລຸດ ພົ້ນຈາກບາບ, (5) ການຖວາຍ ແມ່ນການລະລຶກເຖິງຄວາມສັມພັນລະຫວ່າງ ຄົນຂອງພຣະອົງແລະພຣະອົງເອງ.

ເພື່ອຈະມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້ານັ້ນ ຜູ້ນຳຂອງມາຖວາຍຈະຕ້ອງບໍຣິສຸດ ເພື່ອຈະຊຳຣະຄວາມຜິດບາບໄດ້ (ມທ 5:23-24)

## 4. <u>ລະບຽບໃນເວລາຄົນຂອງພຣະເຈົ້າກະທຳບາບ</u> (4:1-5:13; 5:14-6:7; 6:24-30; 7:1-10)

ບາງຄັ້ງຄາວຄົນເຮົາກໍໄດ້ເຮັດຜິດບາບໂດຍບໍ່ເຈຕນາ (4:1) ເຊັ່ນ: ຂັບຣົດເຂົ້າເລນຜິດ, ຢາກຈະລ້ຽວກໍລ້ຽວບໍ່ໄດ້, ຕັດສິນໃຈຂັບລົດຕັດໜ້າຜູ້ອື່ນ, ເຮັດໃຫ້ເກີດອຸປະຕິເຫດ, ຈົນເຖິງໄດ້ຂຶ້ນສານກໍເປັນໄດ້. ພຣະທັມຕອນນີ້ ແມ່ນລະບຽບໃນການກະທຳຜິດຂອງຜູ້ເປັນປະໂຣຫິດ. ປະໂຣຫິດເປັນຜູ້ຮູ້ຫລາຍຮູ້ລະບຽບຫລາຍເວລາກະທຳຜິດກໍຕ້ອງໜັກເປັນຂອງທັມດາ. ຄືຕ້ອງໄດ້ຖວາຍງົວເຖິກໜຸ່ມຢູ່ຕໍ່ໜ້າເຕັ້ນ (4:4) ຕ້ອງໄດ້ວາງມືໃສ່ຫົວຂອງສັດນັ້ນ (4:4) ຕ້ອງຂ້າສັດນັ້ນ (4:4) ຕ້ອງໄດ້ນຳເລືອດສັດນັ້ນເຂົ້າໄປໃນວິຫານສະຖານບໍຣິສຸດ ແລະຕ້ອງໄດ້ປະພົມຜ້າກັ້ງທີ່ສະຖານທີ່ນະມັສການເຖິງເຈັດຄັ້ງ (4:6) ເທເລືອດທີ່ເຫລືອລົງ ທີ່ແທ່ນບູຊາໃກ້ໆກັບປະຕູເຕັ້ນ. (4:7; 18; 25; 34) ຕ້ອງໄດ້ເຜົາເຄື່ອງໃນ, (4:8-10) ສ່ວນອື່ນໆທີ່ບໍ່ດີ ຫລືເວົ້າອີກຢ່າງນຶ່ງວ່າຂອງເສດເຫລືອໃຫ້ເອົາໄປເຜົາຖິ້ມນອກຂອບເຂດຂອງຄ້າຍ. (4:11-12) ຈະເປັນປະໂຣຫິດຫລືເປັນປະຊາຊົນທັມດາກໍຕາມ ຖ້າຜູ້ໃດກະທຳບາບຄົນນັ້ນກໍຕ້ອງເປັນຄົນບາບ. ເມື່ອຄວາມບາບຫາກເກີດຂຶ້ນແລ້ວທຸກຄົນຕ້ອງຍອມ ແລະຕ້ອງຊອກສແວງຫາການອະພັຍໂທດຈາກພຣະເຈົ້າ.

ຄວາມບາບຕໍ່ໄປນີ້ ແມ່ນການກະທຳບາບໃນ "ການໃຫ້ແລະການບໍ່ສັດຊື່" (5: 17; 5:14 ຫາ 6:7; 7:1-10) ຢ່າງໃດກໍຕາມ ການບໍ່ສັດຊື່ນີ້ກໍແມ່ນກະທຳບາບຢູ່ແລ້ວ. ຈຳເປັນຕ້ອງໄດ້ເຂົ້າມາຖວາຍຕົວໃໝ່. ປັບປຸງຕົວໃໝ່ແລະຖືກປັບໄໝດ້ວຍ. (5:6)

ພຣະເຈົ້າມີພຣະປະສົງທີ່ຈະໃຫ້ຄົນຂອງພຣະອົງມີຄວາມສັມພັນອັນດີກັບພຣະອົງ. ຖ້າມີສິ່ງໃດຫາກຂາດສະບັ້ນລົງພຣະອົງກໍຢາກຈະປັບປຸງໃຫ້ຄືນດີ. ແຕ່ມະນຸດຂອງພວກເຮົາຊ້ຳຜັດບໍ່ເປັນດັ່ງນັ້ນ, ເວລາພວກເຂົາຖວາຍເຂົາບໍ່ໄດ້ມີຈິດໃຈຈົດຈໍ່ຕໍ່ພຣະເຈົ້າຢ່າງແທ້ຈິງ. ພວກເຂົາຍັງຫັນແນວຄິດໄປຫາສິ່ງອື່ນ ຫລືຄິດເຖິງການກະທຳຢ່າງອື່ນ. ຜູ້ປະກາດພຣະທັມເຢເຣມີຢາແລະອາໂມດໄດ້ກ່າວວ່າ ສິ່ງໃດທີ່ນຳມາຖວາຍຈະຕ້ອງເປັນສິ່ງທີ່ບໍຣິສຸດ ຖ້າບໍ່ດັ່ງນັ້ນກໍຈະກາຍເປັນສິ່ງມົນທິນ ແລ້ວພຣະອົງກໍຈະບໍ່ຍອມຮັບການຖວາຍນັ້ນ. ເຢເຣມີຢາ 21:3; ອາໂມດ 5:22-23)

ປັດຈຸບັນນີ້ ພຣະເຢຊູໄດ້ຊົງເປັນເຄື່ອງເຜົາບູຊາລົບລ້າງມົນທິນໃຫ້ພວກເຮົາແລ້ວ, ພວກເຮົາບໍ່ຈຳເປັນຕ້ອງຂ້າ ແກະ, ຂ້າແບ້, ຂ້ານົກ ຫລືວ່າ ແປ້ງຕ່າງໆ ອີກແລ້ວ.

ພວກເຮົາທັງຫລາຍນະມັສການໃນສະຖານທີ່ໂອ່ໂຖງ, ຫວັງວ່າພວກເຮົາຈະແນໃສ່ອົງພຣະເຢຊູຄຣິດແຕ່ພຽງ ຜູ້ດຽວ ແຕ່ຍັງມີຫລາຍຄົນຍັງມີຈິດໃຈອອກນອກລູ່ນອກທາງຈາກພຣະອົງ. ຫວັງວ່າການສຶກສາພຣະທັມ ລະບຽບພວກເລວີ ຈະຊ່ວຍນຳແນວຄິດແລະຈິດໃຈ ຂອງພວກເຮົາໃຫ້ເຂົ້າມາອະທິຖານດ້ວຍຈິດໃຈນະມັສ ການອັນແທ້ຈິງ.

<u>ຄຳຖາມ</u>

1. ເວລາທ່ານຂຽນເຊັກ ໃຫ້ໂບດ ທ່ານມີຄວາມຮູ້ສຶກຢ່າງໃດ?

2. ທ່ານຈະຈັດການກັບການຖວາຍຢ່າງໃດ ໃນເມື່ອທ່ານອຸທິດຕົວເພື່ອພຣະເຢຊູ?

3. ການກະທຳບາບໂດຍບໍ່ໄດ້ຕັ້ງໃຈນັ້ນຄືຫຍັງ?

4. ໃນຊີວິດຂອງທ່ານ ແມ່ນຫຍັງຄືຄວາມບາບ?

5. ທ່ານຈະລະວັງໄດ້ບໍ່ ເມື່ອເວລາທ່ານຮູ້ວ່າຕົວເອງເວົ້າຜິດຫລືກະທຳຜິດ?

ສຈ. ບຸນໂຮມ ພົມມະຈັນ

# <u>ບົດຮຽນທີ ໒</u>
# ຈົ່ງຮັບເອົາການອະພັຍໂທດຈາກພຣະເຈົ້າ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ລະບຽບພວກເລວີ 16:11-໒໒; ໒9-34

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ລະບຽບພວກເລວີ 16:1-34; ໒3:໒6-3໒

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພິທີລົບລ້າງມົນທິນ ໃນວັນລົບລ້າງບາບນັ້ນສຳແດງອອກເຖິງການໄດ້ຮັບການອະພັຍໂທດຈາກພຣະເຈົ້າ.

<u>ຄຳຖາມເພື່ອສຳຣວດ</u>: ການອະພັຍໂທດຂອງພຣະເຈົ້າ ມາສູ່ມວນມະນຸດພວກເຮົາຢ່າງໃດ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຊີ້ໃຫ້ເຫັນເຫດການໃນວັນລົບລ້າງບາບ ແລະເຫດການນັ້ນມີຄວາມສັມພັນຕໍ່ການອະພັຍບາບໃນພຣະເຢຊູຄຣິດ.

## <u>ຄຳນຳ</u>

ຄວາມແຕກຕ່າງອັນໃຫຍ່ລະຫວ່າງຮູ້ຈັກຄວາມໝາຍຂອງຄວາມບາບ ແລະຮູ້ຈັກຄວາມສຳຄັນຂອງຄວາມບາບຂອງຜູ້ນື່ງໃນຊີວິດ. ພວກເຮົາກ້າເວົ້າລົມກັນເຣື່ອງບາບ ແລະກໍຮັບຮູ້ຄວາມບາບຂອງຕົນເອງດ້ວຍ, ໂດຍບໍ່ມີຄວາມຮູ້ສຶກສະຍົດສະຫຍອງໃນຈິດໃຈຫຍັງເລີຍ. ຢ່າງໃດກໍຕາມ ເມື່ອການກະທຳການເປິະເປື້ອນມັນຫາກແດງຂື້ນມາຢ່າງແທ້ຈິງ, ພວກເຮົາຈະບໍ່ສາມາດລົບລ້າງຈຸດດ່າງພ້ອຍຈາກຈິດວິນຍານຂອງເຮົາໄດ້. ຫົວໃຈຂອງເຮົາຈະແຕກສລາຍ ເມື່ອເຮົາຫາກເຫັນວ່າສິ່ງທີ່ພຣະເຈົ້າມອບໃຫ້ແກ່ເຮົານັ້ນມີຄຸນຄ່ານ້ອຍກວ່າຕົວເຮົາເອງ.

ໃນພຣະຄັມພີເດີມ, ຄົນເຮັບເຣີ ມີຄວາມວິຕົກກັງວົນກ່ຽວກັບການໃຫ້ອະພັຍບາບ ໃນຄວາມສັມພັນກັບພຣະເຈົ້າ. ເຫັນໄດ້ໃນການຖວາຍ (ບົດຮຽນທີນື່ງ) ທີ່ໄດ້ນຳມາຖວາຍໃຫ້ແກ່ພຣະເຈົ້າ ຊຶ່ງມີຄວາມໝາຍໄປແຕ່ລະທິດທາງຂອງຊີວິດ. ບາງຄົນກໍກ່າວອອກໄປກ່ຽວກັບບາບ, ບາງຄົນກໍກ່າວອອກໄປໃນຄວາມຕ້ອງການຂອງໃຜຂອງລາວ. ຂອງຖວາຍແລະການໄກ່ເກັ່ຍນີ້ຕ້ອງໄດ້ຜ່ານປະໂຣຫິດທີ່ໄດ້ເລືອກໄວ້ແລ້ວນັ້ນ. ປີລະຄັ້ງປະໂຣຫິດຈະນຳພາຝູງຊົນທັງຫລາຍມາທຳພິທີທີ່ສະຖານທີ່ເຕົ້າໂຮມ ແລະສິ່ງຂອງທີ່ນຳມານັ້ນ.

ໃຫ້ພວກເຮົາມາພິຈາຣະນາເບິ່ງຄວາມໝາຍຂອງວັນແຫ່ງການລົບລ້າງຄວາມບາບ ກ່ອນທີ່ຈະເຂົ້າລາຍລະອຽດເຖິງເນື້ອໃນຂອງອາທິດນີ້. ການລົບລ້າງບາບໝາຍຄວາມວ່າການຄືນດີ. ໃນພຣະຄັມພີເດີມ ສ່ວນຫລາຍການລົບລ້າງບາບນີ້ແມ່ນອ້າງອີງເຖິງມອບການຖວາຍ ແລະການສາລະພາບຄວາມບາບຕໍ່ພຣະເຈົ້າ ພຣະບັນຍັດ ໒1:8 ແມ່ນຂໍ້ມູນທີ່ບົ່ງບອກເຖິງການຄືນດີຂອງພຣະເຈົ້າແລະມະນຸດທີ່ກະທຳບາບ. ໃນພຣະຄັມພີໃໝ່ ການໄຖ່ບາບໃນໂລກ (ການຄືນດີ) ນີ້ແມ່ນຕ້ອງຜ່ານອົງພຣະເຢຊູຄຣິດ. ໒ ໂກຣິນໂທ 5:18-19. ໂຣມ ບົດ3:25 ເອີ້ນການທຳງານຂອງພຣະເຢຊູທີ່ພຣະອົງຊົງກະທຳທີ່ໄມ້ກາງແຂນວ່າ "ການຖວາຍເພື່ອລົບລ້າງບາບ." ຈາກການກະທຳບາບຂອງມະນຸດຄົນແລກທີ່ສວນເອເດນ (ປຖກ. 3) ພຣະເຈົ້າຈຶ່ງໄດ້ຈັດແຈ່ງທາງເພື່ອໄຖ່ບາບໃຫ້ແກ່ມະນຸດ ເພາະມະນຸດຈະບໍ່ມີທາງຄືນດີແລະກັບມາຫາພຣະອົງດ້ວຍຕົນເອງຢ່າງເດັດຂາດ. ມີແຕ່ພຣະໂລຫິດຂອງພຣະອົງເທົ່ານັ້ນ ທີ່ຈະສາມາດປູທາງໃຫ້ມະນຸດກັບຄືນມາມີຄວາມສັມພັນກັບພຣະອົງໄດ້. ເຮັບເຣີ 9:11-໒໒

ຄຳແນະນຳພິເສດສຳລັບວັນລຶບລ້າງບາບນີ້ ແມ່ນຢຸດແລະລະຈາກວຽກງານຕ່າງໆ. ພວກເຂົາຕ້ອງໃຊ້ເວລາຢູ່ບ້ານ ໃນຂະນະທີ່ປະໂຣຫິດກຳລັງເຮັດວຽກໃຫ້ກັບເຂົາ. ລະບຽບພວກເລວີ 16:3; 23:26-32.

## 1. <u>ການຊຳຣະລ້າງບາບຂອງປະໂຣຫິດ</u> (16:11-14)

ໃນພິທີກັມທາງສາສນາໃນວັນລຶບລ້າງບາບນັ້ນ, ກ່ອນອື່ນຫມົດຈະຕ້ອງແມ່ນການລຶບລ້າງບາບຂອງປະໂຣຫິດເສັຍກ່ອນ. (ຂໍ້ 11) ປະໂຣຫິດຕ້ອງໄດ້ຖວາຍງົວຫນຸ່ມເປັນເຄື່ອງບູຊາ (16:3).

ເອຊາຢາໄດ້ບັນທຶກໄວ້ກ່ຽວກັບຫົວໃຈທີ່ບໍຣິສຸດຂອງປະໂຣຫິດວ່າ "ວິບັດແກ່ຂ້າພະເຈົ້າ ເພາະຄຳເວົ້າທຸກໆຄຳທີ່ອອກຈາກປາກຂອງຂ້າພະເຈົ້າ ລ້ວນແຕ່ເປັນບາບ....." ອຊຢ 6:5. ດັ່ງດຽວກັນ ຜູ້ນຳທຸກຄົນທີ່ຈະນຳການນະມັສການ ຕ້ອງໄດ້ໃຊ້ເວລາກັບພຣະບິດາເສັຍກ່ອນ ເພື່ອສາລະພາບແລະຈັດຕຽມທຸກຢ່າງ. ເບິ່ງເວລາມີໃຜຜູ້ນຶ່ງທີ່ຈະເກີດຂຶ້ນມາໃນໂລກນີ້, ຊີວິດຂອງເຂົາຕ້ອງໄດ້ລ້າງດ້ວຍນ້ຳ ແຕ່ຊີວິດຝ່າຍຈິດວິນຍານ ເມື່ອຈະເດີນໄດ້ ກໍຕ້ອງໄດ້ຊຳຣະລ້າງໃຫ້ສະອາດເສັຍກ່ອນ. ຜູ້ນຳທຸກຄົນຈະຮູ້ ແລະຊາບຊຶ້ງເຖິງຄວາມເປັນມະນຸດຂອງຕົນເອງໄດ້ດີ. ຈຳໄວ້ອີກວ່າ ມີພຣະເຢຊູພຽງຜູ້ດຽວເທົ່ານັ້ນທີ່ບໍຣິສຸດ ແລະບໍ່ມີຄວາມຜິດບາບຫຍັງເລີຽ. ຈົ່ງອະທິຖານເພື່ອຜູ້ນຳຂອງທ່ານ, ຈົ່ງໃຫ້ຄຳເວົ້າທີ່ອອກມາຈາກປາກຂອງທ່ານນັ້ນເປັນຄຳຫນູນໃຈເພື່ອໃຫ້ຈິດວິນຍານຂອງພວກເຂົາຈະເຣີນຂຶ້ນ.

ສຳລັບກິ່ນອັນຫອມຫວນແມ່ນການຈັດຕຽມພິເສດ (16:12; ເບິ່ງໃນ ອົພຍົບ 30:34-38). ປະໂຣຫິດຈະນຳຝຸ່ນເຄື່ອງຫອມຫວນເຕັມສອງກຳມື ເພື່ອຈະເຜົາໃຫ້ກິ່ນອັນຫອມໄປເຖິງພຣະທີ່ນັ່ງຂອງພຣະເຈົ້າ ແລ້ວດ້ວຍນິ້ວມືເຂົາຈະເອົາເລືອດມາປະພົມຫນ້າພຣະທີ່ນັ່ງເຖິງເຈັດເທື່ອ (16:14). ການປະພົມເລືອດນີ້ ແມ່ນເລງເຖິງອົງພຣະເຢຊູຄຣິດ. ດັ່ງເຮັບເຣີ 9:22 ກ່າວໄວ້ວ່າ: "ຖ້າບໍ່ມີເລືອດໄຫລອອກແລ້ວການອະພັຍໂທດບາບກໍຈະມີ"

## 2. <u>ການຊຳຣະລ້າງບາບຂອງຄົນທົ່ວໄປ</u> (16:15-22 )

ການຊຳຣະລ້າງບາບຕໍ່ໄປແມ່ນສຳລັບຄົນທົ່ວໄປ (16:15). ປະໂຣຫິດຈະຈັບແກະມາສອງໂຕ ເພື່ອຈະຈັບສະຫລາກ. ແກະໂຕນຶ່ງຈະຖືກນຳໄປຖວາຍ ແລະແກະອີກໂຕນຶ່ງຈະຖືກປ່ອຍເປັນອິສລະ.

ແກະໂຕທີ່ຖືກຂ້າຈະກາຍເປັນໂຕທີ່ຮັບບາບແທນຄົນທັງຫລາຍ (16:15) ເລືອດແກະໂຕນັ້ນຈະກາຍມາເປັນເລືອດຂອງຄົນທັງປວງ (16:16). ຄຳວ່າ "ກະບົດ" ແມ່ນເປັນຄຳເວົ້າທີ່ຫນັກ ແລະຫມາຍຄວາມວ່າຄວາມສັມພັນໄດ້ຖືກຕັດຂາດໄປແລ້ວ. ແນວຄິດຂອງຄວາມສັມພັນໃນພຣະຄັມພີເດີມ ແມ່ນລະບຽບການສັມພັນ. ປີລະຄັ້ງ ຄົນຂອງພຣະເຈົ້າຈຳເປັນຕ້ອງໄດ້ຍອມຈຳນົນຮັບວ່າຕົນເອງເປັນຜູ້ບໍ່ບໍຣິສຸດ. ພວກເຮົາສ່ວນຫລາຍມັກເຫັນຄວາມຜິດໃນໂຕຜູ້ອື່ນ ແລະກໍເບິ່ງຂ້າມຄວາມຜິດຂອງຕົນເອງ. ຄົນຂອງພຣະເຈົ້າຈະມີຄວາມສະບາຍໃຈເມື່ອເຂົາຫາກສາລະພາບ ແລະສຳນຶກໃນຄວາມຜິດບາບ. ຖ້າເຮົາຫາກສາລະພາບບາບເຣື່ອງການຊຸບຊິບນິນທາ ຄົນສ່ວນໃຫຍ່ໃນໂບດກໍຈະປ່ຽນແປງ, ຖ້າເຮົາຫາກສາລະພາບບາບໃນການໃຊ້ຈ່າຍຢ່າງຟູມເຟືອຍ ການເປັນພະຍານດ້ານຊີວິດການເປັນຢູ່ກໍຈະກວ້າງຂວາງອອກ. ທ່ານມີຄວາມບາບປະເພດໃດບໍ່ທີ່ຈະສາລະພາບຕໍ່ພຣະເຈົ້າ?

ໃນພຣະຄັມພີໃໝ່ 1 ຕີໂມທຽວ 2:5 "ດ້ວຍວ່າມີພຣະເຈົ້າອົງດຽວ ແລະມີຄົນກາງແຕ່ພຽງຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດ"
1ເປໂຕ 3:18 "ດ້ວຍວ່າພຣະຄຣິດກໍໄດ້ສິ້ນພຣະຊົນພຽງຄັ້ງດຽວເທົ່ານັ້ນ ເພາະຄວາມຜິດບາບ ຄືພຣະອົງຜູ້ຊອບທັມເພື່ອຜູ້ບໍ່ຊອບທັມ ເພື່ອຈະໄດ້ຊົງນຳເຮົາທັງຫລາຍໄປເຖິງພຣະເຈົ້າ."

3. <u>ການຊຳຣະລ້າງສະຖານທີ່ສັກສິດ</u> (16:29-34)

ໃນເວລາທີ່ຂ້າພະເຈົ້າເປັນສິດຍາພິບານໃໝ່ໆ ໃນຄຣິສຕະຈັກແຫ່ງນຶ່ງ, ເຊົ້າວັນນຶ່ງຊຶ່ງເປັນວັນອາທິດ ຂ້າພະເຈົ້າໄດ້ຍ່າງເລາະລຽບອາຄານ. ທັນໃດນັ້ນ ຂ້າພະເຈົ້າຕ້ອງຢຸດຊະງັກ ເມື່ອເຫັນຕັ່ງອີ້ເກົ່າໆໜ່ວຍນຶ່ງຢູ່ຂ້າງຝາ. ຂ້າພະເຈົ້າໄດ້ເຫັນສິ່ງທີ່ແປກປລາດ. ພໍການນະມັສການສິ້ນສຸດລົງແລ້ວ, ທຸກຄົນກໍກັບບ້ານກັນທຸກຄົນ ຂ້າພະເຈົ້າກໍໄດ້ໄປສັງເກດອີກຄັ້ງນຶ່ງ, ກໍເຫັນໄດ້ວ່າມີກົ້ນກອກຢາ ຊີກາ ຢູ່ຫລາຍກວ່າ 50 ກົ້ນເຊື່ອງສອດໄວ້ຢູ່ຂ້າງຕັ່ງອີ້ນັ້ນ. ສະມາຊິກເກົ່າຄົນນຶ່ງຕິດນິດໄສ ລາວມາໂບດກ່ອນໝູ່ເພື່ອມາໃຕ້ໄຟ ແລະເປີດອາຍອຸ່ນໃນຍາມໜາວ. ໃນເວລາທີ່ລາວລໍຖ້າໝູ່ຢູ່ນັ້ນ ລາວໄດ້ຄົ້ງຣວຍຢາ ຊີກາ ຂອງລາວ. ເມື່ອຫລາຍຄົນມາເຖິງແລ້ວ ລາວກໍເອົາກົ້ນຢາຂອງລາວສອດໄວ້ຢູ່ຂ້າງຕັ່ງ.

ໂລຍະສັ້ນໆ ຜ່ານມາເປັນວັນອະນາມັຍໂບດ, ໃນເວລາທີ່ອະນາມັຍຢູ່ນັ້ນ ຂ້າພະເຈົ້າໄດ້ໄປເອົາມີພາດບ່າຂອງຄົນໆນັ້ນ ແລະກໍຖາມກ່ຽວກັບກົ້ນກອກຢານັ້ນ ແລ້ວພວກເຮົາຫົວກັນຢ່າງມ່ວນຊື່ນ. ຊາຍຄົນນັ້ນກໍໄປທຳຄວາມສະອາດກົ້ນກອກຢາຂອງລາວ ແລະຕໍ່ແຕ່ນັ້ນມາ ກໍບໍ່ເຫັນກົ້ນກອກຢາອີກ.

ຄວາມຕ້ອງການຂອງພຣະເຈົ້າ ຄືພຣະອົງຢາກໃຫ້ສະຖານທີ່ຂອງພຣະອົງເປັນສະຖານທີ່ບໍຣິສຸດ ເພາະພຣະອົງບໍຣິສຸດ. ງານສຳຄັນໃນວັນລ້າງມົນທິນກໍຄືຕ້ອງທຳຄວາມສະອາດຫຳເຕັ້ນ, ຊຶ່ງປັດຈຸບັນນີ້ ໃນພຣະຄັມພີໃໝ່ ກໍຍັງຮຽກຮ້ອງຕ້ອງການໃຫ້ເຮົາບໍຣິສຸດ (1 ໂກຣິນໂທ 6:19) ພວກເຮົາເປັນວິຫານ ( ທີ່ເຄື່ອນໄຫວໄປມາ) ທີ່ບໍຣິສຸດຂອງພຣະເຈົ້າ

4. <u>ການຊຳຣະລ້າງໃນພຣະຄັມພີໃໝ່</u>

ໃນພຣະຄັມພີເດີມ, ການກະຕຽມວັນລົບລ້າງມົນທິນນີ້ ໄດ້ເລັງເຖິງການຈັດການຂອງອົງພຣະເຢຊູຄຣິດ. ເມື່ອພຣະເຢຊູຊົງສິ້ນພຣະຊົນທີ່ໄມ້ກາງແຂນ ຊຶ່ງເປັນສະຖານທີ່ເອີ້ນວ່າ ໂກລະໂກທາ, ຜ້າກັ້ງທີ່ວິຫານໄດ້ສີກຂາດແຕ່ເທິງຮອດລຸ່ມ ຄືເສັ້ນທາງທີ່ພຣະເຈົ້າຊົງຈັດຕຽມທາງແຫ່ງການຊົງໄຖ່ໃຫ້ແກ່ທຸກຄົນ (ມທ 27:51)

ພຣະອົງຊົງສຳແດງຄວາມຮັກຂອງພຣະອົງຕໍ່ທຸກຄົນ, ເຖິງແມ່ນວ່າເຮົາຈະຍັງເປັນຄົນບາບແລະກະບົດຕໍ່ພຣະອົງຫລາຍປານໃດກໍຕາມ ໂຣມ 5:8; 6:23; ຮຮ 9:14. ແຕ່ພຣະຄັມພີຊົງກ່າວວ່າ :
"ຖ້າພວກເຮົາຫາກສາລະພາບບາບຂອງເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງຍົກບາບຂອງເຮົາແລະຈະຊົງຊຳຣະໃຫ້ເຮົາພົ້ນຈາກຄວາມບາບທັງສິ້ນ" 1 ໂຢຮັນ 1:9
"ຈົ່ງກັບໃຈໃໝ່ແລະຮັບບັບຕິສະມາໃນພຣະນາມແຫ່ງພຣະເຊຄຣິດໝົດທຸກຄົນ ເພື່ອພຣະເຈົ້າຈະຊົງຍົກຜິດບາບຂອງທ່ານເສັຍ ແລ້ວທ່ານຈະໄດ້ຮັບພຣະຣາຊທານພຣະວິນຍານບໍຣິສຸດ" ກິຈການ 2:38

ທຸກວັນນີ້ ຄົນສ່ວນຫລາຍຊອກສແວງຫາແຕ່ຄົນຊອບທັມ, ພຣະເຢຊູກາຍເປັນຄົນບາບ ກໍຍ້ອນຄວາມບາບ

ຂອງພວກເຮົາທັງສິ້ນ.   ພຣະເຢຊູສະລະທຸກຢ່າງເພື່ອພວກເຮົາ.  ໃນບົດຮຽນວັນນີ້ ໄດ້ສອນທ່ານເຖິງອັນໃດແດ່? ທ່ານໄດ້ມອບຊີວິດຂອງທ່ານໄວ້ໃນກຳມືຂອງພຣະອົງແລ້ວຫລືຍັງ?

<u>ຄຳຖາມ</u>

1. ທ່ານພໍຈະອະທິບາຍໄດ້ແດ່ບໍ່, ທ່ານຄິດຢ່າງໃດເມື່ອທ່ານຮູ້ວ່າທ່ານກຳລັງທຳຜິດ?   ທ່ານຈະນຳຄວາມຜິດນັ້ນມາຫາພຣະເຈົ້າຢ່າງໃດ?  ທ່ານມີປະສົບການໃນການໃຫ້ອະພັຍຢ່າງໃດ?

2. ຈົ່ງຈຳໄວ້ວ່າ ອາຈານຂອງທ່ານກໍເປັນມະນຸດດັ່ງດຽວກັບທ່ານ, ທ່ານອະທິຖານຕໍ່ພຣະເຈົ້າເພື່ອຢາກໃຫ້ເຂົາເປັນຢ່າງໃດ?

3. ມີວິທີທາງໃດແດ່ທີ່ສະແດງວ່າທ່ານນັບຖືພຣະເຈົ້າ ໃນເວລາທ່ານຢູ່ໃນສະຖານທີ່ນະມັສການ?

4. ທ່ານເຄີຍຄິດບໍ່ ທີ່ຄິດວ່າຕົວເອງເປັນແກະຮັບບາບ?

5. ມີບ່ອນໃດ ໃນຊີວິດຂອງທ່ານທີ່ເຫັນວ່າຍາກທີ່ສຸດທີ່ຈະຮັບເອົາການອະພັຍຈາກພຣະເຈົ້າ?

ສຈ. ບຸນໂຮມ ພົມມະຈັນ

# ບົດຮຽນທີ 3
## ຈົ່ງບໍຣິສຸດໃນທຸກໆຄວາມສັມພັນ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ລະບຽບພວກເລວີ 19:1-4, 9-18; 32-35

ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ລະບຽບພວກເລວີ 19

ຈຸດສໍາຄັນຂອງບົດຮຽນນີ້: ຄົນຂອງພຣະເຈົ້າຕ້ອງດໍາເນີນຊີວິດທີ່ບໍຣິສຸດ ໃນຄວາມສັມພັນ ທຸກກໍຣະນີ ແລະທຸກສະພາບແວດລ້ອມ.

ຄໍາຖາມເພື່ອສໍາຣວດ: ຂອບເຂດກວ້າງຂວາງໄປເຖິງໃສ ທີ່ພຣະເຈົ້າຊົງສັ່ງໃຫ້ບໍຣິສຸດ?

ຈຸດປະສົງຂອງບົດຮຽນ: ຈົ່ງຂຽນລົງວ່າ ຄົນຂອງພຣະເຈົ້າຄວນດໍາເນີນຊີວິດທີ່ບໍຣິສຸດຢ່າງໃດ ແລະການສະແດງອອກຂອງຄຣິສຕຽນທຸກວັນນີ້.

## ຄໍານໍາ

ເມື່ອຂ້າພະເຈົ້າຍັງນ້ອຍ, ຂ້າພະເຈົ້າຢູ່ນໍາພໍ່ຕູ້ແມ່ຕູ້, ເພິ່ນເປັນຄົນມັກລ້ຽງໄກ່. ເມື່ອເຖິງຍາມທີ່ໄກ່ເກີດໂຣກຕິດຕໍ່ຂຶ້ນມາ ພໍ່ຕູ້ຂອງຂ້າພະເຈົ້າກໍແຍກຕົວທີ່ເປັນໂຣກອອກມາໄວ້ຕ່າງຫາກ ເພື່ອຈະໄດ້ປິ່ນປົວ ແລະເພື່ອບໍ່ໃຫ້ເຊື້ອໂຣກລະບາດໄປຫາ ໄກ່ຕົວອື່ນໆອີກ.

ໃນພຣະຄັມພີ ລະບຽບພວກເລວີ ບົດ 17 ຫາ ບົດ 26 ແມ່ນສ່ວນໃຫຍ່ໄດ້ບອກເຖິງມາຕຖານຂອງຄວາມບໍຣິສຸດ. ລະບຽບພວກເລວີ 20:26 ໄດ້ກ່າວວ່າ: "ເຈົ້າຕ້ອງບໍຣິສຸດສໍາລັບເຮົາ ເພາະເຮົາຄືພຣະເຈົ້າບໍຣິສຸດ ແລະໄດ້ແຍກເຈົ້າອອກຈາກຊົນຊາດທັງຫລາຍ ເພື່ອເຈົ້າຈະເປັນຂອງເຮົາ." ລະບຽບພວກເລວີ 19:2 "ຈົ່ງກ່າວແກ່ຊົນຊາດອິສຣາເອນວ່າ ເຈົ້າທັງຫລາຍຕ້ອງບໍຣິສຸດ ເພາະເຮົາພຣະເຢໂຮວາ ພຣະເຈົ້າຂອງເຈົ້າເປັນຜູ້ບໍຣິສຸດ." ຂໍ້ຄວາມເຫລົ່ານີ້ ກໍແມ່ນແນວຄິດທີ່ຊ່ວຍໃຫ້ເຮົາຮູ້ວ່າ ພຣະເຈົ້າຂອງພວກເຮົາແມ່ນຜູ້ທີ່ບໍຣິສຸດ. ພຣະອົງໄດ້ຊົງແຍກຄົນຂອງພຣະອົງອອກຈາກຊົນຊາດທົ່ວໄປ. ການດໍາເນີນຊີວິດໃນຣີດຄອງວັທນະທັມ ໂປໂລໄດ້ຂຽນໄວ້ວ່າ: "ຢ່າຫລົງເລີຍ, ການຄົບຄົນຊົ່ວ ຍ່ອມພາໃຫ້ເສັຍນິດສັຍ." 1 ໂກຣິນໂທ 15:33

ການສຶກສາອາທິດນີ້ ໄດ້ໃຫ້ຄວາມໝາຍຂອງການດໍາເນີນຊີວິດຂອງຄົນຂອງພຣະເຈົ້າ ເພື່ອຈະໄດ້ຫລີກລ້ຽງການຜິດພາດໃນບາດກ້າວເດີນ ແລະ ຄວາມສັມພັນອັນດີ. ໃນເນື້ອໃນຂອງການສຶກສາທີ່ແທ້ຈິງ ຄືພຣະຄໍາຂອງພຣະເຢຊູ ທີ່ກ່າວໃນ ມາຣະໂກ 12:31 "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" ໃນພຣະຄັມພີເດີມ ກໍກ່າວໄວ້ເໝືອນກັນ ລະບຽບພວກເລວີ 19:18 "ແຕ່ເຈົ້າຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ"

ກ່ອນຈະຮຽນໃນບົດຮຽນນີ້, ໃຫ້ພວກເຮົາມາພິຈາຣະນາເບິ່ງຄວາມໝາຍຂອງພຣະຄັມພີກ່ຽວກັບຄໍາວ່າບໍຣິສຸດ. ເພື່ອຈະບໍຣິສຸດໄດ້ກໍຕໍ່ເມື່ອ ເຮົາຖືກແຍກອອກຈາກຝູງຊົນທັງຫລາຍ. ຈໍາໄດ້ວ່າຊີວິດຂອງຄົນໆນຶ່ງທີ່ຈະເຂົ້າມາຫາອົງພຣະເຢຊູ ເຂົາໄດ້ມອບກາຍ ຖວາຍການດໍາເນີນຊີວິດໃຫ້ແກ່ ພຣະເຢຊູ. ບາງທີ່ເຂົາກໍອາດກ່າວວ່າ ເຂົາບໍ່ສາມາດດໍາເນີນຊີວິດທີ່ບໍຣິສຸດໄດ້ດອກ ແຕ່ພຣະວິນຍານບໍຣິສຸດຈະທໍາງານໃນຕົວຂອງເຂົາເອງ. ການທໍາງານນັ້ນເອີ້ນວ່າ "ການແຍກຕົວອອກເພື່ອເຮັດໃຫ້ບໍຣິສຸດ." ຢ່າງໃດກໍຕາມ ຜູ້ທີ່ເຂົ້າມາຫາພຣະເຢຊູ ຜູ້ນັ້ນກໍພ້ອມແລ້ວທີ່ຈະແຍກອອກຈາກຄວາມມືດມາຫາຄວາມແຈ້ງສວ່າງ.

1. ຈົ່ງຕິດຕາມພຣະບັນຍັດ

ລະບຽບພວກເລວີ ບົດທີ 19 ໄດ້ຍ້ຳພຣະບັນຍັດຄືນຫລາຍເທື່ອ (ອົພຍົບ 20:2-17) ໂດຍສະເພາະແລ້ວ ແມ່ນໃນລະບຽບພວກເລວີ 19:3-4, 11-12, 16, 18, 29). ຂໍ້ສັງເກດ ວ່າຈະຕິດຕາມພຣະບັນຍັດຢ່າງໃດ ເພື່ອຈະຮັບເອົາຄວາມບໍຣິສຸດ.

ໂຄຣົບນັບຖືພໍ່ແມ່ແມ່ນການນຳເຂົ້າສູ່ການປະຕິບັດຄຳສັ່ງສອນ. ຕາມທີ່ຈິງແລ້ວ ຄຳວ່າ "ໂຄຣົບ ນັບຖື" ອາດແປໄດ້ເຖິງຄຳວ່າ "ຢຳເກງ" ບັນຍັດຂໍ້ທີ 5 ໄດ້ກ່າວເຖິງການປະຕິບັດຕໍ່ບິດາມານດາ. ເມື່ອເປັນດັ່ງນີ້ ເຮົາກໍເຫັນໄດ້ຢ່າງຈະແຈ້ງແລ້ວວ່າ ຖ້າເຮົາຫາກບໍ່ປະຕິບັດຕໍ່ຄົນໃນເຮືອນໄດ້ແລ້ວ ເຮົາຈະປະຕິບັດຄວາມ ເຊື່ອຕໍ່ຜູ້ອື່ນຢ່າງໃດ.

ບາດກ້າວຕໍ່ໄປ ໃນຫົວຂໍ້ນີ້ ແມ່ນຮຽກຮ້ອງຜູ້ທີ່ເຊື່ອທັງຫລາຍ ໃຫ້ຮັກສາວັນຊະບາໂຕ (ລະບຽບພວກເລວີ 19:3) ພຣະບັນຍັດຂໍ້ທີ 4 ໃນພຣະທັມອົພຍົບ 20:8-11, ການແນະນຳຢ່າງນີ້ເປັນຂອບຂ່າຍໃຫ້ແກ່ຊີວິດເຮົາ ແລະເຕືອນເຮົາວ່າ ຊີວິດເຮົາຍັງມີຄວາມສຳຄັນຢູ່ຫລາຍກວ່າທັມດາ. ຄຣິສຕຽນຄວນຄຳນຶງເຖິງບັນຍັດຂໍ້ນີ້ ແຕ່ກໍຍັງມີການຖົກຖຽງກັນຢູ່ ບາງພວກກໍຖືເອົາວັນເສົາ ແລະບາງພວກກໍຖືເອົາວັນອາທິດ.

ລະບຽບພວກເລວີ 19:4 ເປັນຄຳຕັກເຕືອນ ບໍ່ໃຫ້ນັບຖືຮູບໂຄຣົບ. ໄມ້ ແລະກ້ອນຫີນ, ຄຳແລະເງິນ, ທອງ ສຳຣິດແລະຮູບພາບທີ່ວາດເອົາ ແມ່ນສິ່ງທີ່ນັກຈິຕາອນຄິດແລະສ້າງຂຶ້ນມາ. ຫລາຍຄົນໄດ້ກົ້ມຫົວໃຫ້ກັບ ພຣະເຈົ້າປອມເຫລົ່ານີ້ ຊຶ່ງບໍ່ສາມາດໃຫ້ຄວາມຫວັງໄດ້ຈັກຢ່າງເລີຍ. ພວກເຂົາບໍ່ສາມາດຊ່ວຍຫຍັງໄດ້ເລີຍ ທາງດ້ານຈິດວິນຍານ.

ຄົນຂອງພຣະເຈົ້າທີ່ບໍຣິສຸດ ຈຳຕ້ອງຢຸດເຊົາໃນການລັກ, ການຕົວະ, ການສາບານບໍ່ຈິງ, ສໍ້ໂກງ, ຕົ້ມຕຸນຜູ້ ອື່ນ, ແລະການໃສ່ຮ້າຍປ້າຍສີຜູ້ອື່ນ (ລະບຽບພວກເລວີ 19:11-13) ຄົນສ່ວນຫລາຍບໍ່ໄດ້ດຳເນີນຕາມ ທາງທີ່ບໍຣິສຸດ ທັ້ງໆ ທີ່ເຂົາປະກາດວ່າເຂົາເປັນຄົນຂອງພຣະເຈົ້າແລ້ວ.

ເຮົາຈຳຕ້ອງຢຸດເຊົາທຸກກໍຣະນີ ໃນການທີ່ຈະເຮັດການຜິດກົດຫມາຍທຸກຢ່າງ ບໍ່ວ່າຈະເປັນການລ່ວງລະເມີດ ກົດຈະຣາຈອນ, ລ່ວງລະເມີດໃນການລັກລອບ ກ່າຍຫລືອັດພາພຍົນຕ່າງໆ, ເຮົາຕ້ອງຢູ່ເຫນືອກົດລະບຽບ ຂອງໂລກທຸກຢ່າງ.

ການຕົວະກໍເຊັ່ນດຽວກັນ ຜູ້ໃຫຍ່ພວກເຮົາມັກຕົວະເດັກນ້ອຍ ຖືວ່າເປັນຂອງທັມດາ. ຢ່າລືມວ່າການຕົວະກໍ ແມ່ນສິ່ງນຶ່ງທີ່ກີດກັ້ນພຣະພອນ. ຢາໂກໂບ 3:8 ຂຽນໄວ້ວ່າ: ບໍ່ມີຜູ້ໃດສາມາດຫ້າມລີ້ນໄດ້ ລີ້ນເປັນສິ່ງຊົ່ວ, ແລະເຕັມໄປດ້ວຍພິດຮ້າຍ. ເພື່ອຈະເປັນຜູ້ບໍຣິສຸດໄດ້ ຕ້ອງຫ້າມລີ້ນຕົນເອງ ການເວົ້າທຸກຢ່າງຕ້ອງໃຫ້ເປັນທີ່ ສັຣເສີນແກ່ພຣະເຈົ້າ.

2. ຈົ່ງສແວງຫາທາງທີ່ຈະສະແດງຄວາມຮັກຂອງພຣະເຈົ້າ

ຄວາມເລິກຊຶ້ງໃນການຖວາຍຕົວຂອງເຮົາໃຫ້ກັບພຣະເຢຊູ ແມ່ນການເປີດເຜີຍຄວາມສັມພັນແລ້ວ. ຂໍ້ຄວາມ

ຕອນນີ້ ໄດ້ເວົ້າເຖິງຫລາຍຢ່າງແຕກຕ່າງກັນກ່ຽວກັບຄວາມສັມພັນທີ່ບໍຣິສຸດ.

ຜູ້ທີ່ເຊື່ອຫລາຍຄົນຊາບດີເຖິງຄວາມເຈັບປວດແລະຄວາມຮູ້ສຶກຫຍຸ້ງຍາກກ່ຽວກັບພໍ່ແມ່ຂອງເຂົາເຈົ້າວ່າເພິ່ນໄດ້ຊຸບລ້ຽງພວກເຮົາມາຢ່າງໃດ, ແລະ ການຕອບບຸນແທນຄຸນນັ້ນຈະຄວນເຮັດຢ່າງໃດ. ເຮົາຄວນເຮັດທຸກຢ່າງເພື່ອໃຫ້ກຽດບິດາມານດາ. ດັ່ງດຽວກັນກັບພຣະຄຸນຂອງພຣະເຈົ້າ ພວກເຮົາຄວນເຮັດໃຫ້ຄົນອື່ນເຫັນພຣະຄຸນຂອງພຣະອົງໂດຍຜ່ານຕົວເຮົາ ໂດຍສະເພາະຢ່າງຍິ່ງແມ່ນໃນຄອບຄົວຂອງເຮົາເອງ ແລະໃນຄຣິສຕະຈັກຂອງພຣະເຈົ້າ. ຄົນສ່ວນຫລາຍມັກເຮັດສິ່ງທີ່ບໍ່ດີບໍ່ງາມໃຫ້ກັບຄົນທີ່ຕົນເອງຮັກ, ແລ້ວກໍຍັງປູກຝັງເມັດພືດແຫ່ງຄວາມຂົມຂື່ນ ໂດຍປາສຈາກການອະພັຍໂທດຊຶ່ງກັນແລະກັນ. ເມື່ອຄວາມຂົມຂື່ນຈະເຣີ່ມຂື້ນຄວາມກຽດຊັງກໍຈະເຣີ່ມຂື້ນນຳ. ພຣະຄັມພີໄດ້ກ່າວວ່າ: "ຢ່າກຽດຊັງພີ່ນ້ອງຂອງເຈົ້າຢູ່ໃນໃຈ ແຕ່ເຈົ້າຈົ່ງຕັກເຕືອນເພື່ອນບ້ານຂອງເຈົ້າເພື່ອເຈົ້າຈະບໍ່ຕ້ອງຮັບໂທດ." (19:17) ຄວາມກຽດຊັງຂອງພວກເຮົາແມ່ນການທຳລາຍຄວາມສັມພັນຕໍ່ຜູ້ອື່ນ.

ລະບຽບພວກເລວີ 19:9-10 ພຣະເຈົ້າໄດ້ຊົງມີກົດລະບຽບພິເສດກ່ຽວກັບການປະຕິບັດຕໍ່ຄົນທຸກຍາກ. ບໍ່ວ່າເຮົາຈະຢູ່ບ່ອນໃດ ພວກເຮົາກໍຈະເຫັນຄົນທຸກຍາກຢູ່ເລື້ອຍໆ. ພວກເຮົາອາດຈະກ່າວແກ່ພວກເຂົາວ່າພວກເຈົ້າບໍ່ຮູ້ຈັກການດຳເນີນຊີວິດ ພວກເຈົ້າບໍ່ມີລະບຽບໃນການທຳມາຫາກິນ. ຢ່າງໃດກໍຕາມ ໃຫ້ພວກເຮົາຈຳໄວ້ວ່າພຣະເຈົ້າຊົງໃຫ້ພວກເຮົາມີຄວາມຮັບຜິດຊອບຕໍ່ຄົນທີ່ຕ້ອງການໆຊ່ວຍເຫລືອອັນແທ້ຈິງ. ມີຫລາຍຄົນບໍ່ ທີ່ໄດ້ຮັບຜົນປໂຍດຈາກຄວາມເມດຕາກະຣຸນາຂອງທ່ານບໍ່? ຫລືທ່ານເຄີຍໄດ້ຮັບຄວາມເມດຕາກະຣຸນາຈາກຄົນອື່ນຫລືບໍ່? ຫລືວ່າຄຳຖາມທີ່ແທ້ຈິງຕໍ່ຄົນທີ່ຍາກຈົນ, ທີ່ເຮົາຄວນຈະຖາມນັ້ນກໍຄືວ່າ: ຂ້ອຍຈະສະແດງຄວາມຮັກຂອງພຣະເຢຊູຕໍ່ຄົນຜູ້ນີ້ຢ່າງໃດ?

ຄວາມຍຸດຕິທັມແລະຄວາມທ່ຽງທັມແມ່ນອຸປນິສັຍຂອງຊີວິດທີ່ບໍຣິສຸດ. ຄວາມຈິງຍ່ອມຈະເຫນືອກວ່າການຫລອກລວງຕົ້ມຕຸນ. (19:11) ຍິ່ງໄປກວ່ານັ້ນອີກ ຄວາມເວົ້າຂອງເຮົາກໍບໍ່ຄວນຈະໃຫ້ເກີນຄວາມຈິງ ຫລືຕື່ມໃສ່ຫລາຍໂພດ ຈົນເຮັດໃຫ້ບິດເບືອນຄວາມຈິງແລະກໍ່ໃຫ້ເກີດຄວາມເສັຽຫາຍແກ່ຜູ້ອື່ນ.

ບາງຄົນກໍສະແດງຄວາມຮັກຂອງພຣະເຈົ້າ ໂດຍການປະຕິບັດຕໍ່ຄົນງານຢ່າງກ້າເກັ່ງດີ. (19:13)ຄຣິສຕຽນບໍ່ຄວນຈະຈຳແນກເຊື້ອຊາດຫລືເພດວັຍ. ຮູ້ບໍ່ວ່າທຸກຄົນມີຄວາມສາມາດບໍ່ເຫມືອນກັນ ພວກເຮົາຄວນເຫັນພວກເສັຽອົງຄະດ້ວຍ ເຊັ່ນ: ຫູຫນວກ, ປາກກືກ, ຕາບອດເປັນຕົ້ນ.

ຈັດຕຽມການຊ່ວຍເຫລືອເພື່ອພວກທີ່ຖືວ່າມີໂອກາດນ້ອຍນັ້ນຕ້ອງໄດ້ສິ້ນເປືອງເວລາ, ສິ້ນເປືອງກຳລັງ ແລະສິ້ນເປືອງເງິນຄຳ. ແມ່ນແລ້ວການກະທຳເຊັ່ນນີ້ ແມ່ນເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ. ພຣະເຈົ້າຕ້ອງການໃຫ້ຄົນຂອງພຣະອົງຮູ້ຈັກການວັດແທກ ເພື່ອເຂົາຈະໄດ້ສະແດງຄວາມຊອບທັມຢ່າງເຕັມປ່ຽມ (19:15) ການປະຕິບັດຄວາມຊອບທັມບໍ່ແມ່ນເປັນຂອງຄົນບໍ່ເຕັມ (ຄົນເປັນໂຣກປະສາດ)

ທີ່ ຣົງກົງ ຄົນຫນຸ່ມສ່ວນຫລາຍຈະໃຫ້ກຽດຜູ້ເຖົ້າ ເມື່ອເຫັນຜູ້ເຖົ້າຂື້ນຣົດບັສຫລືຣົດໄຟ. ເຖິງແມ່ນວ່າພວກເຂົາຈະບໍ່ແມ່ນຄຣິສຕຽນກໍຕາມ ພວກເຂົາກໍຍັງນັບຖືຄົນແກ່. (19:32)

ຄົນເຮັບເຣີຮູ້ຈັກເຖິງຊີວິດທີ່ອາສັຍໃນດິນແດນຂອງຄົນອື່ນເປັນຢ່າງດີ. ພຣະເຢຊູໄດ້ໃຊ້ກົດບັນຍັດນີ້ເປັນຂໍ້ທີສອງ (19:34) ຈົ່ງຮັກເຂົາເຫມືອນຮັກຕົນເອງ; ມາຣະໂກ 12:28-31 "ຈົ່ງຮັກເພື່ອນບ້ານເຫມືອນຮັກ

ຕົນເອງ" ພຣະອົງກ່າວຄໍານີ້ກໍຫມາຍຄວາມວ່າພຣະອົງໄດ້ທໍາລາຍການຖືຊັ້ນວັນນະ, ການຖືເຊື້ອຊາດ, ການຖືເພດວັຍ ແລະການຖືຂນົບທັມນຽມ, ປະເພນີ.

ລະບຽບພວກເລວີ 19:35-36 ແມ່ນຂໍ້ເພີ້ມເຕີມ ສໍາລັບພວກນັກທຸຣະກິດການຄ້າ ຈົ່ງສັດຊື່ ແລະຮັກສາກົດເກນທັງສິ້ນ.

## 3. ຄໍາແນະນໍາສໍາລັບວັນນີ້

ຄົນຂອງພຣະເຈົ້າຕ້ອງແຕກຕ່າງຈາກຊາວໂລກ. ຄົນຂອງພຣະເຈົ້າມອບກາຍຖວາຍຊີວິດໃຫ້ພຣະເຢຊູ ແລະກະທໍາຕົວໃຫ້ເປັນເຫມືອນພຣະອົງ. ຂໍແຕ່ທ່ານມອບທຸກໆສະຖານະການໃຫ້ກັບພຣະອົງແລ້ວພຣະອົງຈະພາທ່ານໃຫ້ຊະນະການທົດລອງທຸກຢ່າງ, ແລ້ວທ່ານກໍຈະຈະເຣີນຂຶ້ນໃນຄວາມບໍຣິສຸດ.

ຄວາມບໍຣິສຸດຈະບໍ່ເກີດຂຶ້ນໃນການເວົ້າ, ການຖືປື້ມພຣະຄັມພີ. ຈົ່ງໃຫ້ພຣະຄັມຂອງພຣະອົງທໍາງານໃນຕົວເຮົາຫລາຍກວ່າການມີພຣະຄັມພີລ້າໆ. ຄວາມບໍຣິສຸດຂອງເຮົາຈະເຫັນໄດ້ກໍຕໍ່ເມື່ອຄໍາເວົ້າຄໍາຈາຂອງເຮົາຖືກປ່ຽນແປງໂດຍພຣະເຢຊູເທົ່ານັ້ນ.

<u>ຄໍາຖາມ:</u>

1. ທ່ານສາມາດໃຫ້ຕົວຢ່າງຄວາມບໍຣິສຸດໃນຕົວທ່ານໄດ້ບໍ່?

2. ເປັນຫຍັງຄົນທັງຫລາຍຈຶ່ງມັກຕົວະ?

3. ຖ້າພໍ່ແມ່ຫາກເຮັດໃຫ້ທ່ານເສັຍໃຈ, ທ່ານຈະສະແດງຄວາມໂຄຣົບນັບຖືເພິ່ນຢ່າງໃດ?

4. ທ່ານຈະມີຄວາມຮູ້ສຶກຢ່າງໃດ ກ່ຽວກັບການຊ່ວຍເຫລືອຄົນທີ່ມີຄວາມຕ້ອງການຢ່າງແທ້ຈິງ?

5. ຄຣິສຕະຈັກຂອງທ່ານໄດ້ມີໂຄງການອັນໃດແດ່ບໍ່ຕໍ່ຄົນເສັຍອົງຄະ? (ຫູຫນວກ, ຕາບອດ, ປາກກືກ)

6. ເມື່ອທ່ານໄດ້ສຶກສາ ລະບຽບພວກເລວີ ບົດທີ 19 ແລ້ວ ສິ່ງນຶ່ງທີ່ທ່ານຄວນຈະປ່ຽນນັ້ນຄືຫຍັງ?

ສຈ. ບຸນໂຮມ ພົມມະຈັນ

# <u>ບົດຮຽນທີ 4</u>
# ຢູ່ຢ່າງໜ້າໂຄຣົບນັບຖື

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ລະບຽບພວກເລວີ 23:1-38
<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u> ລະບຽບພວກເລວີ 23
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ຄົນຂອງພຣະເຈົ້າ ຕ້ອງເປັນຜູ້ມີລະບຽບວິນັຍປະຈໍາອາທິດ ແລະຕາມລະດູການໃນຊີວິດຂອງເຂົາ ເພື່ອເພີ້ມພູນຄຸນຄ່າໃນຄວາມສັມພັນກັບພຣະເຈົ້າ ແລະເພື່ອນມະນຸດດ້ວຍກັນ.
<u>ຄໍາຖາມເພື່ອສໍາຣວດ</u>: ຖ້າພວກເຮົາຫາກຮູ້ວ່າເວລາເປັນສິ່ງທີ່ສັກສິດ, ທ່ານຈະດໍາເນີນຊີວິດຢ່າງໃດ?
<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະໃຫ້ເຫັນຫລັກການຂອງການສເລີມສລອງຄົນເຮັບເຣີ ແລະ ສະແດງລະບຽບວິນັຍການເພີ້ມພູນ.

## <u>ຄໍານໍາ</u>

"ເຈົ້າທັງຫລາຍຕ້ອງບໍຣິສຸດ ເພາະພຣະເຢໂຮວາພຣະເຈົ້າເປັນຜູ້ບໍຣິສຸດ" ດັ່ງຄໍາສັ່ງຂອງພຣະເຈົ້າກ່າວໃນລະບຽບພວກເລວີ 19:2. ມາຕຖານຂອງຄວາມບໍຣິສຸດໄດ້ບັນທຶກໄວ້ ໃນລະບຽບພວກເລວີ ບົດທີ 17-26, ພວກເຮົາຈະເຫັນໄດ້ວ່າຄົນເຮັບເຣີ ພະຍາຍາມ ປ້ອງກັນຄອບຄົວໃຫ້ຫລີກລຽງຈາກການກະທໍາຂອງພວກນອກຮີດທີ່ຢູ່ອ້ອມຂ້າງພວກເຂົາ. ແລະກໍຍັງຫລີກລ້ຽງເພື່ອຮັກສາຄຸນນະພາບຂອງຜູ້ນໍາ. ສິ່ງສໍາຄັນອີກຢ່າງນຶ່ງໃນການຮັກສາມາຕຖານຂອງຄວາມບໍຣິສຸດກໍຄືການຮັກສາພິທີການຕ່າງໆ ເພື່ອຈະໄດ້ລະນຶກເຖິງຄວາມບໍຣິສຸດຂອງພຣະເຈົ້າ.

ແທນທີ່ຈະອ່ານລາຍລະອຽດຈາກຄໍາແນະນໍາ ໃນພິທີເທສການເຫມືອນດັ່ງຄົນເຮັບເຣີກະທໍາເທົ່ານັ້ນ, ພວກເຮົາຍັງໄດ້ຈົດຈໍາວ່າພຣະເຈົ້າຊົງກະທໍາຢ່າງໃດໃນຊີວິດຂອງພວກເຮົາອີກ. ຫລືວ່າພວກເຮົາຈະບໍ່ຄິດເຖິງກົດລະບຽບຈົດຈໍາຫຍັງເລີຍບໍ?

ການສຶກສາໃນວັນນີ້ ຈະຊ່ວຍໃຫ້ພວກເຮົາເຂົ້າໃຈພິທີເທສການທາງສາສນາ ທີ່ຊ່ວຍເຮັດໃຫ້ຊາວເຮັບເຣີມີຊີວິດທີ່ມີຄວາມກມາຍແລະມີເປົ້າໝາຍ. ການຈົດຈໍາຕ່າງໆຍັງຈະຊ່ວຍໃຫ້ພວກເຮົາ ດໍາລົງຊີວິດທີ່ມີລະບຽບແລະຍັງເຮັດໃຫ້ຄວາມສັມພັນກັບພຣະເຈົ້າດີຂຶ້ນ.

1. <u>ຈົ່ງຄິດເຖິງພຣະເຈົ້າແຕ່ລະອາທິດ</u> (23:1-3)

ຄົນເຮັບເຣີສມັຍເກົ່າ ເລີ້ມວັນສະບາໂຕວັນສຸກຕອນແລງ. ພວກເຂົາຢຸດງານເພື່ອເຂົາຈະໄດ້ໃສ່ໃຈຝ່າຍຈິດວິນຍານໃຫ້ຫລາຍຂຶ້ນ. ໃຈກາງຂອງວັນຊະບາໂຕແທ້ນັ້ນແມ່ນເພື່ອກໍ່ຕັ້ງຂອບເຂດແລະເວລາທໍາ. ໃນການຢຸດງານນັ້ນຄົນເຮັບເຣີ ກ່າວວ່າ ຊີວິດທີ່ດີງນັ້ນແມ່ນຢູ່ເຫນືອວຽກງານ. ຄໍາສັ່ງໃຫ້ຮັກສາວັນສະບາໂຕໄດ້ມີມາເຫິງນານ ໃນພຣະບັນຍັດ 10 ປະການ. ອົພຍົບ 20:8-11 ຄວາມດົນນານນັ້ນແມ່ນເຮັດໃຫ້ພວກເຮົາເຫັນຄວາມສໍາຄັນຫລາຍຂຶ້ນ. ພຣະເຈົ້າມີພຣະປະສົງຢາກໃຫ້ຄົນຂອງພຣະອົງໄດ້ພັກຜ່ອນ. ເວລາກະທໍາການງານມາເປັນເວລານານເຖິງ 6 ວັນ ພຣະອົງກໍຕ້ອງການໃຫ້ມີວັນສໍາລັບພຣະອົງ. ວັນຊະບາໂຕແມ່ນ

ວັນສໍາລັບພຣະອົງ. ລະບຽບພວກເລວີ 23:3

ຖ້າຢ່າງນັ້ນ ວັນອາທິດທີ່ມີການປະຊຸມເຖົ້າແກ່, ມີການເຄື່ອນໄຫວຕ່າງໆໃນໂບດຈະເປັນຢ່າງໃດ? ພຣະອົງບໍ່ໄດ້ຈໍາກັດເວລາແຕ່ຢ່າງໃດ ແຕ່ພຣະອົງຢາກໃຫ້ພວກເຮົາທັງຫລາຍຮູ້ວ່າຈະນັມສການພຣະເຈົ້າຢ່າງໃດ?

ເວົ້າຢ່າງກົງໄປກົງມາ, ວັນອາທິດທ່ານຈະເຮັດຢ່າງໃດກໍໄດ້ ແຕ່ວ່າສິ່ງນັ້ນແມ່ນຖວາຍກຽດໃຫ້ກັບພຣະເຈົ້າ ຫລືບໍ່?

## ຂ. <u>ຈົ່ງລະນຶກເຖິງພຣະເຈົ້າ ຕາມລະດູການຂອງຊີວິດ</u>

ບແລກແບຣີ ສາມາດເຫັນໄດ້ທີ່ດາລັດ ລັດເທັກຊັສ ຍາມລະດູບານໃຫມ່. ຫມາກໂມຫວານມັກຈະເຫັນວາງຢູ່ເທິງໂຕະ ໃນຍາມສເລີມສລອງວັນເອກຣາດ. ພິດຜັນສີຂຽວ ຈະເຫັນຢູ່ຮ້ານອາຫານຈີນ ທີ່ຮົງກົງ ໃນລະດູຫນາວ. ອາຫານແຕ່ລະຊະນິດແມ່ນບົ່ງບອກເຖິງລະດູການຕ່າງໆ ຂອງມັນ.

### ເທສການປັສຄາ ແລະເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ 23:4-14

ປັສຄາຂອງອົງພຣະຜູ້ເປັນເຈົ້າຈະຕ້ອງຖວາຍໃນເວລາຕອນແລງຂອງວັນທີ ສິບສີ່ຂອງເດືອນທີນຶ່ງ. ເປັນການສລອງລະນຶກເຖິງການອອກມາຈາກອີຢິບ. (ພຣະບັນຍັດສອງ 16:1-7) ໂດຍສະເພາະແມ່ນການຊ່ວຍໃຫ້ລອດພົ້ນຈາກຄວາມຕາຍ.

ການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ, ປະຊາຊົນມີທັມນຽມໃນການໃຊ້ແປ້ງເຂົ້າຈີ່ເກົ່າເປັນເຊື້ອເພື່ອເຮັດເຂົ້າຈີ່ໃຫມ່. ພຣະບັນຊາຂອງພຣະເຈົ້າທີ່ຫ້າມໃສ່ເຊື້ອໃນເຂົ້າຈີ່ອາດຈະຕີຄວາມໄດ້ວ່າ ເປັນຄໍາສັ່ງໃຫ້ແຍກຕົວອອກ "ເຂົ້າຈີ່ເກົ່າ" ຫລືຊີວິດເກົ່າໃນອີຢິບແລະເລີ້ມຕົ້ນໃຫມ່ທີ່ຂຶ້ນຢູ່ກັບພຣະອົງ.

ການສເລີມສລອງທັງຫມົດມີຢູ່ 8 ວັນ ສລອງປັສຄາກິນເຂົ້າຈີ່ບໍ່ມີເຊື້ອ, ແລະ ເທສການຜົນແລກຂອງເຂົ້າບາເລ່

### ເທສການສັປດາ 23:15-22

ເທສການສັປດາ ເປັນທີ່ຮູ້ຈັກກັນດີໃນສມັຍພຣະຄັມພີໃຫມ່ (ກິຈການ 2:1) ຊຶ່ງເປັນຄໍາມາຈາກພາສາກຣີກຊຶ່ງຫມາຍເຖິງ "50" ແລະງານລ້ຽງຈະສລອງ 7 ສັປດາ ກັບອີກ 1 ວັນ (50 ວັນ) 23:15-17 ສ່ວນສໍາຄັນທີ່ສຸດຂອງການຍື່ນຖວາຍບູຊາເຂົ້າໃຫມ່ແດ່ພຣະເຈົ້າ ຄືການນໍາເຂົ້າຈີ່ສອງກ້ອນທີ່ທໍາດ້ວຍແປ້ງຫມັກເຊື້ອ ມາທໍາພິທີຍື່ນຖວາຍເປັນຜົນລຸ້ນແລກແດ່ພຣະເຈົ້າ. ນີ້ເປັນພຽງຄັ້ງດຽວໃນ ຮອບປີ.

23:18-20 ການຖວາຍບູຊາໃນງານລ້ຽງນີ້ ຕ້ອງໄດ້ກະທໍາລະອຽດລະອໍກວ່າພິທີຖວາຍບູຊາໃນເທສການກິນເຂົ້າຈີ່ບໍ່ມີເຊື້ອ. ເພາະການຖວາຍນີ້ປະກອບດ້ວຍການຖວາຍລູກແກະຜູ້ເຈັດຕົວ ງົວຫນຸ່ມນຶ່ງຕົວ ແລະແກະຜູ້ສອງຕົວ ພ້ອມກັບເຄື່ອງບູຊາຈໍານວນນຶ່ງ ແລະເຄື່ອງດື່ມບູຊາ ເປັນເຄື່ອງເຜົາບູຊາ ແລະມີການຖວາຍແກະຕົວນຶ່ງເພື່ອເປັນການໄຖ່ບາບ.
ຂໍ້ 21 ງານລ້ຽງສລອງນີ້ຖືເປັນວັນຊຸມນຸມບໍຣິສຸດ ແລະຫ້າມການປະກອບການງານອາຊີບໃດໆ.

ຂໍ້ 22 ເປັນຄຳເຕືອນໃຫ້ປະສ່ວນເກັບກ່ຽວທີ່ຕົກເຫຼືອໄວ້ສຳລັບຄົນຍາກຈົນ.

ເທສການສຽງແກ ແລະວັນລົບລ້າງມົນທິນບາບ ລະບຽບພວກເລວີ 23:23-32
ຂໍ້ 23: 23-25 ແກເງິນ ຈະເປົ່າຂຶ້ນໃນວັນແລກຂອງທຸກໆເດືອນ. ແຕ່ສຽງແກໃນວັນແລກຂອງເດືອນທີ 7 ນັ້ນເປັນເຄື່ອງເຕືອນຄວາມຈຳເປັນພິເສດ ໃຫ້ຮູ້ວ່າໃກ້ວັນລົບລ້າງມົນທິນບາບແລ້ວ. ເທສການສຽງແກເປັນວັນພັກ ມີການປະຊຸມບໍຣິສຸດ ແລະບໍ່ມີການປະກອບອາຊີບໃດໆ ໃນວັນນັ້ນ ແລະມີການຖວາຍບູຊາເປັນພິເສດແດ່ອົງພຣະຜູ້ເປັນເຈົ້າ.

23:26-28 ວັນລົບມົນທິນບາບເປັນວັນທີ 10 ຂອງເດືອນທີ 7 ລາຍລະອຽດໄດ້ກ່າວໄວ້ແລ້ວໃນ ລະບຽບພວກເລວີ 16:1-28 ຈຸດເນັ້ນໜັກໃນລະບຽບພວກເລວີ ບົດທີ 23 ຄືຄົນອິສຣາເອນທັມດາຈະຮັກສາວັນນີ້ຢ່າງໃດ.

23::29-31 ຄວາມໝາຍຂອງຄຳວ່າ "ບັງຄັບໃຈຕົນເອງ" ຄົງຈະລວມໄປເຖິງການອົດອາຫານແລະການສະແດງຄວາມຮູ້ສຶກ ສຳນຶກຜິດອື່ນໆ

23:32 ສ່ວນສຳຄັນຂອງວັນນີ້ຄືກົດເກນຖາວອນ (ຂໍ້ 21) ໄດ້ຖືກກ່າວຢໍ້າອີກ ແລະຢໍ້າເຣື່ອງການຮັກສາວັນສະບາໂຕໃຫ້ເປັນວັນພັກຜ່ອນດ້ວຍ. ວັນສະບາໂຕເປັນໄລຍະເວລາທີ່ບໍ່ມີການທຳງານ ໃຫ້ເປັນວັນພັກຜ່ອນຢ່າງແທ້ຈິງ.

23:33-43 ເທສການບູຊາໄຟ ແມ່ນເທສການງານລ້ຽງສລອງໂມທະນາພຣະຄຸນ. ຜົນຈາກຕົ້ນໄມ້, ຕົ້ນໄມ້ທີ່ມີໃບ, ງ່າໄມ້ ກໍໄດ້ນຳມາດັງໄຟເພື່ອໃຫ້ເຫັນຮຸ່ງຕລອດທັງ 7 ວັນ ເພື່ອເປັນການລະນຶກເຖິງເຕັ້ນທີ່ພວກເຂົາເຄີຍໃຊ້ອາສັຍຢູ່ເມື່ອອົພຍົບມາຈາກອີຢິບ. ຄວາມສຳຄັນຂອງການສເລີມສລອງນີ້ ມີປາກົດຢູ່ໃນປະໂຍກທີ່ວ່າ "ນີ້ເປັນກົດເກນຖາວອນຕລອດຊົ່ວຊາດພັນ" ອົງພຣະຜູ້ເປັນເຈົ້າຕັດວ່າ "ເຮົາຄືພຣະເຢໂຮວາ ພຣະເຈົ້າຂອງເຈົ້າ" ເປັນການສລູບຕອນນີ້ ຂອງງານຂອງເດືອນເຈັດ.

## 3. <u>ຜົນສະທ້ອນໃນວົງຮູບພາບອັນໃຫຍ່</u>

ພຣະເຈົ້າວາງແບບແຜນກົດໝາຍ ເພື່ອກວມລວມ ເຖິງ ສິ່ງໃດ, ເວລາໃດ, ຢູ່ໃສ, ແລະຢ່າງໃດ ຂອງເທດການ. ພຣະເຈົ້າເຫັນການຊ່ວຍເຫລືອມະນຸດວ່າເປັນສິ່ງທີ່ມີຄວາມໝາຍໃນຊີວິດ. ພຣະອົງຕ້ອງການໃຫ້ມະນຸດທັງຫລາຍແບ່ງປັນເອົາຊີວິດຈາກພຣະອົງ ແລ້ວກໍຊົມຊື່ນຍິນດີກັບຜູ້ອື່ນອີກ. ພຣະເຈົ້າຊົງສ້າງພວກເຮົາແລະພຣະອົງຮູ້ຈັກພວກເຮົາ ວ່າພວກເຮົາດຶງດູດແລະວິວັທນາການໃນຊີວິດໄວຫລາຍສ່ຳໃດ. ດັ່ງນັ້ນພຣະເຈົ້າຈຶ່ງຕັ້ງໃຈໄວ້ໃນແຕ່ລະອາທິດ ເພື່ອຈະໃຫ້ພວກເຮົາໄດ້ຄິດອອກຄິດເຂົ້າ, ແລະຟັງສຽງຂອງພຣະອົງຕາມຄວາມຮຽກຮ້ອງຕ້ອງການຂອງຈິດວິນຍານ.

ພຣະເຈົ້າຊົງຊາບວ່າ ພວກເຮົາຕ້ອງການຫລາຍກວ່າອາທິດລະຄັ້ງ ເພື່ອຟື້ນຈິດວິນຍານ. ພຣະເຈົ້າຊົງຈັດຕຽມໃຫ້ພວກເຮົາໄດ້ພັກຜ່ອນ ແລະພິຈາຣະນາເຖິງການຈັດຕຽມແລະພຣະພອນຂອງພຣະອົງ. ແມ່ນຢູ່, ພຣະເຈົ້າຊົງຕ້ອງການການຖວາຍ ແຕ່ພຣະອົງກໍຍັງຕ້ອງການໃຫ້ພວກເຮົາໄດ້ມີເວລາພັກຜ່ອນ. ພຣະເຈົ້າຮຽກເອີ້ນໃຫ້ພວກເຮົາເຂົ້າມານະມັສການກໍເພື່ອໃຫ້ກຽດ ສະແດງການຮູ້ບຸນຄຸນ. ພຣະເຈົ້າຊົງຮູ້ຈັກຢູ່ວ່າພວກເຮົາຈະເດີນຢູ່ໃນໂລກນີ້ບໍ່ນານ ແຕ່ພຣະອົງກໍຢາກໃຫ້ພວກເຮົາຊົມຊື່ນ ໃຊ້ເວລາໃຫ້ເຕັມປ່ຽມ.

ໃຊ້ເວລາຈັກໜ້ອຍນຶ່ງເພື່ອທວນຄືນຊີວິດຂອງຕົນເອງ. ພິຈາຣະນາວ່າເຮົາເກັບກຳຊີວິດແຕ່ລະວັນຢ່າງໃດ. ທ່ານພົບພົນທາງເພື່ອຈະຕິດຕໍ່ພົວພັນກັບພຣະເຈົ້າແລ້ວບໍ່? ທ່ານໄດ້ຕັ້ງເວລາເພື່ອພັກຜ່ອນແລະນະມັສການພຣະເຈົ້າທຸກອາທິດບໍ່?

ພິຈາຣະນາເປັນປີ. ທ່ານໃຊ້ວັນຢຸດພັກຖວາຍກຽດແກ່ພຣະເຈົ້າຫລືບໍ່, ພິຈາຣະນາວ່າພຣະເຈົ້າໄດ້ເຮັດຫຍັງແດ່ຕໍ່ຊີວິດຂອງທ່ານ, ເຮັດໃຫ້ທ່ານເຂັ້ມແຂງຂຶ້ນບໍ່? ຫລືທ່ານໄດ້ພັກຜ່ອນບໍ່?

<u>ຄຳຖາມ</u>

1. ທ່ານຈະຈັດເວລາຢ່າງໃດເພື່ອຈະພັກຜ່ອນ ແລະ ຮັກສາວັນສະບາໂຕນຳ?

2. ຈະຜ່ານການທຳງານຢ່າງໃດ ເມື່ອທ່ານຫາກຕ້ອງການກວດສອບວ່າພຣະເຈົ້າສອນທ່ານຢ່າງໃດ?

3. ພິຈາຣະນາໃນວັນພັກ, ຄິດຫາວັນເປັນລຳດັບ ທ່ານຄວນຈະໃຫ້ກຽດພຣະເຈົ້າຢ່າງໃດ? (ອິສເຕີ້, ຂອບຄຸນພຣະເຈົ້າ, ຄຣິສມາດ, .........) ທ່ານເຫັນພຣະພອນອັນໃດແດ່ບໍ່?

4. ວັນພັກໃນພຣະຄັມພີເດີມອັນໃດ ທີ່ນຳມາໃຊ້ໃນພຣະຄັມພີໃຫມ່?

5. ທ່ານຈະເສັຍຫາຍຫຍັງແດ່ຖ້າທ່ານຫາກມອດ ທີວີ ຊົ່ວໂລຍະນຶ່ງ ແລ້ວມານັບພຣະພອນທີ່ພຣະເຈົ້າຊົງອວຍພອນໃຫ້ໃນວັນຢຸດຕ່າງໆ.

ສຈ. ບຸນໂຮມ ພິມມະຈັນ

## ບົດຮຽນທີ 5
## ທຸກຢ່າງເປັນຂອງພຣະເຈົ້າ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ລະບຽບພວກເລວີ 25:1-17, 23-24, 35-43

ຂໍ້ພຣະຄັມພີທັງຫມົດສໍາລັບບົດຮຽນນີ້: ລະບຽບພວກເລວີ 25

ຈຸດສໍາຄັນຂອງບົດຮຽນນີ້: ພຣະເຈົ້າຊົງເປັນເຈົ້າຂອງແຜ່ນດິນພຣະອົງສັ່ງໃຫ້ເບິ່ງແຍງຄົນຫລາຍກວ່າຫ່ວງນໍາຂີ້ດິນ

ຄໍາຖາມເພື່ອການສໍາຣວດ: ທ່ານຄິດວ່າໃຜເປັນເຈົ້າຂອງຕາດິນຂອງທ່ານ?

ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍເຣື່ອງດິນດອນຕອນຫຍ້າຂອງເຮົາ.

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ບົດນໍາ

ໄພ່ພົນຂອງອົງພຣະຜູ້ເປັນເຈົ້າອາດເປັນເຈົ້າຂອງດິນດອນຕອນຫຍ້າຫລາຍບ່ອນຫລືຖືກລ້ອມດ້ວຍຊັບສິນຕ່າງໆ ຣວມທັງມູນອັນລໍ້າຄ່າຈາກພໍ່ແມ່ຂອງຕົນ, ໃນພຣະທັມທີ່ຈະເວົ້າກັນວັນນີ້ຈະສອນໃຫ້ເຮົາຮູ້ວ່າ ຊັບສິນດັ່ງກ່າວນັ້ນບໍ່ແມ່ນຂອງເຮົາ ແຕ່ແມ່ນຂອງອົງພຣະຜູ້ເປັນເຈົ້າ ເພາະວ່າພຣະເຈົ້າໄດ້ສ້າງແຜ່ນດິນນີ້ໄວ້ກ່ອນເຮົາທັງຫລາຍເກີດມາໃນໂລກນີ້ແລ້ວ. ນອກນັ້ນພຣະອົງຍັງຊົງສອນໃຫ້ເຮົາຫ່ວງໃຍຕໍ່ຄົນຍາກຈົນຂາດທີ່ເພິ່ງພາອາສັຍ ໃຫ້ມີບ່ອນຢູ່ບ່ອນກິນອີກ.(ຂໍ້ພຣະຄັມພີໃນບົດຮຽນນີ້ແມ່ນກ່າຍອອກມາຈາກພຣະຄັມພີສີຂຽວ )

### 1. ພຣະເຈົ້າຊົງໂຜດປະທານ 25:1-17

ໃນພຣະທັມກົດລະບຽບຂອງພວກເລວີບົດ 25 ລົງທ້າຍບອກວ່າ ອິສຣາເອນເປັນທາດຂອງອົງພຣະຜູ້ເປັນເຈົ້າເທົ່ານັ້ນບໍ່ແມ່ນທາດຂອງຜູ້ໃດຫລືຊາດອື່ນໃດທັງຫມົດ. "ດ້ວຍວ່າປະຊາຊົນອິສຣາເອນນັ້ນເປັນທາດຂອງພຣະຜູ້ເປັນເຈົ້າ ພຣະອົງໄດ້ນໍາພວກເຂົາອອກມາຈາກເອຢິບ; ພຣະອົງແມ່ນພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງເຂົາ" (ຂໍ້ 55). ພຣະທັມຄັມພີຕອນນີ້ເລິກເກີນກວ່າຈະຂຸດເຖິງຮາກ. ພຣະເຈົ້າວາງລະບຽບການທໍາມາຫາກິນຂອງອິສຣາເອນກ່ອນຫນ້າເຂົ້າໄປຢູ່ແຜ່ນດິນພັນທະສັນຍາ "ເມື່ອພວກເຈົ້າເຂົ້າໄປໃນດິນແດນທີ່ພຣະຜູ້ເປັນເຈົ້າພວມມອບໃຫ້ ພວກເຈົ້າຈະຕ້ອງຍົກຍໍໃຫ້ກຽດພຣະຜູ້ເປັນເຈົ້າ ໂດຍທຸກເຈັດປີໃດບໍ່ຕ້ອງຂຸດຄົ້ນທີ່ດິນປູກຝັງ ພວກເຈົ້າຈະຂຸດຄົ້ນໄຮ່ນາ, ເລັ້ມສວນ ອະງຸ່ນ, ແລະຮິບໂຮມຜົນປູກໄວ້ສໍາລັບທຸກປີ ແຕ່ໃນປີທີ່ເຈັດແມ່ນປີທີ່ໃຫ້ດິນທັງຫມົດພັກຜ່ອນ ໂດຍອຸທິດຖວາຍປີນີ້ ແກ່ພຣະຜູ້ເປັນເຈົ້າ ຢ່າປູກຝັງໄຮ່ນາຫລືຕັດເລັ້ມສວນອະງຸ່ນຢ່າເກັບກ່ຽວພືດຜົນທີ່ງອກຂື້ນມາເອງ ແລະຢ່າໄດ້ເກັບພົ້ວຫມາກອະງຸ່ນ

ທີ່ພວກເຈົ້າບໍ່ໄດ້ຕັດຕອນຕົ້ນຂອງມັນ ຈົ່ງປ່ອຍທີ່ດິນໃຫ້ເປັນປີນາຟາງ (ຂໍ້ 2-5). ຄຳສັ່ງຂອງພຣະເຈົ້າ ຕໍ່ອິສາເອນຄື; 1. ຍົກຍໍພຣະກຽດພຣະເຈົ້າໂດຍທຸກ 7 ປີ ບໍ່ໃຫ້ຂຸດຄົ້ນທີ່ດິນເພື່ອທຳມາຫາກິນ. 2. ໃຫ້ຮີບໂຮມອາ ຫານການກິນໄວ້ພາຍໃນ 6 ປີ ໃຫ້ມີອາຫານການກິນພຽງພໍສຳລັບປີທີເຈັດ.

ເຮົາອາດຖາມກັນວ່າອິສຣາເອນຈະມີອາຫານການກິນພຽງພໍບໍ່ຖ້າບໍ່ໄດ້ເຮັດໄຮ່ໄຖນາທັງປີ, ຈົ່ງຈຳໄວ້ວ່າແຜ່ນດິນທີ່ພຣະເຈົ້າພວມຈະມອບໃຫ້ນັ້ນເປັນແຜ່ນດິນທີ່ອຸດົມສົມບູນ ຍິ່ງໄປກວ່ານັ້ນຫາກປະຊາຊົນຂອງພຣະເຈົ້າປະຕິບັດຕາມຄຳສັ່ງຂອງພຣະເຈົ້າເພິ່ນກໍຈະອວຍພອນໃຫ້ອິສຣາເອນມີອາຫານການກິນພຽງພໍສຳລັບຄອບຄົວ ຕລອດເຖິງພວກຂ້າທາດ, ພວກລູກຈ້າງທຸກຄົນ ພ້ອມທັງບັນດາຄົນຕ່າງດ້າວກໍຈະມີກິນບໍ່ຂາດເຂີນເລີຍ ແມ່ນແຕ່ພວກສັດບ້ານ, ສັດປ່າກໍຈະມີອາຫານການກິນດ້ວຍ. ພຣະເຈົ້າຊົງສັນຍາວ່າ "ໃນປີນັ້ນແມ່ນວ່າດິນດອນບ່ອນເຮັດຢູ່ເຮັດກິນບໍ່ໄດ້ປູກຝັງກໍຕາມກໍຍັງຈະນຳອາຫານພໍສຳລັບພວກເຈົ້າ, ບັນດາທາດ, ແລະບັນດາລູກຈ້າງຂອງພວກເຈົ້າ, ຊາວຕ່າງດ້າວທີ່ອາສັຍຢູ່ນຳພວກເຈົ້າ, ແລະສັດປ່າທີ່ອາສັຍຢູ່ຕາມທົ່ງນາ, ທຸກໆ ສິ່ງທີ່ເກີດຂຶ້ນໃນດິນດອນຕອນນັ້ນພວກເຈົ້າກິນໄດ້ (ຂໍ້ 6-7). ຫາກເຮົາເບິ່ງເລິກໄປອີກເຮົາຈະເຫັນວ່າພຣະເຈົ້າຕ້ອງການໃຫ້ປະຊາຊົນຂອງພຣະອົງພັກຜ່ອນຈາກງານໜັກໃນຣະຍະ 6 ປີ ແລະປີທີ 7 ນັ້ນພຣະເຈົ້າຊົງໃຫ້ປະຊາຊົນຂອງພຣະອົງເຊົາເມື່ອຍຈາກການງານ, ແມ່ນແຕ່ຂີ້ດິນພຣະເຈົ້າ ກໍຕ້ອງການໃຫ້ພັກຜ່ອນ ດ້ວຍວ່າພຣະອົງຊົງພັກຜ່ອນໃນວັນຖ້ວນ 7 ໃນສມັຍພຣະອົງຊົງສ້າງໂລກ.

ຂ້າງເທິງນັ້ນເຮົາເຫັນວ່າພຣະເຈົ້າຊົງສັ່ງໃຫ້ອິສຣາເອນພັກຈາກວຽກງານໃນປີທີ 7 ທັງປີ, ຫລັງຈາກປະຕິບັດກັນມາເຖິງ 7 ຄັ້ງແລ້ວ ປີຕໍ່ໄປເປັນປີ 50 ທີ່ອິສຣາເອນເຂົ້າໄປຢູ່ໃນແຜ່ນດິນອັນອຸດົມສົມບູນ. ພຣະເຈົ້າຊົງສັ່ງວ່າ "ໃນມື້ທີສິບຂອງເດືອນເຈັດແມ່ນມື້ລ້າງບາບ ຈົ່ງໃຊ້ຄົນເປົ່າແກປ່າວເຕືອນໄປທົ່ວປະເທດ ໃນທຳນອງນີ້ ພວກເຈົ້າຈະຕັ້ງປີທີຫ້າສິບໄວ້ຕ່າງຫາກ ແລະປະກາດອິດສະລະພາບໃຫ້ປະຊາຊົນທຸກທົ່ວໜ້າ ປີນີ້ຊັບສົມບັດທັງໝົດທີ່ໄດ້ຂາຍໄປນັ້ນ ຈະຕ້ອງສົ່ງຄືນໃຫ້ເຈົ້າຂອງເດີມ ຫລືເຊື້ອສາຍຂອງລາວ; ແລະຖ້າຜູ້ໃດຜູ້ນຶ່ງຖືກຂື້ນມາເປັນທາດ ຈະຕ້ອງສົ່ງຄືນໃຫ້ຄອບຄົວຂອງລາວ" (ຂໍ້ 9-10). ໃນປີນີ້ຊັບສົມບັດທັງໝົດທີ່ຂາຍໄປນັ້ນຈະຕ້ອງສົ່ງຄືນໃຫ້ເຈົ້າຂອງເດີມ ສະນັ້ນເມື່ອພວກເຈົ້າຂາຍທີ່ດິນໃຫ້ຄົນອິສຣາເອນ ພີ່ນ້ອງຮ່ວມຊາດຂອງພວກເຈົ້າຫລືຊື້ດິນຈາກລາວກໍດີ ຢ່າໄດ້ຊື້ຂາຍກັນໂດຍບໍ່ຍຸດຕິທຳ ສ່ວນລາຄານັ້ນໃຫ້ໄລ່ເອົາຕາມຈຳນວນປີ ເຊິ່ງທີ່ດິນຜະລິດຜົລປູກໄດ້ ກ່ອນຈະເຖິງຄົບຮອບຫ້າສິບປີ ຖ້າມີຫລາຍປີຕ້ອງຕື່ມລາຄາຂຶ້ນ ແຕ່ຖ້າມີນ້ອຍປີກໍຕ້ອງຫລຸດລາຄາລົງ; ເພາະສິ່ງທີ່ຖືກຂາຍໄປນັ້ນແມ່ນຈຳນວນພຶດຜົນເຊິ່ງທີ່ດິນ ຜະລິດຜົນໄດ້ ຢ່າສໍ້ໂກງຄົນອິສຣາເອນ ພີ່ນ້ອງຮ່ວມຊາດຂອງເຈົ້າ ແຕ່ຈົ່ງຟັງພຣະຜູ້ເປັນເຈົ້າຂອງພວກເຈົ້າ (ຂໍ້ 13-17). ຄົບຮອບ 50 ເປັນປີສເລີມສລອງການຊົງໄຖ່ຈາກການເປັນຂ້າທາດທີ່ເອຢິບ ດ້ວຍເຫດນີ້ພຣະເຈົ້າຈຶ່ງຊົງ ສັ່ງໃຫ້ສົ່ງພວກຂ້າທາດ, ທີ່ດິນທີ່ຖືກຊື້ຂາຍໃນຍາມຈົນ ແລະອື່ນໆ ໃຫ້ເຈົ້າຂອງເດີມຄືນ.

## 2. <u>ຢ່າລືມກົດບັດຍັດ</u> (25:23-24)

ມາເຖິງຂໍ້ນີ້ຂ້າພະເຈົ້າຄິດເຖິງຕອນໄປເຮັດພາຣະກິດຂອງພຣະເຈົ້າທີ່ປະເທດລາວ. ຂ້າພະເຈົ້າບໍ່ເຄີຍລືມວັນກຳ ໜົດທີ່ຂ້າພະເຈົ້າຕ້ອງອອກຈາກປະເທດລາວຫລັງຈາກເຊັນ Visa ເຂົ້າລາວ, ຄືທາງເຈົ້າໜ້າທີ່ເພິ່ນຈະກຳນົດເວລາໃຫ້ຢູ່ຕາມລະບຽບຂອງເພິ່ນ ຫາກໝົດກຳໜົດເວລາແລ້ວແລະງານຍັງບໍ່ແລ້ວຂ້າພະເຈົ້າຈຳເປັນຈະຕ້ອງໄປຂໍ Visa ຕໍ່, ເພິ່ນຈະໃຫ້ອີກຈັກມື້ນັ້ນກໍສຸດແລ້ວແຕ່ເພິ່ນດ້ວຍວ່າເພິ່ນເປັນເຈົ້າຂອງປະເທດ. ພຣະເຈົ້າມີກົດກັບອິສຣາເອນວ່າ "ທີ່ດິນຂອງພວກເຈົ້າຂາຍໃນລັກສະນະຖາວອນບໍ່ໄດ້ ເພາະວ່າພວກເຈົ້າບໍ່ແມ່ນເຈົ້າຂອງທີ່ດິນນັ້ນ; ທີ່ດິນເປັນຂອງພຣະຜູ້ເປັນເຈົ້າ ແລະພວກເຈົ້າກໍເປັນດັ່ງຄົນຕ່າງດ້າວທັງຫລາຍທີ່ໄດ້ອະນຸຍາດໃຫ້ປູກຝັງກິນໃນທີ່ດິນເທົ່ານັ້ນ. (ຂໍ້ 23). ພຣະເຈົ້າຊົງກ່າວວ່າ ເຮົາທັງຫລາຍເປັນເໝືອນຄົນຕ່າງດ້າວອາສັຍຢູ່ເພື່ອທຳມາຫາກິນເທົ່ານັ້ນ ເຮົາຈະຊື້ຂາຍທີ່ດິນວ່າເປັນຂອງຜູ້ນັ້ນຜູ້ນີ້ບໍ່ໄດ້ ເພາະວ່າເຈົ້າຂອງດິນທີ່ແທ້ຈິງແມ່ນພຣະເຈົ້າ ແຕ່ເຮົາມາຢູ່ແລ້ວກໍຂາຍກັນໄປຊື່ໆ, ທີ່ຈິງ

ແລ້ວດິນນັ້ນມີກ່ອນເຮົາເກີດ ແລະເມື່ອເຮົາຕາຍກໍບໍ່ແມ່ນຂອງເຮົາອີກແລ້ວ ແລະທີ່ດິນນັ້ນຈະຕ້ອງກັບຄືນໄປຫາເຈົ້າຂອງເດີມຄືອົງພຣະຜູ້ເປັນເຈົ້າ.

ໃນຂໍ້ 24 ບອກວ່າ "ເມື່ອມີການຂາຍທີ່ດິນ ພວກເຈົ້າຕ້ອງຮູ້ຈັກສິດທິຂອງເຈົ້າຂອງເດີມ ທີ່ຈະຊື້ທີ່ດິນນັ້ນຄືນໄດ້" (ຂໍ້ 24). ມີຄວາມຫມາຍວ່າຜູ້ຊື້ທີ່ດິນຕອນນັ້ນຈະຕ້ອງສົ່ງເຈົ້າຂອງເດີມໃນງານສລອງຄົບຮອບ 50 ປີ ແຫ່ງການຊົງໄຖ່ຈາກການເປັນຂ້າທາດ. ກ່ຽວກັບເຣື່ອງດິນແດນນີ້ຂ້າພະເຈົ້າກໍແປກໃຈມາເປັນເປັນເວລານານຄືກັນ, ຂ້າພະເຈົ້າແປກໃຈວ່າ ພຣະເຈົ້າເປັນຜູ້ສ້າງໂລກ ແລະສັພສິ່ງໃນໂລກ ດ້ວຍເຫດໃດມນຸດເຮົາຈຶ່ງມາເປັນເຈົ້າຂອງທີ່ດິນຕອນນັ້ນ. ທ່ານລອງຄິດເບິ່ງວ່າດິນເຮືອນຂອງທ່ານຢູ່ໃນເວລານີ້ນັ້ນແມ່ນໃຜເປັນເຈົ້າຂອງໃນໂລກຜູ້ທໍາອິດ? ລາວເຮັດແນວໃດຈຶ່ງເປັນເຈົ້າຂອງ? ແລະດິນຕອນນີ້ຖືກຊື້ຂາຍກັນມາຈັກຊົ່ວຄົນແລ້ວ ແລະຍັງຈະຂາຍກັນອີກຕໍ່ໄປອີກຈັກຊົ່ວຄົນ. ສຸດທ້າຍດິນຕອນທີ່ທ່ານເປັນເຈົ້າຂອງໃນເວລານີ້ຈະຕ້ອງກັບຄືນໄປຫາເຈົ້າຂອງເດີມຄືພຣະຜູ້ສ້າງຢ່າງແນ່ນອນ.

## 3. <u>ບັນເທົາຜູ້ຍາກຈົນ</u> (25:35--43)

ຄົນທຸກຍາກມາຈາກຫລາຍແຫລ່ງດ້ວຍກັນ ລາງຄົນເກີດມາໃນຄອບຄົວຍາກຈົນ, ລາງຄົນກໍບໍ່ມີອາຊີບ, ລາງຄົນກໍບໍ່ມີບ່ອນທໍາມາຫາກິນ, ລາງຄົນແມ່ນເດັກກໍາພ້າ, ລາງຄົນກໍແມ່ນແມ່ຫມ້າຍ, ລາງຄົນກໍແມ່ນຄົນເສັຽອົງຄະ ແລະອື່ນໆ. ດ້ວຍຄວາມຍາກຈົນນີ້ປະຊາຊົນອິສຣາເອນຈຶ່ງຂາຍໄຮ່ນາຕາກ້າຂອງເຂົາ ເພື່ອຄວາມຢູ່ລອດຈົນລາງຄົນໄດ້ຂາຍຕົວຍອມເປັນຂ້າທາດຂອງຜູ້ອື່ນ. ພຣະເຈົ້າມີລະບຽບການໃຫ້ບັນເທົາຜູ້ຍາກຈົນທັງຫລາຍພໍຈະສລູບໄດ້ດັ່ງນີ້;

1. ໃຫ້ຊ່ອຍເຫລືອຜູ້ຍາກຈົນໂດຍຮັບລາວມາເປັນລູກຈ້າງໃນເຮືອນ ຂໍ້ 35
2. ໃຫ້ປະຕິບັດຕາມຄໍາສັ່ງຂອງພຣະເຈົ້າ ຂໍ້ 36
3. ບໍ່ໃຫ້ເອົາດອກເບັ້ຍນໍາລູກຈ້າງຫາກເຂົາຢືມ ຂໍ້ 36-37
4. ຄົນຊາດດຽວກັນຢ່າປະຕິບັດກັບເຂົາເຫມືອນຂ້າທາດເຖິງແມ່ນເຂົາຂາຍຕົວກໍຕາມ ຂໍ້ 39
5. ຮັບຄົນອິສຣາເອນເປັນລູກຈ້າງເທົ່ານັ້ນ, ບໍ່ໃຫ້ເປັນຂ້າທາດ ຂໍ້ 40
6. ໃຫ້ສົ່ງຂ້າທາດຄືນເມື່ອຄົບຮອບ 50 ປີ ຂອງການສລອງການປົດປ່ອຍເປັນຂ້າທາດຈາກເອຢິບ ຂໍ້ 41
7. ສໍາລັບອິສຣາເອນແມ່ນທາດຂອງພຣະເຈົ້າເທົ່ານັ້ນ ບໍ່ແມ່ນທາດຂອງມະນຸດ ຂໍ້ 42
8. ຢ່າຂົ່ມເຫັງຊາວອິສຣາເອນ ຂໍ້ 43

ພຣະເຈົ້າໄດ້ສັ່ງໃຫ້ປະຊາຊົນຂອງພຣະອົງໃຫ້ມີຄວາມເມຕາສົງສານຕໍ່ຄົນຍາກຈົນບໍ່ໃຫ້ກົດຂີ່ຂົ່ມເຫງ ດ້ວຍວ່າຄົນຮັ່ງມີຫລືຍາກຈົນກໍແມ່ນປະຊາຊົນຂອງອົງພຣະຜູ້ເປັນເຈົ້າທັງຫມົດ. ຫາກອິສຣາເອນຂາດຄວາມເມຕາສົງສານຊຶ່ງກັນແລະກັນ ພວກເຂົາກໍເຮັດບາບເພາະເປັນການຂັດຄໍາສັ່ງຂອງອົງພຣະຜູ້ເປັນເຈົ້າ. ພຣະຜູ້ເປັນເຈົ້າຊົງໄຖ່ອິສຣາເອນຈາກເອຢິບຈາກການເປັນຂ້າທາດຢ່າງໃດພຣະອົງກໍມີພຣະປະສົງໃຫ້ອິສຣາເອນຮູ້ຈັກຄິດເຖິງຕອນທີ່ເຂົາຍັງເປັນຂ້າທາດຢູ່ນັ້ນ ເຂົາໄດ້ຮັບຄວາມທຸກທໍຣະມານຫລາຍພຽງໃດ ເມື່ອເຂົາຄິດເຖິງເວລາທີ່ເຂົາເປັນຂ້າທາດເຂົາກໍຈະມີຈິດໃຈເມຕາສົງສານບັນເທົາທຸກພວກຂ້າທາດຂອງເຂົາຕລອດເຖິງຄົນຍາກຈົນທີ່ເປັນຫນີ້ເຂົາດ້ວຍ. ຈົ່ງຈໍາໄວ້ສເມີວ່າດິນດອນຕອນຫຍ້າ ພ້ອມທັງຂ້າທາດແລະຄົນຮັ່ງມີເປັນຂອງພຣະເຈົ້າ, ໃນຕອນທ້າຍທຸກຢ່າງກໍຈະກັບໄປສູ່ເຈົ້າຂອງເດີມ.

<u>ຄໍາຖາມ:</u>

1. ໃນຖານະທີ່ເຮົາເປັນຄຣິສຕຽນເຮົາເປັນຄົນຮັ່ງມີໄດ້ບໍ່?

2. ພຣະເຈົ້າໄດ້ນຳອິສຣາເອນອອກມາຈາກໃສ?

3. ພຣະເຈົ້າຈະພາເຂົາໄປໃສ?

4. ກ່ອນໜ້າໄປເຖິງແຜ່ນດິນທີ່ພຣະເຈົ້າຕຽມຈະມອບໃຫ້ພຣະເຈົ້າສັ່ງສອນຫຍັງແດ່?

5. ພຣະເຈົ້າຊົງສັ່ງໃຫ້ເຮັດວຽກ 6 ປີ ສ່ວນປີທີ 7 ນັ້ນໃຫ້ພັກ ເພື່ອຫຍັງ?

6. ພຣະເຈົ້າວາງມາຕການໃນການຊື້ຂາຍທີ່ດິນແນວໃດ?

7. ຄົບຮອບ 50 ປີ ພຣະເຈົ້າສັ່ງໃຫ້ເຮັດແນວໃດແດ່?

8. ພຣະເຈົ້າຊົງສັ່ງໃຫ້ບັນເທົາຄົນຍາກຈົນແນວໃດ?

HV

ສຈ. ທູມພັນ ວົງສຸຣິດທ໌

## ບົດຮຽນທີ 6
## ສະແດງຄວາມເຊື່ອແບບກ້າຫານ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ຈົດເຊັນບັນຊີ 13:1-3, 17-20, 25-33; 14:1-10, 30-31
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ຈົດເຊັນບັນຊີ 13--- 14
ຈຸດສໍາຄັນຂອງບົດຮຽນນີ້: ພຣະເຈົ້າຊົງໃຫ້ພຣະພອນກັບການກະທໍາອັນກ້າຫານທີ່ເປັນການຕອບສນອງການນໍາພາຂອງພຣະອົງ.
ຄໍາຖາມເພື່ອການສໍາຣວດ: ມີຫຍັງແດ່ໃນຊີວິດຂອງທ່ານທີ່ເປັນການຊົງເອີ້ນຂອງພຣະເຈົ້າໃຫ້ມີຄວາມເຊື່ອແບບກ້າຫານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອທົບທວນເບິ່ງເຫດການທີ່ຂ້ອຍ ຫລືຜູ້ທີ່ຂ້ອຍຮູ້ໄດ້ສະແດງຄວາມເຊື່ອແບບກ້າຫານທີ່ເປັນການຕອບສນອງການນໍາພາຂອງພຣະເຈົ້າ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຜູ້ຮັບໃຊ້.

### ຄໍານໍາ

ພຣະເຈົ້າຊົງໃຫ້ພຣະພອນກັບຜູ້ທີ່ສະແດງຄວາມເຊື່ອແບບກ້າຫານໃນຖ້າມກາງຄວາມບໍ່ແນ່ນອນ ແລະຜູ້ທີ່ສະແດງການເຊື່ອຟັງຕໍ່ພຣະປະສົງຂອງພຣະອົງ.

1. ພິສູດເບິ່ງຄໍາສັ່ງ (13:1-3)

ພຣະເຈົ້າຊົງສັ່ງໂມເຊໃຫ້ແຕ່ງຄົນໄປສໍາຣວດເບິ່ງດິນແດນການາອານ, "ບ່ອນທີ່ເຮົາພວມຈະມອບໃຫ້ແກ່ຊາວອິສຣາເອນ" (13:3). ຄໍາສັ່ງຂອງພຣະເຈົ້າເປັນຄໍາສັ່ງທີ່ແຈ່ມແຈ້ງດີ ຄື: ນຶ່ງ, ໃຫ້ໂມເຊສົ່ງຄົນຈໍານວນນຶ່ງໄປສໍາຣວດເບິ່ງທ້ອງທີ່ ຊຶ່ງອາດຈະປະກອບດ້ວຍການສືບສອດແນມເບິ່ງກໍາລັງທະຫານໃນດິນແດນຕອນນັ້ນ ກ່ອນທີ່ຈະໄປຍຶດຄອງ. ສອງ, ພຣະເຈົ້າຊົງກ່າວວ່າ ໃຫ້ໂມເຊສົ່ງຄົນໄປສໍາຣວດເບິ່ງດິນແດນທີ່ພຣະອົງໄດ້ຊົງມອບໃຫ້ກັບຊາວເຮັບເຣີ ຊຶ່ງໝາຍຄວາມວ່າໃຫ້ໄປສໍາລວດແຜ່ນດິນທີ່ເປັນຂອງພວກເຂົາແລ້ວ. ສາມ, ໃຫ້ໂມເຊເລືອກເອົາຜູ້ນໍາຈາກແຕ່ລະຕະກຸນ ຊຶ່ງໝາຍຄວາມວ່າຈະຕ້ອງເປັນຜູ້ນໍາທີ່ມີຜູ້ຕິດຕາມ ຫລືເປັນຜູ້ນໍາທີ່ມີອິດທິພົນ.

ສ່ວນຫລາຍພວກເຮົາຈະໄດ້ຍິນຄໍາສັ່ງຂອງພຣະເຈົ້າຢ່າງແຈ່ມແຈ້ງດີ ເວລາພວກເຮົາກໍາລັງຢູ່ໃນປ່າທຸຣະກັນດານ. ໃນເວລາຂັດສົນ ຫລືຂາດເຂີນພວກເຮົາຈະເຫັນວ່າພຣະສັນຍາແລະຄໍາສັ່ງຂອງພຣະເຈົ້ານັ້ນຊັດເຈນດີ ໂດຍສເພາະແມ່ນທາງອອກທີ່ຢູ່ຂ້າງໜ້າ. ພາກສ່ວນຂອງພວກເຮົາຄືການຍອມເຊື່ອ ແລະການຟັງຄວາມ!

2. ປະເມີນເບິ່ງຄໍາສັ່ງ (13:17-20)

ໃນຕອນນີ້ໂມເຊໄດ້ຂະຫຍາຍຄຳສັ່ງຂອງພຣະເຈົ້າສຳລັບເຂົາເຣື່ອງການສຳຣວດພື້ນທີ່. ໂມເຊໄດ້ສັ່ງໃຫ້ພວກສອດແນມອອກໄປເຖິງເມືອງເນແງບຊຶ່ງເປັນດິນແດນແຫ້ງແລ້ງໃນພາກໃຕ້ຂອງປະເທດຢູດາຍ ແລະໄປເຂດພູດອຍເພື່ອສຳຣວດເບິ່ງດິນແດນ. ໃນເຂດພູດອຍນັ້ນມີພູເຂົາຂອງຢູດາຍ, ເນີນພູຂອງເອຟາຣະອິມ, ແລະເນີນສູງຂອງຄາລີເລ.

ພວກສອດແນມມີໜ້າທີ່ໃນການປະເມີນເບິ່ງກຳລັງແລະຈຳນວນຄົນ, ພື້ນທີ່ແລະຄຸນຄ່າຂອງມັນ, ບ້ານເມືອງແລະປະຊາຊົນທີ່ຢູ່ເມືອງນັ້ນ, ເບິ່ງບ້ານເມືອງທີ່ມີປ້ອມລ້ອມ ແລະບໍ່ມີປ້ອມລ້ອມ, ຄວາມອຸດົມສົມບູນຂອງດິນ, ແລະຜົລປູກຕ່າງໆ. ພວກເຂົາຈະນຳຜົນໄມ້ບາງຢ່າງມາເປັນຕົວຢ່າງ ເພາະຕອນນັ້ນກໍແມ່ນຣະດູໝາກໄມ້. ສລູບແລ້ວພວກສອດແນມມີໜ້າທີ່ໃນການໄປກວດ "ເບິ່ງວ່າດິນແດນນັ້ນເປັນຢ່າງໃດ..." (13:18).

ເວລາພຣະເຈົ້າໄດ້ຊົງເວົ້າກັບທ່ານແລະຊົງໃຫ້ຄຳສັ່ງ, ທ່ານເຫັນຫຍັງແດ່? ທ່ານຈະລາຍງານເຣື່ອງຫຍັງແດ່?

### 3. <u>ປະເມີນເບິ່ງຄຳລາຍງານ</u> (13:25-33)

ໃນຕອນນີ້ເປັນເວລາເພື່ອການປະເມີນຜົນຂອງການສຳຣວດດິນແດນຊຶ່ງໃຊ້ເວລາ 40 ວັນ. ພວກສອດແນມໄດ້ລາຍງານເຖິງຄວາມອຸດົມສົມບູນຂອງພື້ນທີ່ ແລະພວກເຂົາຍັງໄດ້ນຳຜົນໄມ້ຫລາຍຊະນິດມາພ້ອມ. ຫລັງຈາກນັ້ນພວກເຂົາກໍໄດ້ລາຍງານເຣື່ອງປະຊາຊົນທີ່ອາສັຍຢູ່ໃນດິນແດນນັ້ນ. ຜູ້ຄົນທີ່ອາສັຍຢູ່ໃນທີ່ນັ້ນເປັນຄົນທີ່ແຂງແຮງ ແລະເມືອງຂອງພວກເຂົາກໍມີກຳແພງປ້ອງກັນເປັນຢ່າງດີ. ນອກນັ້ນຍັງມີເຊື້ອສາຍຂອງອານັກຊຶ່ງເປັນຄົນຮູບຮ່າງໃຫຍ່. ພຣະຄັມຂໍ້ 32-33 ອະທິບາຍເຣື່ອງຄົນເຊື້ອສາຍຂອງອານັກວ່າເປັນຄົນສູງໃຫຍ່.

ກາເຫລັບຕໍ່ຕ້ານຄຳລາຍງານນີ້ ແລະສະແດງຄວາມເຫັນວ່າຊົນຊາດອິສຣາເອັນເຂັ້ມແຂງພໍທີ່ຈະເຂົ້າຢຶດຄອງດິນແດນນັ້ນໄດ້. ແຕ່ທຸກຄົນທີ່ໄດ້ໄປສຳຣວດດ້ວຍກັນບໍ່ເຫັນພ້ອມນຳກາເຫລັບ, ຍົກເວັ້ນແຕ່ໂຢຊວຍຄົນດຽວ. ສຽງສ່ວນຫລາຍຂອງພວກສອດແນມກ່າວວ່າ ອິສຣາເອັນບໍ່ສາມາດທີ່ຈະເອົາຊະນະຕໍ່ຜູ້ຄົນທີ່ອາສັຍຢູ່ໃນແຜ່ນດິນແຫ່ງພຣະສັນຍາໄດ້ ເພາະຄົນພວກນັ້ນມີກຳລັງແຂງແຮງກວ່າ ແລະມີຮູບຮ່າງໃຫຍ່ກວ່າພວກຕົນ (13:32). ນອກນັ້ນພວກເຂົາຍັງເວົ້າວ່າ "ພວກເຮົາເລີຍເບິ່ງເປັນດັ່ງຕັກແຕນໃນສາຍຕາຂອງຄົນເຫຼົ່ານັ້ນ" (13:33). ຄວາມຢ້ານໄດ້ເກີດຂຶ້ນຖ້າມກາງຄົນສ່ວນຫລາຍທີ່ໄດ້ໄປສອດແນມຈົນເຂົາພາກັນອ່ານຈິດໃຈຂອງຄົນສູງໃຫຍ່ທີ່ຢູ່ໃນດິນແດນຕອນນັ້ນ. ທີ່ໃດມີຄວາມຢ້ານກົວທີ່ນັ້ນກໍບໍ່ມີຄວາມເຊື່ອ ເພາະສອງຢ່າງນີ້ເປັນຄູ່ກັນ.

### 4. <u>ຄວາມຢ້ານແລະຄວາມເຊື່ອ</u> (14:1-10)

ເມື່ອເວລາໄດ້ຍິນພຣະຄຳຂອງພຣະເຈົ້າ,ໄພ່ພົນຂອງພຣະອົງຈະຕອບຮັບຢູ່ສອງວິທີ: ນຶ່ງພວກເຂົາຈະຕອບດ້ວຍຄວາມເຊື່ອ ແລະສອງພວກເຂົາຈະຕອບດ້ວຍຄວາມຢ້ານກົວ. ໃນກໍຣະນີນີ້, ຊົນຊາດອິສຣາເອັນຕອບດ້ວຍຄວາມຢ້ານກົວ. ພຣະທັມຂໍ້ 14:1 ບອກວ່າ, "ປະຊາຊົນຕ່າງກໍຮ້ອງໄຫ້." ຫລາຍກວ່ານັ້ນ ພວກເຂົາພາກັນຈົ່ມຮ້າຍໃສ່ໂມເຊ ແລະອາໂຣນ; ບາງຄົນຍັງຄິດຢາກຈະກັບຄືນໄປປະເທດເອຢິບດ້ວຍ (14:4). ໂມເຊແລະອາໂຣນກໍຂາບລົງດິນຕໍ່ໜ້າປະຊາຊົນ; ໂຢຊວຍແລະກາເຫລັບໄດ້ຈີກເສື້ອຂອງພວກເຂົາ; ສິ່ງນັ້ນຄືເຄື່ອງໝາຍຂອງຄວາມເສັຍໃຈຂອງພວກເຂົາ (14:5-6). ພວກເຂົາໄດ້ຊັກຊວນໃຫ້ປະຊາຊົນພາກັນເຂົ້າໄປຢຶດຄອງເອົາດິນແດນນັ້ນ ເພາະມັນເປັນດິນແດນທີ່ດີເລີດ ແລະເພາະພຣະຜູ້ເປັນເຈົ້າກໍຊົງຢູ່ນຳອິສຣາເອັນ(14:7-10). ໂຢຊວຍແລະກາເຫລັບຮຽກຮ້ອງໃຫ້ປະຊາຊົນຈົ່ງມີຄວາມເຊື່ອ ແທນທີ່ຈະມີຄວາມຢ້ານກົວ.

ປະຊາຊົນໂຕ້ຕອບດ້ວຍການຈະແກວ່ງກ້ອນຫີນໃສ່ພວກເຂົາໃຫ້ຕາຍ (14:10). ໂຢຊວຍແລະກາເຫລັບຢືນຢັນກັບປະ

ຊາຊົນວ່າ ຖ້າພຣະເຈົ້າຊົງພໍພຣະທັຍ, ພວກສັດຕຣູກໍຈະພ່າຍແພ້; ພຣະເຈົ້າຈະໃຫ້ຊັຍຊະນະກັບພວກເຂົາ (14:9). ຄວາມຫວັງທີ່ຈະເຂົ້າຢຶດຄອງດິນແດນໄດ້ກາຍເປັນຄວາມຜິດຫວັງເພາະຄວາມຢ້ານກົວ. ປະຊາຊົນຂາດຄວາມເຊື່ອໃນພຣະເຈົ້າຜູ້ທີ່ຮັກພວກເຂົາ, ຜູ້ໄດ້ນຳພວກເຂົາອອກມາຈາກປະເທດເອຢິບຜ່ານທະເລຊາຍ ຈົນມາເຖິງແຜ່ນດິນແຫ່ງພຣະສັນຍາ.

ພວກເຮົາຈະຕ້ອງມີຄວາມເຊື່ອວ່າພຣະເຈົ້າຊົງຢູ່ກັບເຮົາ ແລະພໍພຣະທັຍໃນຕົວເຮົາ. ຄວາມເຊື່ອ ຫລື ຄວາມຢ້າຍກົວຈະເປັນສິ່ງສຳຄັນເວລາພຣະເຈົ້າໄດ້ຊົງເວົ້າກັບພວກເຮົາ. ທ່ານຈະຕອບຮັບພຣະຄຳແນວໃດ? ມີສະຖານະການແບບໃດທີ່ທ່ານກຳລັງປະເຊີນຢູ່ຊຶ່ງທ່ານຈະຕ້ອງຕອບດ້ວຍຄວາມເຊື່ອ ຫລືດ້ວຍຄວາມຢ້ານກົວ?

5. <u>ຜົນຂອງຄວາມຢ້ານ</u> (14:30-31)

ພາກສຸດທ້າຍຂອງເຣື່ອງນີ້ແມ່ນຄຳປະກາດຂອງພຣະເຈົ້າສຳລັບຜູ້ທີ່ປະຕິເສດບໍ່ຍອມເຂົ້າໄປສູ່ແຜ່ນດິນແຫ່ງພຣະສັນຍາໃນເວລານັ້ນ. ໃນຕອນຫລັງ, ພວກເຮົາຮູ້ວ່າມີພຽງແຕ່ລູກຫລານຂອງຜູ້ທີ່ເຕັມດ້ວຍຄວາມເຊື່ອສອງຄົນ, ໂຢຊວຍ ແລະກາເຫລັບ, ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປຢູ່ໃນແຜ່ນດິນ.

ສິ່ງທີ່ເຈັບປວດທີ່ສຸດສຳລັບປະຊາຊົນໃນຕອນນີ້ຄືພຣະເຈົ້າໄດ້ຊົງກ່າວວ່າ, "ເຮົາໄດ້ສັນຍາວ່າຈະໃຫ້ພວກເຈົ້າຢູ່ທີ່ນັ້ນ ແຕ່ໃນພວກເຈົ້າຈະບໍ່ມີໃຜໄດ້ຢູ່ ນອກຈາກກາເຫລັບແລະໂຢຊວຍ" (14:30). ພຣະເຈົ້າຊົງສັດຊື່ແລະທ່ຽງແທ້. ພຣະອົງຈະເຮັດທຸກຢ່າງທີ່ພຣະອົງໄດ້ຊົງສັນຍາ. ພຣະຄຳຂອງພຣະອົງກໍເປັນຈິງ ແລະພຣະອົງຈະເຮັດທຸກຢ່າງທີ່ໄດ້ຊົງສັນຍາວ່າຈະເຮັດ. ພຣະເຈົ້າອາດຈະບໍ່ເຮັດໃຫ້ພຣະສັນຍາສຳເຣັດຕາມທີ່ພວກເຮົາຄິດໄວ້, ແຕ່ພຣະອົງຈະເຮັດຕາມພຣະຄຳ.

ຄວາມຢ້ານຈະມີຜົນແນ່ນອນ; ຄວາມເຊື່ອກໍເຊັ່ນດຽວກັນ. ທ່ານຈະເລືອກເອົາອັນໃດ?

<u>ຄຳຖາມ:</u>

1. ມີຕອນໃດໃນລະຍະທີ່ຜ່ານມາທີ່ທ່ານຮູ້ວ່າກຳລັງ, ຄວາມສາມາດ, ຄວາມພະຍາຍາມ, ແລະຊັບສົມບັດຂອງທ່ານບໍ່ສາມາດທີ່ຈະເອົາຊັຍຊະນະອຸປສັກນັ້ນໄດ້ ແລະທ່ານກໍຕ້ອງການທີ່ຈະເຫັນພຣະເຈົ້າຊ່ວຍແກ້ໄຂ?

2. ພຣະເຈົ້າໄດ້ເວົ້າຫຍັງກັບທ່ານແດ່ ທີ່ທ່ານຈະຕ້ອງເຊື່ອຟັງ ແມ່ນວ່າສິ່ງນັ້ນຈະກົງກັນຂ້າມກັບຄວາມເປັນຈິງ?

3. ທ່ານໄດ້ສະແດງການເຊື່ອຟັງ ແລະຄວາມເຊື່ອແນວໃດແດ່ໃນໂອກາດຜ່ານມາ?

4. ມີຫຍັງແດ່ທີ່ທ່ານຢ້ານທີ່ສຸດ ໃນສິ່ງທີ່ພຣະເຈົ້າໄດ້ນຳພາທ່ານໃຫ້ເຮັດ?

5. ທ່ານໄດ້ເຫັນຄວາມເຊື່ອມາແທນຄວາມຢ້ານກົວໃນຊີວິດວິທີໃດແດ່?

ສຈ. ສິດນີ ຄານ

# ບົດຮຽນທີ 7
# ເວລາຄວາມກົດດັນມີເພີ່ມຂຶ້ນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຈົດເຊັນບັນຊີ 20: 1-13
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຈົດເຊັນບັນຊີ 20
ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຈະຕ້ອງຣະວັງການຕອບໃນທາງຜິດເວລາຖືກຄວາມກົດດັນ.
ຄຳຖາມເພື່ອການສຳຣວດ: ຄວາມກົດດັນສາມາດເຮັດຫຍັງໃຫ້ທ່ານແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ການຕອບໃນທາງຖືກ ແລະທາງຜິດເວລາຖືກກົດດັນ ແລະຈະຮຽນຮູ້ວິທີເລືອກທີ່ຖືກຕ້ອງ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຜູ້ຮັບໃຊ້.

## ຄຳນຳ

ທຸກມື້ນີ້ ພວກເຮົາສາມາດທີ່ຈະຕອບຮັບຄວາມກົດດັນໃນທາງທີ່ພຣະເຈົ້າພໍພຣະທັຍ. ຈຸດສຳຄັນກໍຄືພວກເຮົາຈະຕ້ອງພະຍາຍາມຫລີກເວັ້ນຈາກການຕອບຮັບຄວາມກົດດັນໃນທາງຜິດ ເວລາຄວາມກົດດັນເຫລົ່ານັ້ນກະນ່ຳທະວີຄູນຂຶ້ນຢູ່ອ້ອມຮອບພວກເຮົາ.

ພຣະທັມຈົດເຊັນບັນຊີ 15---19 ໄດ້ໃຫ້ເບື້ອງຫລັງສຳລັບບົດຮຽນນີ້. ຈົດເຊັນບັນຊີ 20 ຈະເວົ້າເຖິງຄວາມກົດດັນທີ່ໂມເຊມີໃນການຕອບໂຕ້ຜູ້ຕໍ່ຕ້ານການນຳພາຂອງເຂົາ, ການຕຽມພ້ອມທີ່ຈະຂໍໃຫ້ພຣະເຈົ້າຊ່ວຍ, ການບໍ່ສາມາດເຮັດໃນສິ່ງທີ່ພຣະເຈົ້າສັ່ງເພາະຄວາມກົດດັນແຕ່ລະມື້, ແລະຜົນສະທ້ອນຂອງການບໍ່ເຊື່ອຟັງພຣະເຈົ້າຂອງເຂົາ.

### 1. ປະເຊີນໜ້າກັບການຕໍ່ຕ້ານ ແລະກັບຄົນທີ່ມັກຊອກເຣື່ອງ (20:1-5)

ເກືອບຈະເຖິງ 40 ປີຫລັງຈາກເລີ້ມຕົ້ນການອົພຍົບ, ໂມເຊກໍໄດ້ພົບກັບການຈົ່ມວ່າຂອງຊາວອິສຣາເອັນອີກເທື່ອນຶ່ງ. ການຈົ່ມວ່າກໍມີເຫດຜົນດີ ເພາະວ່າປະຊາຊົນຂາດນ້ຳດື່ມໃນຂະນະທີ່ພວກເຂົາຕັ້ງຄ້າຍພັກຢູ່ໃນຖິ່ນແຫ້ງແລ້ງກັນດານ. ພວກເຂົາໄດ້ເຂົ້າມາຫາໂມເຊພ້ອມດ້ວຍຄຳຖາມສອງຢ່າງ: ເປັນຫຍັງເຈົ້າຈຶ່ງນຳໄພ່ພົນຂອງພຣະເຈົ້າພ້ອມດ້ວຍຝູງສັດອອກມາຕາຍຢູ່ຖິ່ນແຫ້ງແລ້ງກັນດານ? ເປັນຫຍັງເຈົ້າຈຶ່ງນຳພາພວກເຮົາອອກຈາກເອຢິບມາຫາບ່ອນຕາຍໆນີ້? ພວກເຂົາໄດ້ເຕືອນໂມເຊວ່າຢູ່ຖິ່ນແຫ້ງແລ້ງນີ້ບໍ່ມີ ເຂົ້າກິນ, ບໍ່ມີຕົ້ນໝາກເດື່ອ, ບໍ່ມີຕົ້ນອະງຸ່ນ, ບໍ່ມີຕົ້ນໝາກພິລາ, ຫລືນ້ຳດື່ມ. ພວກເຂົາຍັງບອກກັບໂມເຊວ່າພວກເຂົາຕ້ອງການກັບໄປຕາຍທີ່ເອຢິບແທນທີ່ຈະຢູ່ຢ່າງທຸກຍາກເຊັ່ນນີ້; ພວກເຂົາຕ້ອງການເປັນທາດແທນທີ່ຈະມີເສຣີພາບ, ຕ້ອງການຢູ່ໃນດິນແດນຂອງທາດແທນທີ່ຈະຢູ່ແຜ່ນດິນສັນຍາ, ແລະຕ້ອງການ

ຕາຍແທນທີ່ຈະມີຊີວິດຢູ່ຢ່າງລຳບາກ. ປະຊາຊົນພວກນີ້ເກີດເປັນໂລກຄວາມຈຳເຊື່ອມ; ເພາະທຸກຢ່າງທີ່ພວກເຂົາຕ້ອງການກໍມີເຕັມຢູ່ໃນດິນແດນແຫ່ງພຣະສັນຍາ ແຕ່ພວກເຂົາບໍ່ຍອມເຂົ້າໄປຢຶດຄອງເອົາດິນແດນນັ້ນ (ຈົດເຊັນບັນຊີ 13).

ເຣື່ອງສຳຄັນໃນຈົດເຊັນບັນຊີ 20 ແມ່ນ (1) ການຕໍ່ຕ້ານການນຳຂອງໂມເຊອີກເທື່ອນຶ່ງ ແລະ (2) ການຍົກບັນຫາຂຶ້ນມາເວົ້າໂດຍບໍ່ຄິດເຖິງສິ່ງທີ່ພຣະເຈົ້າໄດ້ຊົງປະທານໃນລະຍະທີ່ຜ່ານມາ. ຂໍ້ສັງເກດ: ນຶ່ງ, ພວກເຂົາໄດ້ມີການຈັດຕັ້ງເພື່ອຈະຕໍ່ຕ້ານ, "ປະຊາຊົນຈຶ່ງມາເຕົ້າໂຮມກັນ" (20:2). ສອງ, ຊາວອິສຣາເອນມີຄວາມຊຳນານໃນການຄົ້ນຊອກຫາບັນຫາ ແລະການມັກເນັ້ນໃນທາງທີ່ບໍ່ດີ. ຄຳຖາມ: ທ່ານເປັນຜູ້ມັກຊອກຫາບັນຫາ ຫລືເປັນຜູ້ມັກຊອກຫາຄຳຕອບ?

2. ຊອກຫາຄຳຕອບຈາກບໍ່ຂອງຄວາມຫວັງ (20:6-8)

ໂມເຊແລະອາໂຣນໄດ້ພາກັນໄປຫາບ່ອນທີ່ມີຄວາມຫວັງຄື "ຫໍເຕັນທີ່ປະຊຸມ." ແທນທີ່ຈະຕັດສິນໃຈ ຫລືໃຫ້ຄຳຕອບຢ່າງຮີບໄວ, ພວກເຂົາທັງສອງໄດ້ເຂົ້າຫາພຣະເຈົ້າ. ໂມເຊໄດ້ເຂົ້າຫາພຣະເຈົ້າເພື່ອຈະໄດ້ຮັບການພັກຜ່ອນຈາກຜູ້ຕໍ່ຕ້ານ (ພສສ 62). ໂມເຊແລະອາໂຣນໄດ້ສອນພວກເຮົາດ້ວຍການກະທຳຂອງພວກເຂົາ, ເພາະບາງຄັ້ງສິ່ງທີ່ດີທີ່ສຸດໃນເວລາຖືກຕໍ່ຕ້ານຄືການງຽບຢູ່ ແລະການສແວງຫາພຣະເຈົ້າເພື່ອຈະໄດ້ຄຳຕອບ (ສພສ 10:19).

ພຣະເຈົ້າຊົງສັດຊື່ ແລະໄດ້ຊົງປາກົດຕົວໃຫ້ໂມເຊແລະອາໂຣນເຫັນທັນກັບເວລາ. ພຣະອົງໄດ້ຊົງໃຫ້ຄຳຕອບກັບໂມເຊເຣື່ອງການຂາດນ້ຳໂດຍສັ່ງໃຫ້ໂມເຊເຕົ້າໂຮມປະຊາຊົນ ແລະໃຫ້ກ່າວກັບໂງ່ນຫີນຕໍ່ໜ້າພວກເຂົາ ແລ້ວນ້ຳກໍຈະໄຫລອອກມາ. ການຊອກຫາຄຳຕອບສຳລັບບັນຫາຍາກໃນຊີວິດຮູ້ສຶກວ່າເປັນເຣື່ອງງ່າຍໆ ແຕ່ກໍເປັນເຣື່ອງເລິກເຊິ່ງ. ຈົ່ງໄປຫາບໍ່ຂອງກຳລັງ, ບໍ່ຂອງຄວາມຫວັງ, ແລະບໍ່ຂອງຄຳສັນຍາ. ບໍ່ຂອງຄວາມຫວັງໃນເວລາຂັດສົນບໍ່ແມ່ນສະຖານທີ່ແຕ່ແມ່ນອົງພຣະຜູ້ເປັນເຈົ້າ. ພຣະອົງຈະຊົງໃຫ້ຄຳຕອບ ແລະຄວາມຫວັງທີ່ທ່ານຊອກຫາ. ທ່ານເຄີຍໄດ້ໃຊ້ເວລາເພື່ອສແວງຫານ້ຳພຣະທັຍຂອງພຣະເຈົ້າສຳລັບບັນຫາອັນຫຍຸ້ງຍາກທີ່ທ່ານບໍ່ສາມາດແກ້ໄຂດ້ວຍຕົວເອງບໍ່?

3. ການບໍ່ຍອມເຮັດຕາມຄຳຕອບທີ່ພຣະເຈົ້າຊົງໃຫ້ (20:9-11)

ໂມເຊໄດ້ຮັບຄຳຕອບຢ່າງແຈ່ມແຈ້ງສຳລັບການແກ້ບັນຫາທີ່ປະຊາຊົນໄດ້ຮ້ອງຮຽນກັບເຂົາ. ແຕ່ປະກົດວ່າໂມເຊໄດ້ໝົດຄວາມອົດທົນກັບຊາວອິດສຣາເອັນເສັຽແລ້ວ. ໂມເຊໄດ້ກ່າວວ່າ "ຈົ່ງຟັງທາງນີ້ ພວກເຈົ້າຄົນກະບົດເອີຍ! ພວກເຮົາຈະຕ້ອງເອົານ້ຳອອກມາຈາກໂງ່ນຫີນນີ້ ໃຫ້ພວກເຈົ້າດື່ມຊັ້ນບໍ່?" (20:10). ແລ້ວເຂົາ "ກໍຍົກໄມ້ເທົ້າຂຶ້ນຕີໂງ່ນຫີນສອງເທື່ອແລະນ້ຳກໍໄຫລທະລຸອອກມາຢ່າງຫລວງຫລາຍ" (20:11). ແທນທີ່ຈະເວົ້າກັບໂງ່ນຫີນ, ໂມເຊກັບໄປເວົ້ານຳປະຊາຊົນແລ້ວຕີໂງ່ນຫີນ. ແທນທີ່ຈະເພິ່ງຣິດເດດຂອງພຣະເຈົ້າ, ໂມເຊໄດ້ໃຊ້ກຳລັງຂອງຕົວເອງເພື່ອແກ້ບັນຫາ. ໂມເຊບໍ່ໄດ້ເຮັດຕາມທີ່ພຣະເຈົ້າຊົງສັ່ງ, ເຂົາໃຊ້ຄວາມຄິດຂອງຕົວເອງ ແລະໄດ້ເຮັດທຸກຢ່າງຕໍ່ໜ້າປະຊາຊົນ. ເວົ້າງ່າຍໆກໍຄືວ່າໂມເຊບໍ່ໄດ້ເຮັດຕາມຄຳສັ່ງທີ່ພຣະເຈົ້າໄດ້ໃຫ້ມາ.

ພຣະຄັມພີບໍ່ໄດ້ກ່າວໄວ້ວ່າເປັນຫຍັງໂມເຊຈຶ່ງບໍ່ເຮັດຕາມທີ່ພຣະເຈົ້າໄດ້ຊົງສັ່ງ; ແຕ່ພວກເຮົາພໍຈະສລູບໄດ້ວ່າໂມເຊໄດ້ມາເຖິງຈຸດແຕກຫັກ ແລະເຂົາໄດ້ໝົດຄວາມອົດທົນກັບຊາວອິສຣາເອນແລ້ວ. ຄວາມໂມໂຫໄດ້ນຳພາໂມເຊ. ພວກເຮົາແຕ່ລະຄົນອາດຈະເຄີຍມາເຖິງຈຸດເດືອດໃນບາງກໍຣະນີ. ຄວາມຫງຸດຫງິດ, ຄວາມຢ້ານ, ແລະຄວາມໂມໂຫສາມາດເຮັດໃຫ້ພວກເຮົາໄປເຖິງຈຸດທີ່ກັບຄືນບໍ່ໄດ້ ຫລືເຖິງຈຸດແຕກຫັກ. ພວກເຮົາຈະຕ້ອງຫລີກເວັ້ນຈາກສິ່ງນີ້ດ້ວຍການເຊື່ອຟັງພຣະເຈົ້າ. ສິ່ງນຶ່ງທີ່ພວກເຮົາສາມາດເຮັດໄດ້ຄືການຢຸດພັກ ແລ້ວຫາຍໃຈໃຫ້ເລິກໆກ່ອນຈະເວົ້າ ຫລືເຮັດສິ່ງໃດສິ່ງນຶ່ງຕໍ່ໄປ. ທ່ານໄດ້ກະທຳແນວໃດທີ່ຈະເອົາຕົວລອດເວລາທ່ານໄປເຖິງຈຸດແຕກຫັກ?

4. ຮັບຜົນຂອງການໂຕ້ຕອບໃນທາງຜິດ (20:12-13)

ຈົດເຊັນບັນຊີ ໒໐:໑໒ ໄດ້ໃຫ້ຜົນຂອງການບໍ່ເຮັດຕາມຄໍາສັ່ງຂອງພຣະເຈົ້າໃນກໍຣະນີນີ້. ແມ່ນແຕ່ຜູ້ນໍາທີ່ດີເລີດ ຍັງສາມາດຜິດພາດໄດ້. ພວກເຮົາຄວນສໍານຶກສເມີວ່າພວກຜູ້ນໍາທີ່ພຣະເຈົ້າໄດ້ຊົງປະທານໃຫ້ກໍເປັນມະນຸດທັມມະດາ. ພວກເຂົາບໍ່ໄດ້ຢູ່ສູງເກີນກວ່າຄວາມຜິດພາດ.

ມີການໂຕ້ວາທີກັນຢ່າງມາກມາຍວ່າ ເປັນຫຍັງພຣະເຈົ້າຈຶ່ງບໍ່ຍອມໃຫ້ໂມເຊແລະອາໂຣນນໍາພາປະຊາຊົນເຂົ້າສູ່ແຜ່ນດິນແຫ່ງພຣະສັນຍາ. ແມ່ນຫຍັງທີ່ພວກເຂົາໄດ້ເຮັດຊຶ່ງຖືວ່າເປັນການຂາດຄວາມເຊື່ອໃນພຣະເຈົ້າ? ຫລືແມ່ນການທະນົງຕົວຂອງໂມເຊບໍ່? ໂມເຊໄດ້ເຄີຍຄິດບໍ່ວ່າເຂົາສາມາດຈະໃຫ້ນໍ້າດື່ມກັບປະຊາຊົນໂດຍການຕີໂງ່ນຫີນ? ຫລືວ່າໂມເຊໄດ້ເປັນຜູ້ນໍາທີ່ບໍ່ສະແດງຄຸນທັມຂອງພຣະເຈົ້າໃນກໍຣະນີນີ້ບໍ່? ແມ່ນການບໍ່ເຮັດຕາມຄໍາສັ່ງຂອງໂມເຊບໍ່? ຫລືວ່າໂມເຊໄດ້ເຂົ້າໃຈຜິດໄປ ເພາະຄັ້ງທໍາອິດໃນອົພຍົບ (ອພຍ 17:1-7) ພຣະເຈົ້າໄດ້ສັ່ງໃຫ້ເຂົາຕີໂງ່ນຫີນເພື່ອຈະໄດ້ນໍ້າ?

ບັນຫາແລະຄວາມກົດດັນຈະບໍ່ເລືອກໜ້າໃຜ; ບໍ່ວ່າທ່ານຈະເປັນພໍ່ແມ່, ເປັນພໍ່ຕູ້ແມ່ຕູ້ທີ່ກໍາລັງລ້ຽງຫລານ, ຄູ່ຄອງໃນຄູ່ສົມຣົດທີ່ມີບັນຫາ, ຫລືພະນັກງານໃນສິ່ງແວດລ້ອມທີ່ລໍາບາກ, ທ່ານຈະພົບກັບບັນຫາ ແລະຖືກຄວາມກົດດັນໃນເວລາທີ່ທ່ານບໍ່ໄດ້ຄາດຝັນໄວ້. ພວກເຮົາທຸກຄົນຈະພົບສິ່ງເຫລົ່ານີ້ໃນຊີວິດ. ພວກເຮົາສາມາດເລືອກວິທີທີ່ຈະໂຕ້ຕອບກັບບັນຫາແລະຄວາມກົດດັນ. ພວກເຮົາສາມາດຕອບໃນທາງຖືກ ຫລືຕອບໃນທາງຜິດ. ສະນັ້ນ ພວກເຮົາຈະຕ້ອງຄິດເຖິງຜົນທີ່ຈະຕາມມາກ່ອນການຕັດສິນໃຈ.

ຈົ່ງຕັດສິນໃຈໃນມື້ນີ້ ວ່າທ່ານຈະເປັນຜູ້ສແວງຫາຄໍາຕອບ. ຕັດສິນໃຈວ່າຈະງຽບຢູ່ຈົນກວ່າທ່ານໄດ້ຄໍາປຶກສາຈາກພຣະເຈົ້າເວລາພົບບັນຫາຫຍຸ້ງຍາກ. ຕັດສິນໃຈວ່າທ່ານຈະເຮັດຕາມທີ່ພຣະເຈົ້າຊົງນໍາພາ. ຕັດສິນໃຈວ່າທ່ານຈະໂຕ້ຕອບບັນຫາໃນທາງທີ່ຖືກຕ້ອງ. ຈົ່ງຕັດສິນໃຈໄວ້ ກ່ອນທີ່ຄວາມກົດດັນນັ້ນຈະເພີ່ມຂຶ້ນ.

<u>ຄໍາຖາມ:</u>

1. ທ່ານຈະເຮັດແນວໃດກັບຄົນທີ່ມັກຈົ່ມວ່າ ແລະຄົນທີ່ມັກຊອກເຣື່ອງ?

2. ທ່ານເຄີຍໄດ້ໄປຫາເຈົ້ານາຍ ເພື່ອຈະໄດ້ຄໍາຕອບສໍາລັບບັນຫາສໍາຄັນໃນບ່ອນທໍາງານຂອງທ່ານບໍ່?

3. ມີພຣະທັມຂໍ້ໃດແດ່ທີ່ຊ່ວຍເຕືອນທ່ານເວລາທ່ານພົບກັບບັນຫາຫຍຸ້ງຍາກ?

4. ທ່ານເຄີຍໄດ້ຂໍຄໍາຕອບຈາກພຣະເຈົ້າສໍາລັບບັນຫາ ແລະໄດ້ພົບວ່າພຣະອົງຊົງໃຫ້ຄໍາຕອບຕົງກັບເວລາບໍ່?

5. ທ່ານມີວິທີທາງໃດທີ່ຈະຕໍ່ສູ້ກັບຄວາມກົດດັນອັນມະຫາສານ?

6. ທ່ານຈະຊ່ວຍເຫລືອຜູ້ນໍາໃນຄຣິສຕະຈັກຂອງທ່ານໄດ້ວິທີໃດ ເວລາພວກເຂົາຖືກກົດດັນ?

ສຈ. ສິດນີ ຄານ

# ບົດຮຽນທີ 8
# ຢ່າຂັດຂວາງພຣະເຈົ້າ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ຈົດເຊັນບັນຊີ 22:1-6, 22-35; 24:10-17
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ຈົດເຊັນບັນຊີ 22--24
ຈຸດສໍາຄັນຂອງບົດຮຽນນີ້: ກິຈກັມຕ່າງໆທີ່ຢາກຂັດຂວາງພຣະເຈົ້າ ແລະພຣະປະສົງຂອງພຣະອົງຈະບໍ່ເກີດຜົນ.
ຄໍາຖາມເພື່ອການສໍາຣວດ: ພວກເຮົາຕ້ອງຮູ້ວ່າໃນທີ່ສຸດຊັຍຊະນະກໍເປັນຂອງພຣະເຈົ້າ ໃນສິ່ງໃດແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ສະພາບໃນຊີວິດຂອງຂ້ອຍວ່າມີແນວໃດແດ່ທີ່ຕ້ອງການໄດ້ຍິນຄໍາວ່າ ໃນທີ່ສຸດຊັຍຊະນະກໍເປັນຂອງພຣະເຈົ້າ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄໍານໍາ

ຄໍາເວົ້າ, ທ່າທີ, ເຈຕນາ, ຈຸດປະສົງ, ແລະການກະທໍາທີ່ຕັ້ງໃຈຈະທໍາລາຍສິ່ງທີ່ພຣະເຈົ້າໄດ້ຊົງຕັ້ງພຣະປະສົງເອົາໄວ້ຈະບໍ່ມີຣິດອໍານາດຕໍ່ສູ້ກັບແຜນການໄຖ່ບາບຂອງພຣະອົງ.

1. ກະສັດ, ຜູ້ປະກາດ, ຄໍາສາບແຊ່ງ, ແລະໂຕລໍ: ຕໍ່ສູ້ກັບພຣະພອນພຣະເຈົ້າບໍ່ໄດ້ (22:1-41)

ຂໍ້ 1 ຂອງພຣະທັມຕອນນີ້ໄດ້ໃຫ້ເບື້ອງຫລັງສໍາລັບພຣະທັມຈົດເຊັນບັນຊີ 22. ຊາວອິສຣາເອັນໄດ້ຕັ້ງຄ້າຍຢູ່ແຄມແມ່ນໍ້າຢໍແດນ ກົງກັນຂ້າມກັບເມືອງເຢຣີໂກ. ເຕັມດ້ວຍຄວາມໝັ້ນໃຈ ເພາະໄດ້ຫຍັບເຂົ້າໃກ້ດິນແດນແຫ່ງພຣະສັນຍາ, ໄພ່ພົນຂອງພຣະເຈົ້າຈະຕ້ອງໄດ້ຢຸດພັກຊົ່ວຄາວ ເພື່ອເຈຣະຈາກັບຄວາມພະຍາຍາມທີ່ຈະຂັດຂວາງແຜນການຂອງພຣະເຈົ້າ ແລະພຣະສັນຍາຂອງພຣະອົງ.

ກະສັດບາຫລາກຊຶ່ງເປັນຜູ້ປົກຄອງໂມອາບ ໄດ້ຫລຽວເຫັນຊາວອິສເອັນຢ່າງຫລວງຫລາຍທີ່ກໍາລັງຕັ້ງຄ້າຍຢູ່ແຄມແມ່ນໍ້າຢໍແດນ ແລະກໍເກີດຄວາມຢ້ານກົວວ່າ ພວກເຂົາຈະມາເອົາຊະນະປະເທດແລະຊັບສິ່ງຂອງຂອງຕົນ. ກະສັດບາຫລາກກໍສແວງຫາຄວາມຊ່ວຍເຫລືອຈາກສິ່ງສັກສິດ ໂດຍການເອີ້ນຜູ້ປະກາດພຣະທັມຊື່ບາລາອາມໃຫ້ມາສາບແຊ່ງຊົນຊາດອິສຣາເອັນ. ບາລາອາມອາດຈະຢູ່ໃນເຂດເມໂຊໂປຕາເມັຽ ຊຶ່ງເປັນບ້ານເກີດຂອງໂຄດລຸງຕາຫລາຍໆຄົນ ຂອງຊາວອິສຣາເອັນ.
ບາລາອາມເຄີຍຮູ້ຈັກຣິດອໍານາດຂອງພຣະຜູ້ເປັນເຈົ້າດີ ແຕ່ເຂົາບໍ່ເຄີຍຜູກພັນຫຍັງກັບພຣະອົງ. ບາລາອາມເປັນ "ມືຮັບຈ້າງ" ແລະອາວຸດຂອງເຂົາຄືຄໍາສາບແຊ່ງ. ເນື່ອງຈາກເຂົາຮູ້ຊື່ສຽງຂອງບາລາອາມ, ກະສັດບາຫລາກຈຶ່ງສົ່ງຄົນໄປຫາເຂົາເພື່ອຈະຈ້າງໃຫ້ສາບແຊ່ງຊົນຊາດອິສຣາເອນ. ທຸກຢ່າງນີ້ໄດ້ເກີດຂຶ້ນໃນຂະນະທີ່ຊາວອິສຣາເອນກໍາລັງພັກຜ່ອນຢູ່ໃນສັນຕິສຸກ ແລະການຄຸ້ມຄອງຂອງພຣະເຈົ້າ.

ໄພ່ພົນຂອງພຣະເຈົ້າບໍ່ຮູ້ເຣື່ອງທີ່ກຳລັງເກີດຂຶ້ນ; ພວກເຂົາບໍ່ຮູ້ວ່າພຣະເຈົ້າກຳລັງສູ້ສົງຄາມເພື່ອພວກຕົນ ໂດຍໃຊ້ທູດສວັນ. ໃນຂະນະທີ່ຊາວອິສຣາເອນກຳລັງນອນຫລັບ, ພຣະເຈົ້າບໍ່ໄດ້ຊົງຫລັບໄຫລ (ພສສ 121:3-4). ຫລາຍຄັ້ງໃນຊີວິດ ພວກເຮົາ, ອາດຈະມີຄົນທີ່ຢາກສາບແຊ່ງເຮົາ, ຢາກທຳລາຍຮ່າງກາຍເຮົາ, ແລະໃຊ້ຄວາມເວົ້າທີ່ຫວັງທຳລາຍເຮົາ, ຫລືທຳລາຍຊື່ສຽງຂອງພວກເຮົາໂດຍທີ່ພວກເຮົາບໍ່ຮູ້ຕົວ. ໃນກໍຣະນີດັ່ງກ່າວນີ້, ພວກເຮົາສາມາດໝັ້ນໃຈໄດ້ວ່າໃນຂະນະທີ່ພວກເຮົາອາດຈະນອນຫລັບຢູ່ ພຣະເຈົ້າໄດ້ຊົງປົກປັກຮັກສາພວກເຮົາຈາກພຣະທີ່ນັ່ງຂອງພຣະອົງ. ພຣະອົງຊົງເປັນທີ່ກຳບັງ ແລະທີ່ລີ້ພັຍຂອງພວກເຮົາ. ບໍ່ມີສິ່ງໃດໃນໂລກທີ່ຈະປ້ອງກັນພວກເຮົາໄດ້ເໝືອນພຣະຜູ້ເປັນເຈົ້າ (ພສສ 61:3 62).

ໃນຄືນນັ້ນພຣະຜູ້ເປັນເຈົ້າໄດ້ຊົງສົນທະນາກັບຜູ້ປະກາດບາລາອາມ. ພຣະອົງໄດ້ຊົງສັ່ງບາລາອາມບໍ່ໃຫ້ໄປກັບຄົນທີ່ບາຫລາກໄດ້ສົ່ງມາ ແລະບໍ່ໃຫ້ສາບແຊ່ງຊົນຊາດອິສຣາເອັນ ເພາະພຣະອົງຊົງເປັນຜູ້ໃຫ້ພຣະພອນກັບພວກເຂົາ. ພຣະເຈົ້າຜູ້ຊົງຄວບຄຸມທຸກຢ່າງໃນໂລກ ສາມາດທີ່ຈະປ່ຽນແປງແຜນການຂອງມະນຸດໄດ້ທຸກເວລາ. ພຣະເຈົ້າບໍ່ຊົງອະນຸຍາດໃຫ້ບາລາອາມສາບແຊ່ງຊາວອິສຣາເອັນເພາະພຣະອົງໄດ້ຊົງໃຫ້ສັນຍາກັບອັບຣາຮາມວ່າຈະອວຍພຣະພອນຊົນຊາດນີ້ (ປຖກ 12:3). ພຣະພອນຂອງພຣະເຈົ້າໄດ້ສືບຕໍ່ໄປເຖິງຢາໂຄບ ແລະເອຊາວ (ປຖກ 27), ຈາກຢາໂຄບເຖິງລູກສິບສອງຄົນ (ປຖກ 49), ແລະເຖິງສມັຍຂອງໂມເຊ (ອພຍ 6; ພບຍສ 33). ຖ້າພຣະເຈົ້າຊົງໃຫ້ພອນເຮົາ ກຳລັງມະນຸດບໍ່ສາມາດທີ່ຈະກີດກັ້ນພຣະພອນນັ້ນໄດ້. ພຣະພອນຂອງພຣະເຈົ້າ ອາດຈະປະກອບດ້ວຍຫລາຍຢ່າງເຊັ່ນຣິດເດດ, ການປົກປັກຮັກສາ, ແລະອຸປນິສັຍໃນຊີວິດຂອງພວກເຮົາ. ພຣະພອນຂອງພຣະເຈົ້າຈະແຜ່ໄປເຖິງມະນຸດທັງຫລາຍໃນໂລກ (ພສສ 67).

ກະສັດບາຫລາກບໍ່ໄດ້ລົດລະໃນຄວາມພະຍາຍາມຂອງເຂົາ; ຫລັງຈາກຮູ້ຂ່າວວ່າບາລາອາມຈະບໍ່ສາບແຊ່ງຊາວອິສຣາເອນ ເຂົາຈຶ່ງສົ່ງຄະນະທູດຊຸດທີສອງໄປຫາຜູ້ປະກາດພຣະທັມ ແລະສັນຍາວ່າຈະໃຫ້ຄ່າຕົວເພີ່ມຂຶ້ນ. ໃນຕອນນີ້, ພຣະເຈົ້າໄດ້ຊົງອະນຸຍາດໃຫ້ບາລາອາມໄປກັບພວກເຂົາ ແຕ່ໃຫ້ເຮັດຕາມທີ່ພຣະອົງຊົງບອກ (22:20). ມື້ຕໍ່ມາບາລາອາມ ກໍຕຽມຕົວເພື່ອຈະໄປຫາກະສັດບາຫລາກ; ແຕ່ພຣະເຈົ້າໄດ້ຊົງຕໍ່ສູ້ແຜນການນັ້ນ ໂດຍໃຊ້ທູດສວັນໄປຂວາງທາງຂອງບາລາອາມເຖິງສາມຄັ້ງ; ເມື່ອໂຕລໍບໍ່ສາມາດທີ່ຈະເດີນຕໍ່ໄປ ເຂົາຈຶ່ງໝອບລົງ. ບາລາອາມເກີດໂມໂຫຈຶ່ງຕີໂຕລໍ. ໃນທັນໃດນັ້ນ ພຣະເຈົ້າໄດ້ຊົງເປີດປາກຂອງໂຕລໍ ແລະໂຕລໍກໍໄດ້ຖາມບາລາອາມເຣື່ອງການທຸບຕີຂອງເຂົາ. ພຣະເຈົ້າຊົງເປີດຕາຂອງບາລາອາມແລະເຂົາກໍໄດ້ເຫັນທູດສວັນຂອງພຣະເຈົ້າ; ເຂົາຈຶ່ງໝູບໜ້າລົງ. ທູດສວັນໄດ້ໃຫ້ເຫດຜົນກັບຜູ້ປະກາດວ່າ, "ເຮົາມາທີ່ນີ້ເພື່ອຂັດຂວາງເຈົ້າໄວ້ ເພາະເຮົາເຫັນວ່າເຈົ້າບໍ່ຄວນຈະໄປ" (22:32). ເມື່ອບາລາອາມສະແດງການກັບໃຈໃໝ່, ທູດສວັນຈຶ່ງປ່ອຍເຂົາເດີນທາງຕໍ່ໄປ ແລະສັ່ງໃຫ້ກ່າວສິ່ງທີ່ເຮົາບອກເຈົ້າກ່າວເທົ່ານັ້ນ "(22:35). ເຣື່ອງດັ່ງກ່າວນີ້ສະແດງໃຫ້ເຫັນອີກເທື່ອນຶ່ງວ່າ ກຳລັງມະນຸດບໍ່ອາດຈະຂັດຂວາງແຜນການຂອງພຣະເຈົ້າໄດ້.

2. <u>ພອນກັບມາ: ຈາກສາບແຊ່ງເຖິງພຣະພອນ, ພຣະປະສົງຂອງພຣະເຈົ້າຈະຊະນະ</u> (23:1--24:25)
ພຣະທັມຈົດເຊັນບັນຊີ 23--24 ໄດ້ບັນທຶກວິທີຕ່າງໆທີ່ກະສັດບາຫລາກໄດ້ພະຍາຍາມໃຊ້ເພື່ອຈະສາບແຊ່ງຊົນຊາດອິສຣາເອັນ. ສາມຄັ້ງທີ່ກະສັດໄດ້ສັ່ງຜູ້ປະກາດບາລາອາມໃຫ້ໄປສາບແຊ່ງພວກເຂົາ ແຕ່ສາມຄັ້ງຄຳສາບແຊ່ງໄດ້ກັບກາຍເປັນພຣະພອນສຳລັບຊາວອິສຣາເອັນ. ໃນທີ່ສຸດບາຫລາກກໍຍອມແພ້; ເຂົາສັ່ງບາລາອາມໃຫ້ກັບບ້ານ ແລະບໍ່ຍອມຈ່າຍບຳເໜັດໃຫ້ (24:11). ຜູ້ປະກາດພຣະທັມໄດ້ບອກກັບກະສັດວ່າເຂົາບໍ່ສາມາດທີ່ຈະຝ່າຝືນຄຳສັ່ງຂອງພຣະຜູ້ເປັນເຈົ້າໄດ້, ບໍ່ວ່າເຂົາຈະໄດ້ຄ່າຈ້າງສູງເທົ່າໃດກໍຕາມ. ໃນຂໍ້ 24:16, ບາລາອາມໄດ້ກ່າວເຖິງພຣະນາມສາມຢ່າງຂອງພຣະເຈົ້າ: ພຣະເຈົ້າອົງມີຣິດອຳນາດ, ພຣະເຈົ້າອົງສູງສຸດ, ແລະພຣະເຈົ້າອົງບໍຣິບູນທຸກຢ່າງ. ບາລາອາມໄດ້ທຳນວາຍວ່າຈະມີກະສັດອົງນຶ່ງເກີດຂຶ້ນມາຈາກຊົນຊາດອິສຣາເອນ. ຄຳເວົ້ານີ້ອາດຈະໝາຍເຖິງກະສັດດາວິດ; ເພາະໃນ

ພຣະທັມ 2 ຊາມູເອນ 8:2, 13-14, ພວກເຮົາໄດ້ຮຽນຮູ້ວ່າຊາວໂມອາບໄດ້ຕົກຢູ່ພາຍໃຕ້ອຳນາດຂອງກະສັດດາວິດ. ໃນຂະນະດຽວກັນຄຳທຳນວາຍຂອງບາລາອາມນີ້ ອາດຈະໝາຍເຖິງພຣະເມຊີອາຜູ້ທີ່ພຣະເຈົ້າໄດ້ຊົງສັນຍາໄວ້.

ຄຳທຳນວາຍຂອງບາລາອາມໃນພຣະທັມຈົດເຊັນບັນຊີ 24:15-17 ໄດ້ບອກເຖິງຄວາມຫວັງແລະພຣະສັນຍາ. ບາລາອາມເປັນຜູ້ປະກາດທີ່ຢືນຢູ່ຣະວ່າງຄົນສອງສມັຍ. ຄຳເວົ້າຂອງບາລາອາມໄດ້ເວົ້າເຖິງລັກສະນະຂອງຄົນລຸ້ນໃໝ່ທີ່ຈະໄປຢຶດຄອງແຜ່ນດິນທີ່ພຣະເຈົ້າໄດ້ຊົງສັນຍາໄວ້ສຳລັບຊາວອິສຣາເອັນ. ພຣະເຈົ້າຊົງເປັນຜູ້ຊະນະໃນຊີວິດ, ໃນປະວັດສາດ, ແລະນິຣັນດອນ. ບໍ່ມີແຜນການໃດ ຫລືໂຄງການໃດທີ່ຈະເອົາຊະນະແຜນການ ແລະພຣະປະສົງຂອງພຣະເຈົ້າ. ພຣະອົງຊົງເປັນຜູ້ມີຣິດອຳນາດ, ຜູ້ຍິ່ງໃຫຍ່ສູງສຸດ, ແລະຜູ້ສົມບູນທຸກຢ່າງ.

ຄວາມຮູ້ເທົ່າບໍ່ເຖິງການຂອງພວກເຮົາກ່ຽວກັບພຣະປະສົງຂອງພຣະເຈົ້າ ແລະການຄຸ້ມຄອງຂອງພຣະອົງບໍ່ສາມາດທີ່ຈະປ່ຽນແປງພັນທະກິດຂອງພຣະອົງສຳລັບຊີວິດພວກເຮົາ. ເງິນຄຳ, ສິນບົນ, ແລະຄ່າຈ້າງບໍ່ມີອຳນາດເໜືອພຣະປະສົງຂອງພຣະເຈົ້າ ແລະແຜນການໄຖ່ມະນຸດຂອງພຣະອົງ. ແຜນການຂອງພຣະເຈົ້າຈະສຳເຣັດຕາມຄຳທຳນວາຍກ່ຽວກັບພຣະທີ່ນັ່ງຂອງດາວິດ, ເຊື້ອພັນຂອງແຈດສີ, ແລະພຣະເມຊີອາ. ພຣະເຈົ້າຊົງສັດຊື່ຕໍ່ພຣະຄຳຂອງພຣະອົງ. ພຣະອົງຈະອວຍພອນຜູ້ທີ່ອວຍພອນໄພ່ພົນຂອງພຣະອົງ ແລະພຣະອົງຈະສາບແຊ່ງຜູ້ທີ່ສາບແຊ່ງໄພ່ພົນຂອງພຣະອົງ.

<u>ຄຳຖາມ</u>:

1. ທ່ານເຄີຍໄດ້ຮູ້ພາຍຫລັງບໍ່ ວ່າມີຫລາຍຄົນໄດ້ຕໍ່ຕ້ານທ່ານ ຫລືການຮັບໃຊ້ຂອງທ່ານ ໂດຍທີ່ທ່ານບໍ່ຮູ້ຕົວເລີຍ?

2. ການຮູ້ຄວາມຈິງວ່າພຣະເຈົ້າຈະເປັນຜູ້ຊັຍຊະນະໃນຊີວິດ ຊ່ວຍທ່ານໃຫ້ເບິ່ງອຸປສັກຕ່າງໆໃນທຳນອງໃດ?

3. ການຮູ້ວ່າພຣະເຈົ້າຈະຊົງປົກປັກຮັກສາ ແລະຈະຊົງປະທານສິ່ງທີ່ຂາດເຂີນ ໄດ້ປ່ຽນແປງທ່າທີຂອງທ່ານແນວໃດແດ່ເວລາທ່ານພົບກັບອຸປສັກໃນຊີວິດ?

4. ການຮູ້ວ່າຊັຍຊະນະຈະເປັນຂອງພຣະເຈົ້າໃນທີ່ສຸດ ຈະເປັນປໂຍດແນວໃດແດ່ເມື່ອພົບກັບອຸປສັກໃນປັດຈຸບັນ?

ສຈ. ສິດນີ ຄານ

## ບົດຮຽນທີ 9
## ເຂົ້າໃຈເຣື່ອງຂອງຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະບັນຍັດສອງ 4:9-14, 32-40
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະບັນຍັດສອງ 1:1-- 4:40
ຈຸດສຳຄັນຂອງບົດຮຽນນີ້: ເບິ່ງຊີວິດຂອງພວກເຮົາຈາກພຣະປະສົງຂອງພຣະເຈົ້າຈະສາມາດຊ່ວຍເຮົາໃຫ້ເຂົ້າໃຈຊີວິດນີ້ດີຂື້ນ.

ຄຳຖາມເພື່ອການສຳຣວດ: ເວລາທ່ານຫລຽວເບິ່ງຊີວິດຂອງຕົນເອງ, ທ່ານກຳລັງເຫັນຫຍັງແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອສລູບເບິ່ງປະວັດສາດຂອງອິສຣາເອນໃນພຣະທັມນີ້ ແລະເພື່ອຈະເຂົ້າໃຈຊີວິດຂອງຕົວເອງ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

### ຄຳນຳ

ໂມເຊໄດ້ບອກຊົນຊາດອິສຣາເອນໃຫ້ລະນຶກເຖິງປະວັດສາດຂອງພວກເຂົາໂດຍຫລຽວເບິ່ງໃນສິ່ງທີ່ພຣະເຈົ້າໄດ້ຊົງກະທຳເພື່ອພວກເຂົາ. ຖ້າທົບທວນເບິ່ງການເດີນທາງທີ່ຜ່ານມາ, ພວກເຂົາຈະໄດ້ເຫັນພຣະປະສົງຂອງພຣະເຈົ້າ. ໃນຂະນະທີ່ກຳລັງຢືນຢູ່ຕໍ່ໜ້າແຜ່ນດິນແຫ່ງພຣະສັນຍາ, ພວກເຂົາໄດ້ຄຳນຶງເຖິງຄວາມສັດຊື່ຂອງພຣະເຈົ້າ ແລະການຂາດຄວາມເຊື່ອຂອງພວກຕົນໃນລະຍະທີ່ຜ່ານມາ.

1. ທີ່ແຄມຊາຍແດນ (1:1--3:29)

ໃນພຣະບັນຍັດສອງບົດທີ 1 ເຖິງ 3, ພວກເຮົາໄດ້ຍິນເຣື່ອງຂອງຊາວອິສຣາເອນອີກເທື່ອນຶ່ງ. ໃນຂະນະທີ່ໄພ່ພົນຂອງພຣະເຈົ້າກຳລັງຢືນຢູ່ທີ່ຊາຍແດນ ແລະຫລຽວໄປທາງຕາເວັນຕົກຊຶ່ງແມ່ນແຜ່ນດິນແຫ່ງພຣະສັນຍາ, ໂມເຊໄດ້ເຕືອນພວກເຂົາໃຫ້ລະນຶກເຖິງປະວັດສາດຂອງພວກເຂົາ. ໂມເຊໄດ້ເລີ້ມຕົ້ນແຕ່ພູຊີນາຍຈົນເຖິງການເດີນທາງ ພາຍໃຕ້ການນຳພາຂອງເຂົາຜ່ານຖິ່ນແຫ້ງແລ້ງກັນດານແລະດິນແດນເອໂດມ, ໂມອາບ, ອຳໂມນ, ພ້ອມທັງດິນແດນຂອງສີໂຫນແລະໂອກ. ນອກນັ້ນໂມເຊຍັງໄດ້ເວົ້າເຖິງການສູ້ຮົບ, ບາງຄັ້ງຮ້າຍແຮງ, ກັບຄົນຕ່າງຊາດໃນລະຍະການເດີນທາງມາສູ່ດິນແດນທີ່ພຣະເຈົ້າໄດ້ຊົງສັນຍາໄວ້.

ໂມເຊໄດ້ຖືກພຣະເຈົ້າລົງໂທດເພາະຄວາມຜິດບາບຂອງຊາວອິສຣາເອນ (1: 34-37). ເຖິງວ່າເຂົາຈະບໍ່ມີສ່ວນໃນຄວາມຢ້ານກົວ ຫລື ການຂາດຄວາມເຊື່ອຂອງຊາວອິສຣາເອນກໍຕາມ, ແຕ່ເຂົາຈະຕ້ອງທົນທຸກທໍຣະມານໃນຖານະຕົວແທນຂອງປະຊາຊົນ. ໂມເຊບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນການາອານ; ເຂົາໄດ້ບອກຊາວອິສຣາເອນວ່າ, "ແຕ່ຍ້ອນ

ພວກເຈົ້າ ພຣະຜູ້ເປັນເຈົ້າຈຶ່ງຄຽດຮ້າຍຂ້າພະເຈົ້າ" (3:26). ໂຢຊວຍໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ນໍາຊົນຊາດອິສຣາເອນຂ້າມແມ່ນໍ້າຢໍແດນ ເພື່ອໄປຍຶດຄອງດິນແດນທີ່ພຣະເຈົ້າໄດ້ຊົງສັນຍາໄວ້ສໍາລັບພວກເຂົາ. ພຣະບັນຍັດສອງບົດທີ 4 ເລີ້ມຕົ້ນເມື່ອຊາວອິສຣາເອນມາເຖິງຊາຍແດນຂອງດິນແດນແຫ່ງພຣະສັນຍາ.

## 2. <u>ພຣະເຈົ້າຜູ້ຊົງຢືນຢູ່ໃກ້</u> (4:1-8)

ສຽງຟ້າຮ້ອງໄດ້ເຮັດໃຫ້ເດັກນ້ອຍເກີດຄວາມຢ້ານກົວ. ເດັກຊາຍຄົນນຶ່ງຢືນຮ້ອງໄຫ້ຢູ່ໃນຫ້ອງເພາະພາຍຸຝົນ. ສຽງຟ້າຮ້ອງແລະແສງຟ້າແມບເຮັດໃຫ້ລາວຕົກສະເງີ້. ພໍໄດ້ຍິນສຽງຮ້ອງໄຫ້, ຜູ້ເປັນພໍ່ກໍຮີບແລ່ນມາຫາລູກ ພ້ອມດ້ວຍປອບໃຈວ່າ, "ບໍ່ຕ້ອງຢ້ານດອກລູກ, ພຣະເຈົ້າຊົງຢູ່ນໍາເຈົ້າ." ຝ່າຍລູກກໍຕອບໃນທັນໃດວ່າ, "ຂ້ານ້ອຍຮູ້ດີ, ແຕ່ຂ້ານ້ອຍຢາກເຫັນຜູ້ທີ່ມີເນື້ອມີໜັງ. ໃຫ້ພໍ່ນອນຢູ່ນີ້ກໍແລ້ວກັນ, ຂ້ານ້ອຍຂໍໄປນອນຫ້ອງນໍາແມ່." ພວກເຮົາແຕ່ລະຄົນຕ່າງກໍຕ້ອງການໃຫ້ພຣະເຈົ້າຢູ່ໃກ້ເຮົາ. ພວກເຮົາຢາກໃຫ້ພຣະອົງຢູ່ຄຽງຂ້າງເຮົາ ຈົນພວກເຮົາຮູ້ສຶກວ່າພຣະອົງຊົງມີເນື້ອໜັງເໝືອນກັບມະນຸດ.

ຫລັງຈາກທົບທວນປະວັດສາດອິສຣາເອນແລ້ວ, ໂມເຊຈຶ່ງບອກປະຊາຊົນໃຫ້ພາກັນຮຽນຈາກສິ່ງທີ່ຜ່ານມາ, ໃຫ້ເຫັນພຣະຫັດຂອງພຣະເຈົ້າໃນການເດີນທາງຂອງພວກເຂົາ, ແລະໃຫ້ມຸ່ງໜ້າຕໍ່ໄປໂດຍການເຊື່ອຟັງພຣະບັນຍັດຂອງພຣະເຈົ້າ. ເຂົາໄດ້ເຕືອນປະຊາຊົນເຖິງເຣື່ອງທີ່ເກີດຂຶ້ນທີ່ພູເປອໍ (4:3; ເບິ່ງ ຈົດເຊັນບັນຊີ 25:1-5). ຜູ້ຊາຍຊາວອິສຣາເອນໄດ້ສົມສູ່ກັບຍິງຊາວໂມອາບ ແລະໄດ້ເຮັດໃຫ້ພຣະເຈົ້າຊົງໂກດຮ້າຍພວກເຂົາ. ຕົວຢ່າງນີ້ຈະເປັນຄໍາເຕືອນສໍາລັບພວກເຂົາເພາະເຂົາທັງຫລາຍກໍາລັງຈໍາຕ້ອງຕັດສິນໃຈເອົາເອງວ່າຈະເຊື່ອຟັງພຣະຜູ້ເປັນເຈົ້າຫລືບໍ່. ສິ່ງສໍາຄັນທີ່ສຸດຄືໂມເຊໄດ້ອະທິບາຍວ່າບໍ່ມີຊົນຊາດໃດໆທີ່ຈະມີພຣະເຈົ້າຜູ້ຊົງຢູ່ໃກ້ເໝືອນພວກເຂົາ, ພຣະເຈົ້າຜູ້ຊົງຕອບຄໍາເອີ້ນຂອງພວກເຂົາ (ພບຍສ 4:7).

## 3. <u>ຂໍທ່ານຢ່າລືມ</u> (4:9-14)

ຜູ້ຮັບໃຊ້ຄົນນຶ່ງຈາກຄຣິສຕະຈັກຂອງພວກເຮົາໄດ້ໄປຢ້ຽມຄົນປ່ວຍຜູ້ຍິງວັຍຊະຣາຄົນນຶ່ງທີ່ໂຮງພະຍາບານ. ຍິງວັຍຊະຣາຜູ້ນີ້ຍັງມີຫລານສາວຄົນນຶ່ງທີ່ຢູ່ເປັນເພື່ອນໃນຫ້ອງ. ໃນຂະນະທີ່ຜູ້ຮັບໃຊ້ກໍາລັງໂອ້ລົມກັບຄົນປ່ວຍຢູ່ນັ້ນ, ຫລານສາວກໍພະຍາຍາມຕັດຄໍາເວົ້າວ່າ, "ເຈົ້າຄົງຈະຮູ້ວ່າແມ່ຕູ້ຈື່ຫຍັງບໍ່ໄດ້ດີ." ໃນທັນໃດນັ້ນ, ຍິງຊະຣາກໍຢຸດ ແລະຫລຽວເບິ່ງຜູ້ຮັບໃຊ້; ນາງຍິກຄິ້ວ ແລ້ວເວົ້າວ່າ, "ມີບາງຢ່າງກໍບໍ່ເປັນໜ້າຈື່."

ບົດຮຽນສໍາຄັນໃນຊີວິດຢ່າງນຶ່ງຄືການຮຽນຈື່ ໃນສິ່ງທີ່ຄວນຈື່ ແລະລືມໃນສິ່ງທີ່ຄວນລືມ. ພວກເຮົາຄວນລືມເມື່ອຄົນເຮັດໃຫ້ເຮົາເຈັບໃຈ, ເມື່ອຄົນຫັກຫລັງເຮົາ, ແລະເມື່ອຄົນເຮັດຜິດຕໍ່ເຮົາ. ເວລາພວກເຮົາເກັບຄວາມຮ້າຍ ແລະຄວາມຂົມຂື່ນໄວ້, ພວກເຮົາກໍທໍາລາຍຕົວເອງ ແລະ ເຮັດໃຫ້ຄົນອື່ນເປັນຜູ້ບັງຄັບເຮົາ. ມີບາງຢ່າງທີ່ພວກເຮົາບໍ່ຄວນຈົດຈໍາໄວ້. ໃນຂະນະດຽວກັນ, ກໍມີອີກຫລາຍໆຢ່າງທີ່ພວກເຮົາຄວນຈົດຈໍາໄວ້. ພວກເຮົາຄວນຈົດຈໍາສິ່ງຕ່າງໆທີ່ພຣະເຈົ້າໄດ້ທໍາກັບພວກເຮົາ. ພວກເຮົາຄວນຈົດຈໍາສິ່ງທີ່ ພຣະເຈົ້າໄດ້ຊ່ວຍພວກເຮົາໃນຊີວິດ ຕັ້ງແຕ່ຕົ້ນຈົນເຖິງປັດຈຸບັນ. ພວກເຮົາຈະຕ້ອງຮູ້ວ່າພຣະເຈົ້າຊົງມີແຜນການ ແລະ ມີເສັ້ນທາງໄວ້ສໍາລັບພວກເຮົາແຕ່ລະຄົນ.

ຊາວອິສຣາເອນໄດ້ເຫັນສີພຣະຫັດຂອງພຣະເຈົ້າທໍາງານໃນຕອນອົພຍົບອອກຈາກເອຢິບ ແລະໃນການເດີນທາງຂອງພວກເຂົາຜ່ານທົ່ງໂມອາບ. ພວກເຂົາໄດ້ເຫັນການນໍາພາຂອງພຣະເຈົ້າໃນການເດີນທາງສູ່ດິນແດນແຫ່ງພຣະສັນຍາ. ໂມເຊໄດ້ສັ່ງພວກເຂົາໃຫ້ຈົດຈໍາທຸກຢ່າງທີ່ພຣະເຈົ້າໄດ້ຊົງເຮັດເພື່ອພວກເຂົາ. ໂມເຊໄດ້ສັ່ງພວກເຂົາບໍ່ໃຫ້ລືມການເຊື່ອຟັງ ແລະການບໍ່ຍອມເຊື່ອຟັງຂອງພວກເຂົາ, ຄວາມສໍາເຣັດ ແລະຄວາມພາດຫວັງຂອງພວກເຂົາ, ແລະຄວາມສັດຊື່

ຂອງພຣະເຈົ້າເຖິງວ່າບາງຄັ້ງພວກເຂົາພາກັນຂາດຄວາມເຊື່ອ. ໂມເຊຕ້ອງການໃຫ້ປະຊາຊົນທັງຫລາຍເຂົ້າໃຈວ່າຖ້າພວກເຂົາບໍ່ສັດຊື່ຕໍ່ພຣະເຈົ້າກໍສະແດງວ່າພວກເຂົາຍັງບໍ່ຕຽມພ້ອມທີ່ຈະເຂົ້າໄປຍຶດຄອງແຜ່ນດິນແຫ່ງພຣະສັນຍາ.

ໂມເຊໄດ້ກ່າວເຖິງຕອນທີ່ເຂົາໄປຮັບພຣະບັນຍັດສິບປະການ ຊຶ່ງເປັນພຣະບັນຍັດສຳລັບຄົນທຸກສມັຍ. ຊາວອິສຣາເອນໄດ້ຢືນລໍຖ້າເຂົາທີ່ຕີນພູຊຶ່ງມີເມກແລະຄວັນໄຟກຸ້ມຢູ່. ພຣະເຈົ້າໄດ້ຊົງເວົ້າກັບພວກເຂົາຈາກແປວໄຟ ແລະພວກເຂົາໄດ້ຍິນພຣະສຸຣະສຽງ (4:12). ພຣະເຈົ້າໄດ້ຊົງຈາລຶກພຣະບັນຍັດໄວ້ໃນຫີນສອງແຜ່ນ. ພຣະອົງໄດ້ຊົງໃຫ້ຄຳແນະນຳແກ່ໄພ່ພົນຂອງພຣະອົງເພື່ອພວກເຂົາຈະໄດ້ໃຊ້ຊີວິດໃຫ້ເປັນປໂຍດ   ແລະຊີວິດທີ່ອຸດົມສົມບູນໃນແຜ່ນດິນໃໝ່ທີ່ພວກເຂົາກຳລັງຈະຂ້າມໄປຍຶດຄອງເປັນກັມມະສິດ.

4. <u>ບໍ່ມີໃຜອີກແລ້ວ</u> (4:32-40)

ໃນ 4:15-31, ໂມເຊໄດ້ຕັກເຕືອນປະຊາຊົນບໍ່ໃຫ້ຂາບໄຫວ້ຮູບໂຄຣົບ. ພຣະເຈົ້າເປັນພຣະເຈົ້າຜູ້ຊົງຫຶງຫວງ ແລະພຣະອົງຈະບໍ່ອະນຸຍາດໃຫ້ໄພ່ພົນຂອງພຣະອົງໄປກົ້ມຂາບຫລືນະມັສການສິ່ງອື່ນ ຫລືຮູບໂຄຣົບອື່ນໆ ຊຶ່ງຮວມທັງພວກທູດສວັນທັງຫລາຍ (4:15-19). ການໄຫວ້ພະທຽມແມ່ນການພະຍາຍາມຄວບຄຸມພຣະເຈົ້າ, ການປ່ຽນພຣະເຈົ້າໃຫ້ເປັນສິ່ງຂອງ, ແລະການສ້າງພຣະເຈົ້າຕາມໃຈຂອງຕົວເອງ. ມັນເປັນໄປບໍ່ໄດ້ທີ່ສິ່ງທີ່ຖືກສ້າງຂຶ້ນມາຈະກັບໄປສ້າງຮູບພຣະຜູ້ເປັນເຈົ້າຜູ້ຊົງສ້າງທຸກຢ່າງ. ບໍ່ມີພຣະຂອງປະເທດໃດຈະໄປທຽບເທົ່າກັບພຣະເຈົ້າຂອງຊາວອິສຣາເອນ. ພຣະອົງໄດ້ຊົງນຳຊົນຊາດນີ້ໃຫ້ມາເປັນໄພ່ພົນຂອງພຣະອົງ  ແລະໄດ້ຊົງນຳພວກເຂົາອອກມາຈາກການເປັນຂ້າທາດຂອງຊາວເອຢິບ.   ພຣະອົງຊົງເຮັດທຸກຢ່າງນີ້ເພື່ອຊາວອິສຣາເອນຈະໄດ້ຮູ້ວ່າພຣະອົງຄືພຣະເຈົ້າອົງທ່ຽງແທ້ ແລະບໍ່ມີພຣະອົງໃດອີກ ນອກຈາກພຣະອົງ (4:35).

ຊົນຊາດອິສຣາເອັນເຊື່ອສເມີວ່າມີພຣະເຈົ້າອົງທ່ຽງແທ້ພຽງອົງດຽວ.  ສາສນາຂອງພວກເຂົາເຈົ້າຢັ້ງຢືນເຣື່ອງພຣະເຈົ້າຜູ້ຊົງສ້າງ, ຜູ້ຊົງໂຜດໃຫ້ພົ້ນ, ຜູ້ຊົງຮັກສາຊີວິດ, ແລະບໍ່ມີພຣະອື່ນນອກຈາກພຣະອົງ.  ເປົ້າໝາຍອັນສຳຄັນຂອງພຣະບັນຍັດທີສອງຄືການເຕືອນໄພ່ພົນຂອງພຣະເຈົ້າບໍ່ໃຫ້ໄປຮັບໃຊ້ແລະນະມັສການພຣະຂອງຄົນຕ່າງຊາດ. ຄົນຕ່າງຊາດທີ່ຢູ່ໃກ້ຄຽງພວກເຂົາອາດຈະເຊື້ອເຊີນເຂົາໃຫ້ເຂົ້າຮ່ວມພິທີຕ່າງໆ, ແຕ່ຊາວອິສຣາເອັນຈະຕ້ອງຕັ້ງໝັ້ນຢູ່ກັບພຣະຜູ້ເປັນເຈົ້າຜູ້ຊົງໂຜດພວກເຂົາໃຫ້ພົ້ນຈາກການເປັນທາດທີ່ເອຢິບ; ພວກເຂົາຈະຕ້ອງຈົດຈຳຄຳສັນຍາທີ່ພູຊີນາຍ.

ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າໃນສວັນແລະເທິງແຜ່ນດິນໂລກ, ແລະ "ບໍ່ມີພຣະອົງອື່ນອີກ"(4:39).  ສັງຄົມຂອງເຮົາຖືກລຸກລາມຈາກປັສຍາທີ່ບອກວ່າພວກເຮົາຈະນະມັສການພຣະໃດກໍໄດ້. "ຄວາມຄິດສມັຍໃໝ່" ບອກວ່າພຣະເຈົ້າບໍ່ມີ. ຄວາມຄິດທີ່ເກີດຂຶ້ນຫລັງຈາກຄວາມຄິດສມັຍໃໝ່ກໍບອກວ່າ  <u>ພຣະມີຫລາຍອົງ ພວກເຮົາຈະນະມັສການອົງໃດກໍໄດ້. ທຸກສາສນາຖືກໝົດ ແລະທຸກຄົນຈະໄປເຖິງບ່ອນດຽວກັນ.</u>

ຊົນຊາດອິສຣາເອນໃນສມັຍເກົ່າໃຊ້ຊີວິດຢູ່ຖ້າມກາງສັງຄົມທີ່ເຊື່ອວ່າມີພຣະຫລາຍໆອົງ,   ເໝືອນກັບສມັຍຂອງພວກເຮົາ. ແຕ່ໂມເຊໄດ້ປະກາດຢ່າງເຕັມທີ່ວ່າມີພຣະເຈົ້າອົງທ່ຽງແທ້ພຽງອົງດຽວເທົ່ານັ້ນ (4:39). ພຣະອົງນັ້ນຄືພຣະເຈົ້າຂອງຊາວອິສຣາເອນ ຜູ້ຊົງໂຜດພວກເຂົາອອກຈາກການເປັນທາດທີ່ປະເທດເອຢິບ,  ຜູ້ຊົງໃຫ້ພຣະບັນຍັດສິບປະການເພື່ອພວກເຂົາຈະໄດ້ດຳເນີນຊີວິດຕາມນັ້ນ, ແລະຜູ້ຊົງຢູ່ກັບພວກເຂົາໃນການເດີນທາງຄັ້ງຍິ່ງໃຫຍ່ນີ້.   ໂມເຊໄດ້ຮຽກຮ້ອງຊາວອິສຣາເອນໃຫ້ລະນຶກເຖິງທຸກຢ່າງທີ່ພຣະເຈົ້າໄດ້ຊົງກະທຳຖ້າມກາງພວກເຂົາ.

<u>ພິຈາຣະນາເບິ່ງຊີວິດຂອງທ່ານ</u>

ທ່ານຕີຄວາມໝາຍຊີວິດຂອງທ່ານວິທີໃດ? ທ່ານສາມາດເບິ່ງຄືນຫລັງແລະເຫັນການນໍາພາຂອງພຣະເຈົ້າບໍ່? ທ່ານສາມາດເບິ່ງຄືນຫລັງແລະເຫັນບໍ່ວ່າ ຖ້າພຣະເຈົ້າບໍ່ໄດ້ຊົງນໍາພາທ່ານອາດຈະໄປຜິດທາງ? ພຣະເຈົ້າໄດ້ຊົງຮັກສາທ່ານໄວ້ວິທີໃດແດ່? ພຣະອົງໄດ້ຊົງນໍາພາທ່ານວິທີໃດແດ່? ທ່ານສາມາດເຫັນເວລາທີ່ທ່ານບໍ່ໄດ້ເຊື່ອຟັງ ແລະທ່ານໄດ້ຮັບຄວາມຍາກລໍາບາກສໍາລັບຕົວເອງ ແລະຄອບຄົວບໍ່? ການຈົດຈໍາການນໍາພາຂອງພຣະເຈົ້າໃນຊີວິດທີ່ຜ່ານມາຈະເປັນພະລັງສໍາລັບການດໍາເນີນຊີວິດຕໍ່ໄປໃນຄວາມເຊື່ອ.

<u>ຄໍາຖາມ:</u>

1. ທ່ານສາມາດຈື່ໄດ້ຕອນໃດວ່າພຣະເຈົ້າຊົງຢູ່ໃກ້ທ່ານ ເວລາທ່ານເອີ້ນໃຫ້ພຣະອົງຊ່ວຍເຫລືອ (4:7)?

2. ເປັນຫຍັງພວກເຮົາມັກລືມສິ່ງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໃນຊີວິດຂອງເຮົາ?

3. ແມ່ນຫຍັງຄືວິທີທີ່ດີທີ່ສຸດສໍາລັບການເວົ້າເຣື່ອງຄວາມເຊື່ອກັບລູກ ແລະຫລານ?

4. ເປັນຫຍັງຄຣິສຕຽນຈຶ່ງສາມາດບອກໄດ້ວ່າ ມີທາງດຽວທີ່ຈະລອດພົ້ນ ໃນເມື່ອຄົນທັງຫລາຍຈາກສາສນາອື່ນໆ ກໍນະມັສການພຣະຂອງພວກເຂົາດ້ວຍຄວາມຈິງໃຈ ແລະດ້ວຍຄວາມເສັງສະລະ?

ສຈ. ສິດນີ ຄານ

# ບົດຮຽນທີ 10
# ຄຳສັ່ງສິບຂໍ້ສຳລັບຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະບັນຍັດສອງ 5: 1-21
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະບັນຍັດສອງ 5
ຈຸດສຳຄັນຂອງບົດຮຽນນີ້: ພຣະບັນຍັດສິບປະການບອກເຖິງຄວາມຮັບຜິດຊອບສຳລັບການດຳເນີນຊີວິດໃນພຣະສັນຍາກັບພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ແມ່ນຫຍັງຄືພື້ນຖານສຳລັບຊີວິດມະນຸດໃນຄວາມສັມພັນກັບພຣະເຈົ້າ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍຄວາມໝາຍ ແລະປໂຍດຂອງພຣະບັນຍັດສິບປະການ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ບໍ່ມີພຣະທັມຕອນໃດໃນພຣະຄັມພີ ທີ່ຈະໃຫ້ຄຳແນະນຳເຣື່ອງຄວາມຊອບທັມສຳລັບໄພ່ພົນຂອງພຣະເຈົ້າເທົ່າກັບພຣະບັນຍັດສິບປະການ. ກ່ອນທີ່ຊົນຊາດອິສຣາເອນຈະເຂົ້າໄປສູ່ແຜ່ນດິນແຫ່ງພຣະສັນຍາ, ໂມເຊໄດ້ສັ່ງພວກເຂົາໃຫ້ຟັງພຣະບັນຍັດ ແລະໃຫ້ດຳເນີນຊີວິດຕາມພຣະຄຳທີ່ພວກເຂົາໄດ້ຮັບທີ່ພູຊີນາຍ.

ພຣະບັນຍັດສິບປະການບໍ່ໄດ້ ເວົ້າກັບພວກເຮົາສ່ວນບຸກຄົນ, ແຕ່ໄດ້ກ່າວເຖິງຄວາມສັມພັນລະຫວ່າງພວກເຮົາກັບພຣະເຈົ້າ (ບັນຍັດ 1-4) ແລະກັບຄົນອື່ນໆ (ບັນຍັດ 5-10). ພຣະບັນຍັດສອງບົດທີ 5 ເລີ້ມດ້ວຍພຣະປະສົງຂອງພຣະເຈົ້າທີ່ຢາກຈະມີຄວາມສັມພັນກັບໄພ່ພົນຂອງພຣະອົງ. ພຣະອົງໄດ້ຊົງໂຜດໄພ່ພົນຂອງພຣະອົງໃຫ້ພົ້ນຈາກການເປັນຂ້າທາດທີ່ປະເທດເອຢິບ. ພຣະເຈົ້າຊົງເລີ້ມຕົ້ນພຣະບັນຍັດໂດຍການເຕືອນຊາວອິສຣາເອນວ່າພວກເຂົາກຳລັງເວົ້າກັບພຣະເຈົ້າຜູ້ໄດ້ຊົງນຳພາພວກເຂົາໃນຕອນອົບພຍົບ. ພຣະບັນຍັດສອງບົດທີ 5 ເຖິງ 28 ປະກອບດ້ວຍຄຳປາສັຍຂອງໂມເຊຊຸດທີສອງ. ຄຳປາສັຍຊຸດນີ້ເລີ້ມຕົ້ນດ້ວຍການທົບທວນຂອງໂມເຊ ເວລາເຂົາໄປຮັບພຣະບັນຍັດຂອງພຣະເຈົ້າຖ້າມກາງແປວໄຟ.

1. ຈົ່ງຟັງໃຫ້ດີ (5:1-5)

ຄ້າຍໆກັບພຣະທັມທີ່ມາກ່ອນພຣະບັນຍັດສອງບົດທີ4 ແລະພຣະທັມທີ່ມາພາຍຫລັງພຣະບັນຍັດສອງບົດທີ 6:3-4, ໂມເຊໄດ້ເລີ້ມຄຳປາສັຍຂອງເຂົາໂດຍການສັ່ງປະຊາຊົນໃຫ້ພາກັນຟັງ! ໂມເຊໄດ້ສັ່ງຊາວອິສຣາເອນໃຫ້ຟັງບັນຍັດທຸກຂໍ້ ແລະ ໃຫ້ເຮັດຕາມທຸກຢ່າງ (5:1). ໂມເຊຮູ້ວ່ານີ້ຄືເວລາທີ່ເຂົາຈະຕ້ອງມອບພຣະບັນຍັດໃຫ້ຊາວອິສຣາເອນເພື່ອເປັນເຄື່ອງນຳພາພວກເຂົາໃນເວລາດຳເນີນຊີວິດຢູ່ດິນແດນແຫ່ງພຣະສັນຍາ. ໂມເຊໄດ້ເຕືອນພວກເຂົາວ່າສັນຍາເຣື່ອງຄວາມສັມພັນທີ່ພູຊີນາຍນີ້ບໍ່ແມ່ນສິ່ງທີ່ຜ່ານມາແລ້ວ ແຕ່ເປັນສັນຍາສຳລັບທຸກຄົນທີ່ມີຊີວິດຢູ່ໃນປັດຈຸບັນ (5: 3). ຄຳ

ສມັຍນີ້ບໍ່ໄດ້ເນັ້ນເຖິງເຣື່ອງທີ່ຜ່ານມາ ຫລືເຣື່ອງປູ່ຍ່າຕາຍາຍ, ແຕ່ໄດ້ເນັ້ນເຖິງປັດຈຸບັນ ແລະສຳລັບປະຊາຊົນທີ່ກຳລັງຢືນຢູ່ທີ່ຊາຍແດນຂອງດິນແດນແຫ່ງພຣະສັນຍາ.

## 2. ຄວາມສັມພັນຂອງພວກເຮົາກັບພຣະເຈົ້າ (5:6-15)

ບັນຍັດຂໍ້ທີນຶ່ງ--ໃຜຄືນ້ຳເບີນຶ່ງ? (5:7). ຖ້າທ່ານຢາກຮູ້ວ່າແມ່ນຫຍັງຄືນ້ຳເບີນຶ່ງໃນຊີວິດ, ທ່ານຈະຕ້ອງສຳຣວດຕົວເອງເຣື່ອງເວລາ. ທ່ານຄິດເຖິງເຣື່ອງໃດຫລາຍກວ່າທຸກຢ່າງ? ທ່ານເວົ້າເຖິງເຣື່ອງໃດຫລາຍກວ່າທຸກຢ່າງ? ທ່ານໃຊ້ຈ່າຍຊັບສິນເງິນທອງສຳລັບຫຍັງແດ່? ທ່ານໃຫ້ເວລາເພື່ອຫຍັງແດ່? ພຣະເຈົ້າຜູ້ຊົງເປີດເຜີຍພຣະອົງເອງໃນການໂຜດຊາວອິສຣາເອນຈາກການເປັນທາດ ແລະໃນການໂຜດພວກເຮົາຈາກຄວາມບາບແລະຄວາມຕາຍ ຕ້ອງການເປັນນ້ຳເບີນຶ່ງໃນຊີວິດຂອງພວກເຮົາ.

ບັນຍັດຂໍ້ທີສອງ-- ຮູບພາບຂອງພຣະເຈົ້າ (5:8-10). ຊາວອິສຣາເອນໃນສມັຍກ່ອນຈະຕ້ອງຣະວັງໂດຍບໍ່ສ້າງພຣະເຈົ້າດ້ວຍສີມືຂອງພວກເຂົາ. ແຕ່ຊາວອິສຣາເອນໄດ້ລະເມີດພຣະບັນຍັດຂໍ້ນີ້ ໃນຂະນະທີ່ໂມເຊກຳລັງໄປພົບພຣະເຈົ້າ. ພວກເຂົາໄດ້ຂໍຮ້ອງໃຫ້ອາໂຣນເຮັດຮູບງົວຄຳເພື່ອເປັນພຣະແທນທີ່ຂອງພຣະເຈົ້າ (ອົພຍົບ 32:1-4). ພຣະທີ່ພວກເຮົາສ້າງຂຶ້ນດ້ວຍສີມືຂອງຕົວເອງຈະບໍ່ສາມາດພິພາກສາພວກເຮົາໄດ້; ແຕ່ພຣະເຈົ້າຜູ້ຊົງພຣະຊົນຢູ່ເປັນພຣະຜູ້ສ້າງແລະພຣະຜູ້ໂຜດ ຈະພິພາກສາຄວາມສັດຊື່ຂອງພວກເຮົາຕໍ່ພຣະອົງ ຜ່ານພຣະເຢຊູຄຣິດພຣະບຸດຂອງພຣະອົງ. ສະນັ້ນພວກເຮົາຈຶ່ງຫລີກເວັ້ນຈາກການວາງຂອບເຂດເພື່ອພຣະເຈົ້າໂດຍການສ້າງຮູບພາບຂອງພຣະອົງແບບບໍ່ຄົບສົມບູນ.

ບັນຍັດຂໍ້ທີສາມ-- ໂຄຣົບນາມຊື່ຂອງພຣະເຈົ້າ (5:11). ເຣື່ອງຂອງຊາວອິສຣາເອນໃນສມັຍເກົ່າແມ່ນເຣື່ອງນາມຊື່ຂອງພຣະເຈົ້າ. ໃນສມັຍທີ່ຊາວອິສຣາເອນໄດ້ພົບກັບຄວາມລຳບາກຕອນເປັນທາດຢູ່ປະເທດເອຢິບ, ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງວ່າເປັນພຣະເຈົ້າອົງຊົງເປັນ ແລະອົງຊົງຣິດ, "ເຮົາເປັນຜູ້ເຮົາເປັນ" (ອພຍ 4:14). ການໃຊ້ນາມຊື່ຂອງພຣະເຈົ້າໃນທາງຜິດ ເປັນການບໍ່ສົມຄວນ. ພຣະເຢຊູຊົງເຕືອນພວກເຮົາໃຫ້ໂຄຣົບນາມຊື່ຂອງພຣະເຈົ້າ, "ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ" (ມັດທາຍ 6:9). ຢ່າໃຊ້ນາມຊື່ຂອງພຣະເຈົ້າໃນຄຳສາບານ ຫລືໃນຄຳເວົ້າອື່ນໆທີ່ບໍ່ເນາະສົມ (ມັດ ທາຍ 5: 33-37).

ນາມຊື່ໃນພຣະຄັມພີມີຄວາມໝາຍສຳຄັນ. ພວກເຮົາໄດ້ມີຄວາມເຊື່ອກໍເພາະພຣະນາມຂອງພຣະເຈົ້າ ແລະຂອງພຣະເຢຊູຄຣິດ. ຈົ່ງລະນຶກເຖິງຣິດອຳນາດຂອງພຣະນາມຂອງພຣະເຢຊູ. ເປໂຕບັບຕິສະມາຜູ້ເຊື່ອໃໝ່ "ໃນພຣະນາມຂອງພຣະເຢຊູຄຣິດ" (ກິຈການ 2:38). ເປໂຕ ແລະໂຢຮັນປິ່ນປົວຄົນພິການທີ່ປະຕູຂອງພຣະວິຫານ "ໃນພຣະນາມແຫ່ງພຣະເຢຊູຄຣິດ" (ກິຈການ 3:6). ເປໂຕກ່າວວ່າໃນຜູ້ອື່ນຄວາມລອດພົ້ນບໍ່ມີ ນອກຈາກພຣະນາມພຣະເຢຊູ (ກກ 4:12).

ບັນຍັດຂໍ້ທີສີ່-- ໂຄຣົບວັນຂອງພຣະເຈົ້າ (5:12-15). ຖ້າພວກເຮົາເບິ່ງປະວັດສາດຂອງໄພ່ພົນຂອງພຣະເຈົ້າ, ພວກເຮົາຈະເຫັນວ່າເວລາໃດພວກເຂົາມີບັນຫາເຣື່ອງການຮັກສາວັນຊະບາໂຕ ພວກເຂົາກໍຈະມີບັນຫາເຣື່ອງຄວາມສັມພັນກັບພຣະເຈົ້າ (ເຢຣະມີຢາ 17:27; ເອເສກຽນ 20:12 -20). ການຮັກສາວັນຊະບາໂຕໄວ້ເພື່ອເປັນວັນນະມັສການ ແລະວັນພັກຜ່ອນ ສະແດງໃຫ້ເຫັນເຖິງຄວາມສັມພັນຂອງພວກເຮົາກັບພຣະເຈົ້າ. ພຣະເຢຊູຊົງຮັກສາວັນຊະບາໂຕເປັນປະຈຳ (ລູກາ 4:16; ມາຣະໂກ 1:21;6:2). ວັນຊະບາໂຕເປັນມື້ສຳລັບການລະນຶກ. ພຣະເຈົ້າຊົງສັ່ງຊາວອິສຣາເອນໃຫ້ພັກຜ່ອນ, ໃຫ້ລະນຶກເຖິງທຸກຢ່າງທີ່ພຣະອົງໄດ້ເຮັດ, ແລະໃຫ້ຂອບພຣະຄຸນພຣະອົງໂດຍການຮັກສາວັນຊະບາໂຕ.

## 3. ຄວາມສັມພັນຂອງພວກເຮົາກັບຄົນອື່ນໆ (5:16-21)

ບັນຍັດຂໍ້ທີຫ້າ-- ບັນຍັດທີ່ຖືກລືມ (5:16). ພຣະບັນຍັດຂໍ້ນີ້ບໍ່ໄດ້ບອກພວກເຮົາແຕ່ພຽງໃຫ້ມີມາຣະຍາດດີກັບຜູ້ບັງເກີດ

ເກົ້າເທົ່ານັ້ນ ແຕ່ໄດ້ສັ່ງພວກເຮົາໃຫ້ໂຄຣົບ, ໃຫ້ຄິດຄ່າສູງ, ໃຫ້ສແດງຄວາມນັບຖື, ແລະໃຫ້ຍົກກຽດພໍ່ແມ່ຂອງພວກເຮົາ. ມີຄຳກ່າວໄວ້ໃນທຳນອງນີ້ວ່າ, "ຄົນຜູ້ທີ່ໂຄຣົບນັບຖືພໍ່ແມ່ຢູ່ໃນບ້ານຂອງຕົນ ຈະໂຄຣົບນັບຖືຄົນອື່ນໆນອກບ້ານເຊັ່ນກັນ."

<u>ບັນຍັດຂໍ້ທີຫົກ-- ຊີວິດເປັນສິ່ງສັກສິດ (5:17)</u>. ພຣະບັນຍັດຂໍ້ນີ້ໃຊ້ຄຳເຣັບເຣີສອງຄວາມສັ້ນໆວ່າ, "ຢ່າຂ້າ." ຊີວິດ, ໂດຍສະເພາະຊີວິດມະນຸດເປັນສິ່ງສັກສິດສຳລັບພຣະເຈົ້າ ເພາະມະນຸດໄດ້ຖືກສ້າງຂຶ້ນມາໃຫ້ຄ້າຍຄືພຣະອົງ. ພຣະບັນຍັດຂໍ້ນີ້ບໍ່ໄດ້ຫ້າມເຣື່ອງໂທດປະຫານຊີວິດ ຫລືການຂ້າກັນໃນສົງຄາມ ເພາະພຣະສັນຍາເດີມຫລາຍຕອນໄດ້ເວົ້າເຣື່ອງນີ້ຢ່າງແຈ່ມແຈ້ງຢູ່ແລ້ວ. ຕັ້ງແຕ່ປະຖົມການເປັນຕົ້ນມາ, ພວກເຮົາໄດ້ເຫັນວ່າພຣະເຈົ້າຊົງຮັກຊີວິດ; ພຣະອົງຊົງສະຫ້ານພຣະທັຍເມື່ອອາເບນຖືກສັງຫານ (ປະຖົມການ 4:10). ພຣະເຈົ້າຊົງຮັກຊີວິດຈຶ່ງໄດ້ສົ່ງພຣະບຸດອົງດຽວລົງມາໃນໂລກເພື່ອພວກເຮົາທັງຫລາຍຈະໄດ້ມີຊີວິດຢູ່. ພຣະເຢຊູໄດ້ຊົງເພີ່ມເຣື່ອງຄວາມຄຽດຮ້າຍເຂົ້າຮວມໃສ່ໃນບັນຍັດຂໍ້ທີຫົກນີ້ (ມທ 5:22).

<u>ບັນຍັດຂໍ້ທີເຈັດ-- ຈົ່ງສັດຊື່ຕລອດຊີວິດ (5:18)</u>. ພຣະບັນຍັດຂໍ້ນີ້ໄດ້ຫ້າມພວກເຮົາບໍ່ໃຫ້ລ່ວງເກີນຜົວເມັຽຂອງຜູ້ອື່ນ. ອາຣົມຊົ່ວຄາວ, ຢາກສະແດງວ່າໂຕເກັ່ງ, ຕ້ອງການຄວາມຮັກ, ອາຣົມແຮງ, ຫລືການຖືກໄຟຮັກ ລ້ວນແຕ່ແມ່ນການເຫລັ້ນກັບພຍາມານ. ຄອບຄົວພັງທະລາຍ, ຄວາມຝັນສລາຍເໝືອນໝອກໃນຕອນເຊົ້າ, ເດັກນ້ອຽປລາດໃຈບໍ່ຮູ້ວ່າແມ່ນຫຍັງໄດ້ມາທຳລາຍພື້ນຖານຂອງພວກເຂົາ, ຄອບຄົວຂອງພວກເຂົາ. ຄົນຂ້າງບ້ານກະຊຸບກະຊິບ, ເລຂາທີ່ຫ້ອງການພະຍາຍາມປົດເຣື່ອງ, ທະນາຍຄວາມເຄາະປະຕູບ້ານ. ການຫລີ້ນຊູ້ຖືວ່າເປັນທາງອອກ, ແລະຊີວິດນີ້ກໍສັ້ນ ແລະບໍ່ຄວນຈະປ່ອຍໂອກາດໃຫ້ເສັຽໄປ, ເທື່ອດຽວນຶ່ງດອກ. ທຸກຢ່າງຄືວ່າເໝາະສົມ, ແຕ່ຄວາມຈິງແລ້ວສິ່ງເຫລົ່ານັ້ນລ້ວນແຕ່ເປັນສິ່ງທີ່ບໍ່ຖືກຕ້ອງ.

ພຣະເຢຊູຊົງສອນພວກເຮົາ, ບໍ່ວ່າຊາຍຫລືຍິງ, ໃຫ້ລະວັງເຣື່ອງການຫລີ້ນຊູ້ນີ້ໃຫ້ດີເພາະວ່າ, "ຜູ້ໃດເບິ່ງແມ່ຍິງ (ຜູ້ຊາຍ) ດ້ວຍໃຈກຳໜັດໃນຍິງ (ຊາຍ) ນັ້ນ ຜູ້ນັ້ນໄດ້ຫລີ້ນຊູ້ໃນໃຈກັບຍິງ (ຊາຍ) ນັ້ນແລ້ວ." (ມັດທາຍ 5:27-28).

<u>ບັນຍັດຂໍ້ທີແປດ-- ຂອງໃຜຂອງມັນ (5:19)</u>. ຄົນຮ້າຍຜູ້ນຶ່ງທີ່ປະເທດອິຕະລີໃຊ້ຣົດຈັກເພື່ອຍາດກະເປົາເງິນຂອງນັກທ່ອງທ່ຽວຜູ້ຍິງທີ່ກຳລັງຍ່າງຕາມແຄມທາງ. ເຂົາຂະໂມຍເພື່ອຈະໄດ້ເງິນໄປຊື້ຢາເສບຕິດສຳລັບຕົວເອງ. ຕຳຣວດຈັບຊາຍຄົນນີ້ບໍ່ໄດ້ເພາະບໍ່ມີໃຜສາມາດບອກໄດ້ວ່າຂະໂມຍຄົນນີ້ແມ່ນໃຜແທ້. ມື້ນຶ່ງຜູ້ຮ້າຍຄົນນີ້ໄດ້ຍາດເອົາກະເປົາຂອງຍິງຊາວອິຕະລີວັຍສູງຄົນນຶ່ງ; ເຂົາບໍ່ຮູ້ວ່າຍິງຄົນນີ້ແມ່ນໃຜເພາະເຂົາແລ່ນຣົຖມາແຕ່ເບື້ອງຫລັງຂອງນາງ; ແຕ່ຍິງຄົນນີ້ຈື່ຄົນຂີ່ຣົຖຈັກຄັນນັ້ນໄດ້ດີ ເພາະເຂົາເປັນລູກຊາຍຜູ້ບໍ່ຟັງຄວາມຂອງລາວເອງ. ນາງຈຶ່ງໄປແຈ້ງຕຳຣວດໃນທັນໃດ; ໃນມື້ນັ້ນເຈົ້າໜ້າທີ່ກໍໄດ້ຈັບຕົວຜູ້ຕ້ອງຫາໂດຍບໍ່ໄດ້ສົງສັຍ.

ພຣະບັນຍັດ "ຢ່າລັກ" ຫ້າມການຂະໂມຍສິ່ງຂອງຕາມຮ້ານຄ້າ, ການໂກງພາສີລາຍໄດ້, ການຊັກຟອກເງິນຜ່ານທາງຄອມປິວເຕີ້, ແລະການຂະໂມຍບັດປະຈຳຕົວ, ນາມຊື່, ຫລືເຄຣດິດຄາດຂອງຄົນອື່ນ. ຊັບສົມບັດຂອງພວກເຮົາເປັນສິ່ງທີ່ເຮົາຫວງແຫນ ເພາະມັນເປັນຜົນຂອງວຽກງານ ຫລືເປັນຂອງຂວັນຂອງພວກເຮົາ. ສິ່ງຂອງເຫລົ່ານີ້ລ້ວນແຕ່ມີຄວາມໝາຍໃນຊີວິດຂອງເຮົາ. ເວລາຄົນອື່ນຂະໂມຍສິ່ງຂອງນັ້ນໄປ, ພວກເຮົາກໍຮູ້ສຶກວ່າພວກເຮົາໄດ້ຖືກລ່ວງເກີນ, ບໍ່ພຽງແຕ່ເຣື່ອງສິ່ງຂອງເທົ່ານັ້ນ ແຕ່ໄດ້ກາຍເປັນເຣື່ອງສ່ວນຕົວດ້ວຍ.

<u>ບັນຍັດຂໍ້ທີເກົ້າ-- ຢ່າເປັນພຍານບໍ່ຈິງ (5:20)</u>. ພວກເຮົາໄດ້ເຫັນພຣະບັນຍັດຂໍ້ນີ້ຢູ່ໃນພຣະທັມອົພຍົບ 20:16 ຊຶ່ງໂດຍສະເພາະແລ້ວແມ່ນເວົ້າເຖິງການຕົວະຢູ່ໃນສານເພາະ "ການເປັນພຍານບໍ່ຈິງ" ເປັນສິ່ງຕ້ອງຫ້າມ. ໃນພຣະບັນຍັດສອງ

ຄຳເວົ້າໃນບັນຍັດຂໍ້ນີ້ໄດ້ປ່ຽນແປງເລັກນ້ອຍ ຄື "ຢ່າໃສ່ຮ້າຍປ້າຍສີເພື່ອນມະນຸດ," ທີ່ຈິງແລ້ວຄວາມໝາຍກໍບໍ່ໄດ້ແຕກຕ່າງກັນຫລາຍເທົ່າໃດ ເພາະແກ່ນແທ້ຂອງທັງສອງສະບັບກໍຄື "ຫ້າມບໍ່ໃຫ້ເວົ້າໃນສິ່ງທີ່ບໍ່ມີຄວາມຈິງ."

<u>ບັນຍັດຂໍ້ທີສິບ-- ພະລັງຂອງຄວາມພໍໃຈ (5:21)</u>. ພຣະບັນຍັດທີສິບແຕກຕ່າງກັບບັນຍັດອື່ນໆທີ່ຜ່ານມາ ເພາະບັນຍັດຂໍ້ນີ້ບໍ່ໄດ້ຫ້າມເຣື່ອງການປະພຶດ ແຕ່ໄດ້ຫ້າມທັສນະພາຍໃນ. ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາໄດ້ພໍໃຈໃນຕົວເຮົາເອງ ແລະໃຫ້ພໍໃຈໃນສິ່ງທີ່ພວກເຮົາມີຢູ່. ເວລາພວກເຮົາຫລຽວເບິ່ງແຕ່ເຮືອນຂອງຄົນຂ້າງບ້ານ ຫລືເມັຽຂອງເພິ່ນ, ພວກເຮົາຈະບໍ່ມີຄວາມສຸກກັບສິ່ງທີ່ພວກເຮົາມີຢູ່ໃນມື. ບຸກຄົນທີ່ມີ "ຄວາມຢາກ" ຫລາຍຈະເປັນທຸກຢູ່ສເມີ. ເຂົາຈະທຸກໃຈເມື່ອເຫັນເພື່ອນບ້ານມີເຮືອນງາມກວ່າ, ມີເຄື່ອງນຸ່ງຫົ່ມດີກວ່າ, ມີຄົນນິຍົມຫລາຍກວ່າ, ຫລືມີຄວາມສຳເຣັດຫລາຍກວ່າ. ຫລາຍໄປກວ່ານັ້ນ, ຄົນປະເພດນີ້ຈະບໍ່ໄດ້ມີສ່ວນໃນພຣະຣາຊອານາຈັກຂອງພຣະເຈົ້າ. ອັຄສາວົກໂປໂລໄດ້ເຕືອນເຣື່ອງນີ້ໄວ້ຢ່າງແຈ່ມແຈ້ງໃນພຣະທັມ 1 ໂກຣິນໂທ 6:9-10.

<u>ສລູບ:</u>
ເຄີຍມີຄຳຖາມໃນທຳນອງນີ້ວ່າ: ພຣະບັນຍັດສິບປະການມີຄວາມໝາຍແນວໃດສຳລັບທຸກວັນນີ້? ເຖິງວັນເດືອນປີຈະປ່ຽນໄປ ພຣະຄຳຂອງພຣະເຈົ້າຍັງບໍ່ໄດ້ປ່ຽນແປງ. ພຣະບັນຍັດຂອງພຣະເຈົ້າກໍບໍ່ໄດ້ປ່ຽນແປງຄວາມໝາຍສຳລັບໄພ່ພົນຂອງພຣະອົງ. ຫລາຍໆຢ່າງໃນໂລກນີ້ໄດ້ຫາຍສາບສູນໄປຕາມເວລາ ແຕ່ພຣະຄຳຂອງພຣະເຈົ້າໄດ້ຄົງຢູ່ຕລອດມາ. ພຣະຄຳຂອງພຣະເຈົ້າບໍ່ເຄີຍຫລ້າສມັຍ. ມະນຸດບໍ່ສາມາດທີ່ຈະພິພາກສາພຣະບັນຍັດ ແຕ່ພຣະບັນຍັດນັ້ນຈະພິພາກສາມະນຸດທັງຫລາຍ. ພຣະບັນຍັດສອງບົດທີ 5 ໄດ້ຈົບລົງດ້ວຍຂໍ້ຄວາມນີ້, "ຖ້າພວກເຂົາພ້ອມທີ່ຈະຍົກຍໍໃຫ້ກຽດແກ່ເຮົາ ແລະເຊື່ອຟັງຄຳສັ່ງທຸກຂໍ້ຂອງເຮົາຕລອດໄປ ພວກເຂົາແລະລູກຫລານຂອງພວກເຂົາກໍຈະຢູ່ເຢັນເປັນສຸກ" (5:29). ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະເຈົ້າຊົງກ່າວແກ່ໄພ່ພົນທັງຫລາຍຂອງພຣະອົງ.

<u>ຄຳຖາມ:</u>
1. ແມ່ນຫຍັງທີ່ເຮັດໃຫ້ພຣະບັນຍັດສິບປະການບໍ່ປ່ຽນແປງ ໃນຂະນະທີ່ພວກເຮົາບໍ່ໄດ້ເອົາໃຈໃສ່ໃນການຮັກສາບັນຍັດອື່ນໆຂອງພຣະສັນຍາເດີມທີ່ມີຢູ່ໃນປຶ້ມພຣະບັນຍັດສອງ?

2. ມີຫຍັງແດ່ໃນສມັຍນີ້ທີ່ອາດຈະເຮັດໃຫ້ພວກເຮົາເຮັດຜິດພຣະບັນຍັດຂໍ້ທີສອງ?

3. ນອກຈາກຄຳສາບານ, ມີຫຍັງແດ່ທີ່ພວກເຮົາເຮັດຊຶ່ງອາດຈະຖືວ່າເປັນການໃຊ້ນາມຊື່ຂອງພຣະເຈົ້າໃນທາງຜິດ?

4. ພວກເຮົາຈະເຮັດວິທີໃດເພື່ອຈະຮັກສາວັນຊະບາໂຕໃນສມັຍນີ້? ພວກເຮົາຄວນຈະມີສ່ວນໃນກິຈກັມຕ່າງໆທີ່ເຮັດໃຫ້ເຮົາຕ້ອງເດີນທາງໃນວັນອາທິດຫລືບໍ່?

5. ການຕົວະ (ການເວົ້າຄວາມບໍ່ຈິງ) ເໝາະສົມກັບຄຣິສຕຽນບໍ່?

6. ຖ້າທ່ານຈະຂຽນພຣະບັນຍັດເພີ່ມອີກນຶ່ງຂໍ້ ຊຶ່ງເປັນຂໍ້ທີ 11, ເພື່ອໃຫ້ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງ ທ່ານຈະຂຽນວ່າແນວໃດແດ່?

ສຈ. ສີດາ ຄານ

# ບົດຮຽນທີ 11
# ຢ່າລືມພຣະເຈົ້າ

---

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນນີ້: | ພຣະບັນຍັດສອງ 6:1--25. |
| ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: | ພຣະບັດຍັດສອງ 6 |
| ຈຸດສຳຄັນຂອງບົດຮຽນນີ້: | ແຕ່ລະສມັຍມີຫນ້າທີ່ສອນເຣື່ອງຂອງພຣະເຈົ້າ |
| ຄຳຖາມເພື່ອການສຳຣວດ: | ເຮົາຈະສອນເດັກນ້ອຍເຣື່ອງຂອງພຣະເຈົ້າຢ່າງໃດ? |
| ຈຸດປະສົງຂອງບົດຮຽນນີ້: | ເພື່ອຊອກຫາວິທີພວກອິສຣາເອນສອນເດັກນ້ອຍຢ່າງໃດຈາກນັ້ນກໍນາດັດແປງໃສ່ວິທີຂອງເຮົາໃນສມັຍນີ້ |

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ບົດນຳ

ຂ້າພະເຈົ້າມີໂອກາດໄປສຳມະນາສາສນາອິສລາມໃນສມັຍຂ້າພະເຈົ້າເປັນນັກຮຽນພຣະຄັມພີ, ໃນນັ້ນຂ້າພະເຈົ້າໄດ້ຮຽນຮູ້ສິ່ງນຶ່ງທີ່ສຳຄັນຂອງຫນ້າທີ່ພໍ່ແລະແມ່ຂອງເດັກ ຄືພໍ່ແລະແມ່ຂອງເດັກມີຫນ້າທີ່ສອນລູກໃຫ້ອ່ານຫນັງສືເປັນກ່ອນເຂົ້າໂຮງຮຽນ, ກ່ອນຫນ້າຈະເຂົ້າໂຮງຮຽນນັ້ນຜູ້ເປັນພໍ່ແລະແມ່ຂອງເດັກຕ້ອງໃຫ້ລູກຂອງຕົນອ່ານໂຄຣານ ຊຶ່ງເປັນພຣະຄັມພີຂອງສາສນາອິສລາມ. ເຣື່ອງນີ້ຂ້າພເຈົ້າມີຄວາມເຫັນວ່າດີຫາກຄຣິສຕຽນເຮົາບອກລູກຫລານເຣື່ອງພຣະຄຸນຂອງພຣະເຈົ້າທີ່ມີຕໍ່ເຮົາ ບາງທີອາດຈະຊ່ອຍໃຫ້ລູກຫລານເຊື່ອພຣະເຈົ້າງ່າຍຂຶ້ນ.

## 1. ເຊື່ອຟັງແລະຢຳເກງຈະໄດ້ຮັບພອນ 6:1-3

ສາມຂໍ້ທຳອິດແມ່ນເວົ້າເຖິງຄວາມເຊື່ອ,ໃນພາສາເຮັບເຣີ Shema ແປວ່າ ເຊື່ອຟັງ. ໂມເຊໄດ້ສັ່ງຕັກເຕືອນອິສຣາເອນໃຫ້ຝຶກຝົນຕົນເອງໃຫ້ກາຍເປັນຄົນເຊື່ອຟັງພຣະເຈົ້າ, ໃນການເຊື່ອຟັງທີ່ໂມເຊກ່າວນັ້ນມີຄວາມຫມາຍວ່າການເຊື່ອຟັງຈຳຕ້ອງມີການປະຕິບັດຕາມພຣະບັດຍັດ (ຄຳສັ່ງ) ເພື່ອສແດງອອກເຖິງການເຊື່ອຟັງ, ບໍ່ແມ່ນຟັງຊື່ໆເຫມືອນຟັງຫມໍລຳເພື່ອຄວາມມ່ວນຊື່ນ ແຕ່ແມ່ນຟັງແລ້ວເຮັດຕາມສິ່ງທີ່ໄດ້ຍິນນັ້ນ ແລ້ວຊີວິດຈະໄດ້ຮັບພຣະພອນ ຄືມີຊີວິດທີ່ຍືນຍາວໃນແຜ່ນດິນພັນທະສັນຍາທີ່ພຣະອົງຊົງໂຜດປະທານໃຫ້. "ທ່ານຈຶ່ງດຳເນີນຕາມວິຖີທາງທັງສິ້ນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງບັນຊາທ່ານໄວ້ເພື່ອທ່ານຈະມີຊີວິດຢູ່ ແລະເພື່ອທ່ານຈະໄປດີມາດີແລະມີຊີວິດຍືນນານຢູ່ໃນແຜ່ນດິນຊຶ່ງທ່ານຈະຍຶດຄອງນັ້ນ"

ໃນຂໍ້ 3 ໂມເຊໄດ້ຕັກເຕືອນໃຫ້ອິສຣາເອນຟັງແລະພິຈາຣະນາໃຫ້ດີງຫາກຢາກມີຊີວິດອັນຍືນຍາວພ້ອມທັງກິດຈະການຕ່າງໆຈະລຸລ່ວງໄປດ້ວຍດີ. "ຊາວອິສຣາເອນເອີຍຈົ່ງສະດັບຮັບຟັງພຣະທັມແລະປະພຶດຕາມເທີນ ເພື່ອກິຈການທຸກຢ່າງຂອງພວກທ່ານຈະລຸລ່ວງໄປດ້ວຍດີ ແລ້ວພວກທ່ານກໍຈະກາຍເປັນຄົນຊົນຊາດໃຫຍ່ຢູ່ໃນແຜ່ນດິນທີ່ອຸດົມສົມບູນເໝືອນຢ່າງພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງພວກທ່ານທັງຫລາຍໄດ້ຊົງສັນຍາໄວ້ (6:3).
ໃນພຣະທັມຂໍ້ນີ້ທ່ານຈະເຫັນພຣະພອນຢູ່ສີ່ປະການດ້ວຍກັນຄື;

1. ພຣະເຈົ້າຈະອວຍພອນເຂົາໃຫ້ມີຊີວິດຍືນຍາວ (ບໍ່ຕາຍໜຸ່ມ) ພ້ອມທັງສຸຂະພາບແຂງແຮງດີ.
2. ກິຈການຂອງເຂົາກໍຈະລຸລ່ວງໄປດ້ວຍດີ, ມີຄວາມໝາຍວ່າຊີວິດປະຈຳວັນ ຕລອດເຖິງການປູກຝັງ, ການຄ້າຂາຍ, ແລະທຸຣະກິດອື່ນໆກໍຈະເຣີນໂດຍບໍ່ມີສິ່ງໃດບຽດບຽນ.
3. ສິ່ງທີ່ໃຫຍ່ໄປກວ່ານັ້ນຄືພວກເຂົາຈະກາຍເປັນຊົນຊາດໃຫຍ່ (ປະເທດໃຫຍ່)
4. ໃນແຜ່ນດິນທີ່ອຸດົມສົມບູນ ໝາຍຄວາມວ່າເປັນແຜ່ນດິນທີ່ເຕັມໄປດ້ວຍຊັບພະຍາກອນ ແລະເໝາະສົມກັບການປູກຝັງ, ລ້ຽງສັດທີ່ມີທົ່ງຫຍ້າຂຽວສົດງົດງາມ.

ພຣະພອນທັງສີ່ຢ່າງນີ້ແມ່ນພາກສ່ວນທີ່ພຣະເຈົ້າຕຽມໄວ້ໃຫ້ແລ້ວ, ພາກສ່ວນຂອງອິສຣາເອນນັ້ນຄືເຊື່ອຟັງແລະປະຕິບັດຕາມຄຳສັ່ງກໍຈະໄດ້ຮັບສິ່ງນີ້ທັນທີ. ພຣະພອນທັງສີ່ຢ່າງນີ້ຍັງມີຢູ່ເຖິງທຸກວັນນີ້ ພຣະອົງຕຽມໄວ້ໃຫ້ຄຣິສຕຽນທີ່ເຊື່ອຟັງແລະປະຕິບັດ ດັ່ງນັ້ນຫາກຄຣິສຕຽນຜູ້ໃດຢາກໄດ້ພຣະພອນທັງສີ່ນີ້ ຜູ້ນັ້ນຈຳຕ້ອງ ເຊື່ອຟັງແລະປະຕິບັດຕາມພຣະດຳຣັດຂອງພຣະເຈົ້າ. ພຣະອົງຊົງສັດຊື່ແລະທ່ຽງທັມ ຄືພຣະອົງຊົງວາງຣະບຽບຢ່າງໃດຕໍ່ອິສຣາເອນຊົນຊາດທີ່ຊົງເລືອກແຕ່ຫົວທີ ພຣະອົງກໍໃຊ້ຣະບຽບດຽວກັນກັບຄຣິສຕຽນຜູ້ຊຶ່ງເປັນບຸດຂອງພຣະອົງທາງຄວາມເຊື່ອເຊັ່ນກັນ.

## 2. <u>ຄຳສັ່ງອັນສຳຄັນທີ່ສຸດ</u> (6:4-9)

ເວົ້າເຖິງຄຳສັ່ງໃຫຍ່ໃຜໆກໍຮູ້ແລ້ວວ່າພຣະອົງຊົງເວົ້າເຖິງເຣື່ອງອັນໃດ ແນ່ນອນຕ້ອງແມ່ນເຣື່ອງ Shema ຊຶ່ງຄຳສັ່ງນີ້ເປັນໝາກຫົວໃຈຂອງພຣະທັມ ພຣະບັນຍັດສອງທັງເຫລັ້ມ ເພື່ອອິສຣາເອນຈະໄດ້ປະຕິບັດ. ໂມເຊປະກາດ Shema (ເຊື່ອຟັງແລະປະຕິບັດ) ຫລັງຈາກຮັບພຣະບັນຍັດສິບປະການ, ດ້ວຍວ່າພຣະບັນຍັດນັ້ນແມ່ນຄຳສັ່ງຂອງພຣະເຈົ້າຊຶ່ງມີພຣະປະສົງໃຫ້ປະຊາຊົນຂອງພຣະອົງເຊື່ອຟັງແລະປະຕິບັດ. ໂມເຊໄດ້ອະທິບາຍວ່າ "ອິສຣາເອນເອີຍຈົ່ງຟັງເທີນພຣະຜູ້ເປັນເຈົ້າອົງດຽວທ່ານັ້ນທີ່ເປັນພຣະເຈົ້າຂອງເຮົາຈົ່ງຮັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໃຫ້ສຸດຈິດສຸດໃຈແລະສຸດສະຕິກຳລັງຂອງທ່ານຢ່າລືມສິ່ງທີ່ຂ້າພະເຈົ້າໄດ້ສັ່ງພວກທ່ານໃນວັນນີ້ໃຫ້ບອກສອນລູກຫລານດ້ວຍເມື່ອພວກທ່ານຢູ່ໃນເຮືອນຫລືອອກໜີໄປກໍດີເມື່ອທຳງານຫລືຢຸດພັກກໍດີໃຫ້ທ່ອງຈຳຄຳສັ່ງນີ້ໃຫ້ຕິດມັນໄວ້ໃນແຂນແລະເທິງໜ້າຜາກ ທັງໃຫ້ຂຽນໄວ້ຕາມປະຕູເຮືອນຂອງທ່ານດ້ວຍເພື່ອເປັນສິ່ງເຕືອນໃຈ (6:4-9).

ໂມເຊເລີ່ມຕົ້ນດ້ວຍຄຳວ່າ "ອິສຣາເອນເອີຍ ຈົ່ງຟັງເທີ້ນ" ມີຄວາມໝາຍວ່າເພິ່ນໄດ້ເອີ້ນທັງຊົນຊາດອິສຣາເອນໃຫ້ຕຽມຕົວຕັ້ງອົກຕັ້ງໃຈຟັງຢ່າງມີໃຈຈົດຈໍ່ຕໍ່ການຟັງ ໂດຍບໍ່ໃຫ້ຈິດໃຈເລື່ອນລອຍໄປທາງອື່ນ, ໂມເວົ້າຕໍ່ໄປວ່າ "ພຣະຜູ້ເປັນເຈົ້າອົງດຽວເທົ່ານັ້ນ ເປັນພຣະເຈົ້າຂອງເຮົາ" ມີຄວາມໝາຍວ່າເຮົາທັງຊົນຊາດມີແຕ່ພຣະເຈົ້າອົງດຽວທີ່ຄອຍຫ່ວງໃຍ ແລະປົກປັກຮັກສາພວກເຮົາ ບໍ່ມີພຣະອື່ນອີກ. ພຣະອົງຊົງຮັກເຮົາຢ່າງຫລວງຫລາຍດັ່ງນັ້ນເຮົາສົມຄວນທີ່ຈະຮັກພຣະອົງດ້ວຍສຸດອົກສຸດໃຈແລະສຸດກຳລັງຄວາມຄິດຂອງເຮົາ.

ເຮົາອາດຈະຖາມກັນວ່າຮັກພຣະເຈົ້າຢ່າງສຸດຈິດສຸດໃຈຈະວັດແທກໄດ້ຢ່າງໃດ? ດ້ວຍວ່າບໍ່ມີໄມ້ແມັດວັດແທກຄວາມສູງຄວາມຍາວຂອງຄວາມຮັກໄດ້ ແລະຍັງບໍ່ມີຕາຊັ່ງໃດໆສາມາດສັ່ງນ້ຳໜັກຂອງຄວາມຮັກໄດ້. ຄຳຕອບຈະເຫັນໃນ (ພຣະບັນຍັດສອງ 10:12-13; 11:1, 22; 19:9; 30:16). ຄຳສັ່ງດັ່ງກ່າວນີ້ຍັງຕົກທອດມາເຖິງພວກເຮົາຜູ້ທີ່ເຊື່ອ

ໃນພຣະເຈົ້າອົງດຽວກັນທີ່ນໍາອິສຣາເອນອອກຈາກການເປັນຂ້າທາດທີ່ປະເທດເອຢິບນັ້ນ. ໃນສມັຍນັ້ນພຣະເຈົ້າໄດ້ເຮັດພາຣະກິດຂອງພຣະອົງໂດຍພຣະອົງເອງ, ສ່ວນເວລານີ້ພຣະອົງໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງຄືພຣະເຢຊູຄຣິດລົງມາເປັນພຣະຜູ້ຊ່ອຍໃຫ້ລອດຂອງພວກເຮົາ ດ້ວຍເຫດນີ້ເຮົາທັງຫລາຍສົມຄວນຈະຮັກພຣະອົງແລະປະຕິບັດຕາມຄໍາສັ່ງອັນສໍາຄັນຂອງພຣະອົງເພື່ອຈະເກີດຜົນດີແກ່ພວກເຮົາ.

3. <u>ພຣະພອນອັນລໍ້າຄ່າ</u> (6:10-25).

ໂມເຊບອກອິສຣາເອນເຖິງພຣະພອນທາງດ້ານໜ້າ ຫາກເຂົາຫາກເຊື່ອຟັງແລະປະຕິບັດຕາມຄໍາສັ່ງຂອງອົງພຣະຜູ້ເປັນເຈົ້າທຸກປະການ. ໂມເຊບອກອິສຣາເອນວ່າ "ພຣະອົງຈະຊົງມອບແຜ່ນດິນຊຶ່ງມີຫົວເມືອງທີ່ຈະເຣີນຮຸ່ງເຮືອງຊຶ່ງທ່ານເອງບໍ່ໄດ້ສ້າງໃຫ້ແກ່ພວກທ່ານ ໃນເຮືອນທັງຫລາຍກໍຈະເຕັມໄປດ້ວຍຂອງດີທີ່ທ່ານບໍ່ໄດ້ຫາໄວ້ມີນໍ້າສ້າງທີ່ພວກທ່ານບໍ່ໄດ້ຂຸດໄວ້ພ້ອມທັງມີສວນອະງຸ່ນແລະສວນໝາກກອກເທດທີ່ປູກໄວ້ແລ້ວ ສະນັ້ນເມື່ອພຣະຜູ້ເປັນເຈົ້າຊົງນໍາພວກທ່ານເຂົ້າໄປໃນແຜ່ນດິນນີ້ແລ້ວກໍຈະມີອາຫານການກິນທຸກຢ່າງຕາມຄວາມຕ້ອງການ (ຂໍ້ 11).

ໂມເຊໄດ້ຕັກເຕືອນອິສຣາເອນໄວ້ລ່ວງໜ້າ ດ້ວຍຢ້ານວ່າເຂົາຈະຫລົງລືມອົງພຣະຜູ້ເປັນເຈົ້າເມື່ອເຂົາສນຸກສຸກສະບາຍ, ທ່ານໄດ້ເຕືອນວ່າ ແຕ່ພວກທ່ານຕ້ອງລະວັງໃຫ້ດີຈົ່ງຢ່າລືມພຣະຜູ້ເປັນເຈົ້າຜູ້ຊົງນໍາພວກທ່ານອອກຈາກເອຢິບບ່ອນຕົກເປັນທາດ (ຂໍ້ 12). ໂມເຊຕັກເຕືອນອິຣາເອນໃຫ້ສໍານຶກສເມີວ່າຄັ້ງນຶ່ງເຄີຽເປັນຂ້ອຍຂ້າຂອງຊາດ ເອຢິບ, ທີ່ພົ້ນມາໄດ້ກໍຍ້ອນພຣະເຈົ້າເທົ່ານັ້ນ. ຫາກອິສຣາເອນຫາກຄິດຫລົງລືມພຣະເຈົ້າແລ້ວໄປຂາບໄຫວ້ພຣະອື່ນ ໂມເຊບອກວ່າພຣະເຈົ້າຈະຊົງພຣະພິໂຣດໂກດຮ້າຍແລະທໍາລາຍເຂົາ ຖ້າພວກທ່ານຫາກຄີ້ດ້ານຂາບໄຫວ້ພຣະນັ້ນ ພຣະຜູ້ເປັນເຈົ້າຈະຊົງພຣະພິໂຣດທ່ານຢ່າງຮຸນແຮງແລະຈະທໍາລາຍພວກທ່ານຈົນໝົດສິ້ນ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງຫວງແຫນພວກທ່ານ (ຂໍ້ 15).

ເຮົາສັງເກດເຫັນວ່າພຣະພອນແລະການລົງໂທດໄປຄຽງຄູ່ກັນ, ດັ່ງນັ້ນອິສຣາເອນມີຂົວໄຕ່ຢູ່ສອງຂົວດ້ວຍກັນຄືຂົວທີ 1 ແມ່ນຂົວຂ້າມໄປຍັງດິນແດນແຫ່ງພຣະພອນ ແລະຂົວທີ 2 ແມ່ນຂົວຂ້າມໄປເຖິງການລົງໂທດແລະທໍາລາຍ. ຂົວທັງສອງນີ້ຍັງໃຊ້ກັນຢູ່ຈົນເຖິງທຸກວັນນີ້ ມັນຂຶ້ນກັບວ່າເຮົາທັງຫລາຍຈະເລືອກໄຕ່ຂົວໃດ ສໍາລັບຂ້າພະເຈົ້າຢາກເລົ້າໂລມໃຈທ່ານໃຫ້ໄຕ່ຂົວພຣະພອນ ດ້ວຍວ່າພຣະອົງກໍຊົງນໍາເຮົາທັງຫລາຍມາເຖິງດິນແດນທີ່ອຸດົມສົມບູນແລ້ວ ຊຶ່ງແມ່ນແຜ່ນດິນຄ້າຍຄືແຜ່ນດິນທີ່ພຣະເຈົ້າຊົງມອບໃຫ້ອິສຣາເອນ ຊຶ່ງທ່ານເອງບໍ່ໄດ້ສ້າງໃຫ້ແກ່ພວກທ່ານໃນເຮືອນທັງຫລາຍກໍຈະເຕັມໄປດ້ວຍຂອງດີທີ່ທ່ານບໍ່ໄດ້ຫາໄວ້ມີນໍ້າສ້າງທີ່ພວກທ່ານບໍ່ໄດ້ຂຸດໄວ້ພ້ອມທັງມີສວນອະງຸ່ນແລະສວນໝາກກອກເທດທີ່ປູກໄວ້ແລ້ວ ສະນັ້ນເມື່ອພຣະຜູ້ເປັນເຈົ້າຊົງນໍາພວກທ່ານເຂົ້າໄປໃນແຜ່ນດິນນີ້ແລ້ວກໍຈະມີອາຫານການກິນທຸກຢ່າງຕາມຄວາມຕ້ອງການ (ຂໍ້ 11). ຂ້າພະເຈົ້າຮູ້ສຶກວ່າເຮົາທັງຫລາຍມີພຣະພອນຂ້າງເທິງນີ້, ດ້ວຍເຫດນີ້ເຮົາ ທັງຫລາຍຈົ່ງຟັງຄໍາເຕືອນຂອງໂມເຊວ່າ ແຕ່ພວກທ່ານຕ້ອງລະວັງໃຫ້ດີຈົ່ງຢ່າລືມພຣະຜູ້ເປັນເຈົ້າ.

ໃນຕອນປາຍຂອງບົດ 6 ໂມເຊໄດ້ສັ່ງໃຫ້ບອກສອນພວກລູກຫລານທີ່ເກີດໃໝ່ໃຫຍ່ລຸນ ເພາະວ່າລູກຫລານທີ່ເກີດໃນແຜ່ນດິນໃໝ່ຈະບໍ່ຮູ້ເຣື່ອງການເປັນຂ້ອຍຂ້າຂອງພໍ່ແມ່ຂອງຕົນ. ໃນພາຍຄັ້ງໜ້າເມື່ອລູກຫລານຂອງທ່ານຖາມວ່າເປັນຫຍັງພຣະຜູ້ເປັນເຈົ້າຂອງເຮົາຈຶ່ງສັ່ງໃຫ້ທໍາກົດບັນຍັດພຣະທັມແລະຮີດຄອງປະເພນີເຫລົ່ານີ້ຈົ່ງບອກເຂົາວ່າເມື່ອພວກເຮົາເປັນທາດຂອງກະສັດເອຢິບ ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍເຫລືອເອົາພວກເຮົາໃຫ້ລອດພົ້ນດ້ວຍຣິດທານຸພາບອັນຍິ່ງໃຫຍ່ກັບທັງໄດ້ເຫັນພຣະອົງຊົງກະທໍາການອັສຈັນ ແລະສິ່ງອັນເປັນຕາຢ້ານຕໍ່ໜ້າຕໍ່ຕາພວກເຮົາທັງຫລາຍຕໍ່ຊາວເອຢິບຕໍ່ກະສັດຟາຣາໂອແລະຂ້າຣາຊການທັງໝົດ (ຂໍ້ 20-22).

ແລະຍັງຈຳເປັນຈະຕ້ອງບອກລູກຫລານເຖິງແຜ່ນດິນທີ່ອາສັຍຢູ່ນີ້ເປັນມາຢ່າງໃດ? ພຣະອົງຊົງນຳພາພວກເຮົາອອກມາຈາກເອຢິບ ແລະຊົງມອບແຜ່ນດິນນີ້ໃຫ້ເຮົາຢູ່ອາສັຍດັ່ງພຣະອົງໄດ້ຊົງສັນຍາໄວ້ກັບບັນພະບຸຣຸດຂອງພວກເຮົານັ້ນແລ້ວພຣະຜູ້ເປັນເຈົ້າຂອງເຮົາໄດ້ຊົງສັ່ງໃຫ້ເຊື່ອຟັງພຣະທັມທັງຫມົດນີ້ແລະໃຫ້ໂຄຣົບຢຳເກງພຣະອົງ ຖ້າພວກເຮົາປະຕິບັດຕາມທຸກສິ່ງທຸກຢ່າງທີ່ພຣະອົງຊົງສັ່ງນັ້ນກໍຈະເປັນການຖືກຕ້ອງດີ ແລະພຣະອົງກໍຈະຊົງຮັກແພງແລະເບິ່ງແຍງພວກເຮົາຕໍ່ໄປພ້ອມທັງທຳໃຫ້ປະເທດຊາດຂອງເຮົາຈະເຣີນຮຸ່ງເຮືອງຕລອດໄປ (ຂໍ້ 23-25).

<u>ຄຳຖາມ:</u>

1. ຄຳວ່າ Shema ໃນພາສາເຮັບເຣີແປວ່າຫຍັງ?

2. ການເຊື່ອຟັງປະຕິບັດຕາມພຣະດຳຣັດຂອງພຣະເຈົ້າມີຜົນດີແນວໃດ?

3. ການບໍ່ເຊື່ອຟັງພຣະເຈົ້າຈະມີຜົນສະທ້ອນແນວໃດ?

4. ເປັນຫຍັງພຣະເຈົ້າຈຶ່ງຕັກເຕືອນເຂົາບໍ່ໃຫ້ລືມພຣະອົງເມື່ອເຂົາເຂົ້າໄປຢູ່ໃນແຜ່ນດິນທີ່ສົມບູນແລ້ວ?

5. ແມ່ນຫຍັງເປັນເຄື່ອງວັດແທກວ່າເຮົາຮັກພຣະເຈົ້າດ້ວຍສຸດອົກສຸດໃຈ?

6. ເປັນຫຍັງຈຶ່ງຈຳເປັນບອກລູກຫລານເຖິງພຣະຄຸນພຣະເຈົ້າທີ່ນຳອອກຈາກການເປັນທາດ.

H.V

ສ.ຈ. ທູນພັນ ວົງສຸຣິດທ໌

# ບົດຮຽນທີ 12
# ການນະມັສການສມັຍບູຮານ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພຣະບັດຍັດສອງ 26:1-19
ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: ພຣະບັດຍັດສອງ 26
ຈຸດສໍາຄັນຂອງບົດຮຽນນີ້: ການຖວາຍເປັນພາກສ່ວນນຶ່ງຂອງການນະມັສການ.
ຄໍາຖາມເພື່ອການສໍາຣວດ: ການນະມັສການທີ່ແທ້ຈິງນັ້ນເປັນແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສໍາຣວດການນະມັສການແລ້ວແກ້ໄຂຄວາມບົກຜ່ອງ.

ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ບົດນໍາ

ແບບແຜນຂອງການນະມັສການໄດ້ປ່ຽນຈາກແຜນເດີມໄປຫລາຍສົມຄວນ, ແຕ່ລະໂບດ ແຕ່ລະນິກາຍອອກແບບການນະມັສການໄປຕາມສມັຍຂອງໃຜລາວ. ເຖິງແມ່ນການນະມັສການຈະປ່ຽນໄປຕາມຍຸກສມັຍກໍຕາມ ສໍາລັບພຣະເຈົ້າແລ້ວບໍ່ມີການປ່ຽນແປງ ແລະໂບດທຸກໂບດຍັງນະມັສການພຣະເຈົ້າອົງເດີມ, ແລະການນະມັສການທີ່ແທ້ຈິງນັ້ນແມ່ນການນະມັສການດ້ວຍໃຈຈິງ, ຈິດວິນຍານ ດ້ວຍວ່າພຣະເຈົ້າຊົງເປັນພຣະວິນຍານ ດັ່ງນັ້ນຄົນທີ່ຢູ່ຝ່າຍວິນຍານຈຶ່ງຈະນະມັສການພຣະເຈົ້າໄດ້. ວັນນີ້ເຮົາຈະເວົ້າກັນເຖິງ ການນະມັສການໃນສມັຍບູຮານທີ່ທັງການຮູ້ຈັກພຣະຄຸນ, ການສາຣະພາບຄວາມຜິດບາບ, ຄວາມຊົມຊື່ນຍິນດີ, ການຖວາຍ ແລະການເທສນາສັ່ງສອນຢ່າງຄົບຖ້ວນ.

## 1. ການຮູ້ຈັກຂອບພຣະຄຸນ 26:1-11

ກ. ພວກເຖົ້າແກ່ໂບຮານນະມັສການດ້ວຍຂອບພຣະຄຸນສອງປະເດັນຄື; 1. ເພິ່ນຖວາຍຂອບພຣະຄຸນພຣະເຈົ້າທີ່ໄດ້ເຂົ້າໄປຢູ່ແຜ່ນດິນອັນອຸດົມສົມບູນ. 2. ເພິ່ນຖວາຍເພາະວ່າເພິ່ນເຫັນພຣະພອນໃນການປູກຝັງ. (ຂໍ້ 1-2). ພວກເຖົ້າແກ່ບູຮານນໍາການຖວາຍມາຍັງພຣະວິຫານ ແລະມອບໃຫ້ປະໂຣຫິດຊຶ່ງສແດງເຖິງການນະມັສການຂອງເພິ່ນດ້ວຍການຮູ້ຈັກບຸນຄຸນ. "ເມື່ອພວກທ່ານເຂົ້າໄປຍຶດຄອງແຜ່ນດິນ ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ອາສັຍຢູ່ໃນແຜ່ນດິນນັ້ນແລ້ວແຕ່ລະຄົນ ຈົ່ງເອົາຜົນປູກແຕ່ລະຢ່າງທີ່ເກັບກ່ຽວໄດ້ທໍາອິດ ໃສ່ກະຕ່ານໍາໄປຖວາຍໄວ້ໃນສະຖານທີ່ສັກສິດຊຶ່ງເປັນບ່ອນທີ່ພຣະຜູ້ເປັນເຈົ້າຂອງພວກທ່ານໄດ້ຊົງເລືອກໄວ້ ແລະເພື່ອຈະໄດ້ໄປນະມັສການພຣະນາມພຣະອົງແລ້ວເຂົ້າໄປ

ທາປະໂຣຫິດ ຜູ້ທຳໜ້າທີ່ຕ້ອນຮັບຢູ່ໃນເວລານັ້ນ ໃຫ້ເວົ້າກັບເພິ່ນວ່າ ບັດນີ້ຂ້າພະເຈົ້າຍອມຮັບຕໍ່ ພຣະຜູ້ເປັນເຈົ້າວ່າ ຂ້າພະເຈົ້າໄດ້ມາ ຢູ່ໃນດິນແດນທີ່ພຣະອົງຊົງສັນຍາໄວ້ຕໍ່ບັນພະບຸຣຸດຂອງຂ້າພະເຈົ້າແລ້ວ ວ່າຈະມອບໃຫ້ພວກຂ້າພະເຈົ້າ (ຂໍ້ 1-3). ພວກເຖົ້າແກ່ບູຮານເພິ່ນຕຽມການຖວາຍມາກ່ອນຈະຮອດພຣະວິຫານ ດ້ວຍວ່າເພິ່ນພູມໃຈທີ່ໄດ້ຕັ້ງຖິ່ນຖານໃນແຜ່ນດິນໃໝ່ທີ່ພຣະເຈົ້າຊົງໂຜດປະທານໃຫ້ແລະຍັງ ເປັນແຜ່ນດິນທີ່ອຸດົມ ສົມບູນ. ນອກນັ້ນເຮົາຍັງເຫັນອີກວ່າເພິ່ນນຳເຄື່ອງມາຖວາຍກ່ອນເພິ່ນນະມັສການພຣະເຈົ້າ.

ດັ່ງທີ່ເຮົາຮູ້ກັນແລ້ວວ່າອິສຣາເອນເຄີຽເປັນຂ້ອຍຂ້າທີ່ປະເທດເອຢິບ 400 ປີ ພວກເຂົາເຈົ້າເປັນຄົນບໍ່ມີປະເທດ, ບໍ່ມີຄວາມເປັນຊາດຢ່າງເສຣີແຜ່ນດິນຈະຢູ່ກໍບໍ່ມີ, ພຣະເຈົ້າຊົງເມຕາປານີຈຶ່ງຊົງໃຊ້ໂມເຊຂ້າໃຊ້ຂອງພຣະອົງໄປຊ່ອຍເຂົາໃຫ້ຫລຸດພົ້ນຈາກເງື້ອມມືຂອງກະສັດຟາໂຣ. ຄວາມຈິງແລ້ວພຣະເຈົ້າຈະເອົາກະສັດເອຢິບແລະປະຊາຊົນເອຢິບອອກຈາກອິສຣາເອນກໍໄດ້ ແຕ່ພຣະອົງເລືອກອິສຣາເອນອອກຈາກເອຢິບ ແລະສັນຍາກັບບັນພະບຸຣຸດອິສເອນວ່າຈະໂຜດປະທານໃຫ້ເຂົາມີແຜ່ນດິນທີ່ອຸດົມສົມບູນຢູ່ເປັນປະເທດຊາດບ້ານເມືອງຂອງຕົນເອງ. ມາບັດນີ້ພວກເຂົາເຈົ້າກໍໄດ້ເຂົ້າມາ ຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າມອບໃຫ້ແລ້ວເຂົາຈຶ່ງມີຈິດໃຈໂມທະນາຂອບພຣະຄຸນພຣະອົງດ້ວຍການນະມັສການທີ່ນຳເອົາຜົນແຮກແຕ່ລະຊະນິດຖວາຍແກ່ພຣະເຈົ້າເພື່ອສະແດງເຖິງຄວາມຮູ້ຈັກພຣະຄຸນພຣະເຈົ້າ.

ຂ. ຜູ້ນະມັສການທີ່ແທ້ຈິງຍ່ອມຈະເປັນຜູ້ທີ່ຈົດຈຳສິ່ງທີ່ພຣະເຈົ້າໄດ້ຊ່ອຍຕົນເອງຢ່າງໃດ ໂດຍສະເພາະຢ່າງຍິ່ງແມ່ນຈື່ຈຳວ່າພຣະເຈົ້າຊົງໂຜດໃຫ້ພົ້ນ. ຄົນອິສຣາເອນຈື່ສເມີວ່າພຣະຈົ້າໄດ້ຊົງນຳອອກຈາກການເປັນຂ້ອຍຂ້າ, ແລະປາກຂອງເຂົາກໍຈະກ່າວສາຣະພາບວ່າຫາກພຣະເຈົ້າບໍ່ຊ່ອຍເຂົາໆກໍຄົງຍັງເປັນຂ້າທາດຢູ່ຕໍ່ໄປ (ຂໍ້ 5-10).

ຄ. ຜູ້ນະມັສການທີ່ແທ້ຍ່ອມຈະມີຄວາມຊົມຊື່ນຍິນດີດ້ວຍເຂົາເຫັນສິ່ງທີ່ພຣະເຈົ້າຊົງໂຜດປະທານ. ຈົ່ງມ່ວນຊື່ນຍິນດີໃນຂອງດີທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ນັ້ນ" (ຂໍ້ 11). ອິສຣາເອນມີຄວາມມ່ວນຊື່ນຍິນດີໃນຂອງປະທານຈາກພຣະເຈົ້າ. ຄຣິສຕຽນ ເຮົາສ່ວນຫລາຍຈະບໍ່ເຫັນພຣະພອນທີ່ພຣະເຈົ້າຊົງໂຜດປະທານໃຫ້ແຕ່ລະວັນໆແຕ່ກັບຈະເຫັນແຕ່ບັນຫາທີ່ເກີດຂຶ້ນແຕ່ລະວັນໆ ທັງນີ້ກໍເພາະວ່າເຮົາລືມນັບພຣະພອນທີ່ພຣະເຈົ້າຊົງໂຜດປະທານໃຫ້ແຕ່ລະວັນໆ.

ງ. ຜູ້ນະມັສການທີ່ແທ້ຈິງບໍ່ແມ່ນມີແຕ່ຈົດຈຳພຣະຄຸນ, ສາຣະພາບວ່າພຣະອົງຊ່ອຍ, ແລະຍິນດີໃນຂອງປະທານເທົ່ານັ້ນ ຜູ້ນະມັສການຕ້ອງມີການຖວາຍດ້ວຍໃຈໃສສັດທາ (ຂໍ້ 2, 12). ໃນສມັຍບູຮານເພິ່ນບໍ່ມີລາຍໄດ້ຫລາຍຄືສມັຍນີ້ແຕ່ເພິ່ນກໍຈິງໃຈຖວາຍຜົນແຮກເພື່ອເປັນການຮູ້ບຸນຄຸນພຣະເຈົ້າ ແລະເພິ່ນກໍຮູ້ວ່າການຖວາຍຜົນແຮກທຸກຢ່າງນັ້ນເປັນສ່ວນນຶ່ງຂອງການນະມັສການ. ການຖວາຍຜົນແຮກນີ້ເປັນກົດແຕ່ດຶກດຳບັນທີ່ຍັງບໍ່ມີການປ່ຽນແປງ, ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າທີ່ປາກົດນີ້ບໍ່ປ່ຽນແປງ ຫາກເພິ່ນປ່ຽນແປງວ່າພຣະເຈົ້າເອົານຶ່ງມານານແລ້ວ ຕໍ່ໄປນີ້ໃຫ້ພວກທ່ານເອົານຶ່ງ ແລະຖວາຍໃຫ້ພຣະເຈົ້າເກົ້າເຮົາຄົງຂາດເຂີນແນ່ນອນ. ດັ່ງນັ້ນເຮົາສົມຄວນພູມໃຈໃນຖວາຍນຶ່ງສ່ວນໃຫ້ ພຣະເຈົ້າເຮົາເອົາເກົ້າສ່ວນ.

ຈ. ຜູ້ນະມັສການທີ່ແທ້ມັກຈະເປັນຜູ້ສອນພຣະທັມພຣະເຈົ້າໃຫ້ຄົນລຸ້ນໃໝ່ໃຫ້ຮູ້ຈັກເຣື່ອງຂອງພຣະເຈົ້າທີ່ໄດ້ຊ່ອຍຕົນເອງໃຫ້ພົ້ນຢ່າງໃດ. ສັ່ງສອນເຂົາໃຫ້ຮູ້ຈັກພຣະຄຸນຂອງພຣະເຈົ້າ, ສອນເຂົາໃຫ້ສາຣະພາບວ່າພຣະເຈົ້າຊົງຊ່ອຍເຂົາໃຫ້ພົ້ນ, ສອນເຂົາໃຫ້ມີຄວາມມ່ວນຊື່ນແລະຍິນດີໃນຂອງປະທານ, ສອນເຂົາໃຫ້ຖວາຍຜົນແຮກ. ຫາກທ່ານເຮັດດັ່ງນີ້ຕົວຂອງທ່ານກໍຈະເຣີນຂຶ້ນ, ຕົວລູກຫລານຜູ້ທີ່ທ່ານສອນເຂົາກໍຈະໆເຣີນຂຶ້ນ ແລະພຣະວິຫານຂອງພຣະເຈົ້າກໍຈະໆເຣີນຮຸ່ງເຮືອງແລະມີອາຫານການກິນພຽງພໍສຳລັບຄົນໃນໂບດແລະນອກໂບດດ້ວຍ.

## ຂ. <u>ຜົນເກັບກ່ຽວໃນສາມປີ</u> (26:12-15)

ພຣະເຈົ້າຊົງສັ່ງອິສຣາເອນຜູ້ໄດ້ຮັບພຣະພອນຢ່າງຫລວງຫລາຍວ່າ "ຜົດຜົນນຶ່ງສ່ວນສິບທີ່ເກັບກ່ຽວໄດ້ໃນທຸກໆສາມປີ ຈົ່ງເອົາໃຫ້ຄົນເລວີ, ຄົນຕ່າງດ້າວ, ລູກກຳພ້າແລະແມ່ຫມ້າຍເສັຽ ເພື່ອເຂົາຈະໄດ້ກິນອີ່ມຫນຳສຳຣານຕາມຄວາມຕ້ອງການ" (ຂໍ້ 12-13). ຄົນເລວີເປັນຜູ້ຮັບໃຊ້ພຣະເຈົ້າໃນວິຫານສັກສິດ ເຂົາບໍ່ມີຊັບສິນບັດ (14:27-29). ດັ່ງນັ້ນທຸກ ສາມປີພຣະເຈົ້າຈຶ່ງສັ່ງອິສຣາເອນໃຫ້ນຳນຶ່ງສ່ວນສິບມາໃຫ້ຄົນເລວີຜູ້ຮັບໃຊ້ກ່ອນ ເພື່ອເປັນການຂອບໃຈທີ່ເຂົາໄດ້ເຮັດຫນ້າທີ່ໃນພຣະວິຫານ ຈາກນັ້ນພຣະເຈົ້າໃຫ້ເອົາໃຫ້ຄົນຕ່າງດ້າວທີ່ບໍ່ມີບ່ອນເຮັດໄຮ່ໄຖນາ, ຕໍ່ມາແມ່ນພວກລູກກຳພ້າທີ່ຂາດພໍ່ແມ່ລ້ຽງດູ ແລະສຸດທ້າຍແມ່ນພວກແມ່ຫມ້າຍທີ່ບໍ່ມີຜົວລ້ຽງດູ. ເວົ້າໃຫ້ເຂົ້າໃຈງ່າຍແມ່ນໃຫ້ທານຄົນທຸກຍາກໃນປີທີສາມທຸກໆສາມປີ. ສ່ວນຜົນແຮກຂອງການຖວາຍໃນປີທີນຶ່ງແລະປີທີສອງນັ້ນຈະຕ້ອງເກັບໄວ້ໃນພຣະວິຫານເພື່ອຄົນໃນພຣະວິຫານແລະຄົນທຸກຈົນໃນບໍຣິເວນນັ້ນ.

ຕ້ອງແນ່ໃນວ່າແມ່ນຜົນແຮກຂອງນຶ່ງສ່ວນສິບຂອງທຸກຢ່າງທີ່ເກັບກ່ຽວໄດ້ໃນປີທີສາມນຳໄປຢ່າງແທ້ຈິງດ້ວຍໂມເຊບອກເຂົາໃຫ້ຕໍ່ພຣະເຈົ້າວ່າ "ຂ້ານ້ອຍໄດ້ເອົາຂອງສັກສິດອອກຈາກເຮືອນຫມົດແລ້ວ" (ຂໍ້ 13ຂ) ອາດຈະມີຄວາມຫມາຍ ວ່າໃນເຮືອນນັ້ນບໍ່ມີພຣະອື່ນອີກດ້ວຍວ່າເຂົາມີແຕ່ພຣະເຈົ້າອົງດຽວ. "ຂ້ານ້ອຍໄດ້ເຊື່ອຟັງພຣະອົງຜູ້ຊົງເປັນພຣະເຈົ້າ ໄດ້ປະຕິບັດທຸກສິ່ງຕາມພຣະອົງສັ່ງໄວ້ ຂໍຊົງທອດພຣະເນດຈາກສວັນອັນບໍຣິສຸດ ຂໍຊົງອວຍພຣະພອນໃຫ້ອິສຣາເອນ ໄພ່ພົນຂອງພຣະອົງ ແລະອວຍພອນແກ່ແຜ່ນດິນອັນອຸດົມສົມບູນທີ່ພຣະອົງຊົງປະທານໃຫ້ພວກຂ້ານ້ອຍດັ່ງພຣະອົງ ໄດ້ຊົງສັນຍາໄວ້ກັບບັນພະບຸຣຸດຂອງພວກຂ້ານ້ອຍນັ້ນ" ( ຂໍ້ 14-15).

## 3. <u>ຊົງເລືອກໄພ່ພົນພິເສດ</u> 26:16-19

ເນື່ອງຈາກວ່າພຣະເຈົ້າເລືອກເອົາອິສຣາເອນເປັນໄພ່ພົນພິເສດຂອງພຣະອົງ ໂມເຊຈຶ່ງສັ່ງອິສຣາເອນໃຫ້ຟັງແລະປະຕິບັດຄຳສັ່ງແລະຣິດຄອງຂອງພຣະເຈົ້າທັງຫມົດ "ສະນັ້ນຈົ່ງເຮັດຕາມຈົນສຸດຈິດສຸດໃຈ ມື້ນີ້ທ່ານໄດ້ຮັບເອົາພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງທ່ານທັງໄດ້ສັນຍາວ່າຈະເຊື່ອຟັງ ຈະເຮັດຕາມກົດບັນຍັດແລະຣິດຄອງປະເພນີທັງຫມົດຂອງພຣະອົງ ມື້ນີ້ພຣະຜູ້ເປັນເຈົ້າໄດ້ຊົງຮັບເອົາທ່ານເປັນໄພ່ພົນພິເສດຂອງພຣະອົງຕາມທີ່ຊົງສັນຍາໄວ້ພ້ອມທັງຊົງສັ່ງໃຫ້ເຮັດຕາມກົດບັນຍັດທັງຫມົດຂອງພຣະອົງ ແລ້ວພຣະອົງຈະເຮັດໃຫ້ຊາດຂອງທ່ານໃຫຍ່ກວ່າທຸກຊາດທີ່ໄດ້ສ້າງຂຶ້ນມາ ທ່ານຈະເປັນໄພ່ພົນບໍຣິສຸດຂອງພຣະອົງຕາມທີ່ຊົງສັນຍາໄວ້ ແລະທັງຈະເປັນຜູ້ນຳເອົາກຽດຕິຍົດແລະຊື່ສຽງມາສູ່ພຣະ ນາມຂອງພຣະອົງ" (ຂໍ້ 17-19).

ພຣະເຈົ້າໄດ້ຊົງເລືອກອິສຣາເອນເປັນໄພ່ພົນພິເສດ ພວກເຂົາຈະເປັນໄພ່ພົນທີ່ເຊື່ອຟັງຄຳສັ່ງຂອງອົງພຣະຜູ້ເປັນເຈົ້າ ພຣະອົງຈະເຮັດໃຫ້ເຂົາກາຍເປັນໄພ່ພົນບໍຣິສຸດ ແລະຈະອວຍພອນໃຫ້ເຂົາເປັນຊົນຊາດໃຫຍ່ກວ່າຊາດໃດໆທີ່ພຣະອົງຊົງສ້າງມາ ເຂົາຈະນຳກຽດແລະຊື່ສຽງອັນດີມາຖວາຍພຣະນາມພຣະເຈົ້າ ດ້ວຍວ່າເຂົານະມັສການແລະປະຕິບັດຕາມບັດຍັດຂອງພຣະອົງຢ່າງຄົບຖ້ວນ. ເມື່ອອິສຣາເອນໃນສມັຍໂບຮານທີ່ພຣະເຈົ້າຊົງນຳອອກມາຈາກການເປັນຂ້ອຍຂ້າທີ່ປະເທດເອຢິບນະມັສການພຣະເຈົ້າຢ່າງຄົບຖ້ວນພຣະເຈົ້າກໍຊົງເລືອກໃຫ້ເປັນໄພ່ພົນພິເສດ ແລະອິສຣາເອນຍັງຈະເປັນປະຊາຊາດທີ່ໃຫຍ່ໄປກວ່າຊົນຊາດອີຢິບທີ່ເຄີຽເປັນເຈົ້ານາຍເຂົາ ແລະອິສຣາເອນຍັງຈະໃຫຍ່ໄປກວ່າທຸກໆຊາດ.

ພຣະເຈົ້າຊົງສຳແດງຣິດທານຸພາບຂອງພຣະອົງ ໂດຍຊົງເລືອກເອົາຊົນຊາດນ້ອຍໆ ແຖມຍັງເປັນຊົນຊາດທີ່ເປັນຂີ້ຂ້າຫນ້າຂ້ອຍທີ່ປະເທດອີຢິບໃຫ້ມາເປັນຜູ້ຍິ່ງໃຫຍ່ ດ້ວຍວ່າເຂົານະມັສການພຣະເຈົ້າດ້ວຍການຮູ້ບຸນຄຸນ, ຄວາມຍິນດີ, ເຂົາຖວາຍນຶ່ງສ່ວນສິບ ແລະການສອນຄົນຫລຸ້ນໃຫມ່ໃຫ້ຮູ້ຈັກພຣະເຈົ້າ. ເຮົາເຫັນວ່າວິທີການນະມັສການໃນສມັຍບູຮານເກີດຜົນດີເຮົາຄວນເຮັດຕາມແບບຢ່າງຂອງເພິ່ນ.

ຄຳຖາມ:

1. ເປັນຫຍັງການຖວາຍຜົນແຮກຈຶ່ງເປັນທີ່ພໍພຣະທັຍພຣະເຈົ້າ?

2. ເປັນຫຍັງອິສຣາເອນຈຶ່ງນຳຜົນແຮກມາຖວາຍພຣະເຈົ້າ? ອ່ານ ຂໍ້ 5-9.

3. ການສແດງຄວາມຮູ້ຈັກບຸນຄຸນຂອງອິສຣາເອນມີຫຍັງແດ່?

4. ຜູ້ນະມັສການແທ້ເປັນແນວໃດ?

5. ພຣະເຈົ້າສັ່ງໃຫ້ຊ່ອຍບັນດາຄົນຍາກຈົນແນວໃດ?

6. ເປັນຫຍັງພຣະເຈົ້າຈຶ່ງເລືອກອິສຣາເອນເປັນໄພ່ພົນພິເສດຂອງພຣະອົງ?

7. ການນະມັສການໃນສມັຍບູຮານຕ່າງຫຍັງກັບສມັຍນີ້ແດ່?

8. ການນະມັສການໃນສມັຍບູຮານສອນຫຍັງທ່ານແດ່?

ສຈ. ທູນພັນ ວົງສຸຣິດທ໌

# ບົດຮຽນທີ 13
# ເຊີນເລືອກຊີວິດ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພຣະບັດຍັດສອງ 30:11-20
ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: ພຣະບັດຍັດສອງ 29-30
ຈຸດສໍາຄັນຂອງບົດຮຽນນີ້: ຊົງໃຫ້ໂອກາດເລືອກຊີວິດແລະຄວາມຕາຍ
ຄໍາຖາມເພື່ອການສໍາຣວດ: ທ່ານຈະເລືອກຊີວິດແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສອນເຮົາໃຫ້ເລືອກຊີວິດທີ່ຈະເຣີນຮຸ່ງເຮືອງ

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

ບົດນໍາ

ອ່ານແຕ່ຂໍ້ທີ1 ເປັນຕົ້ນມາທ່ານກໍຈະໄດ້ໃຈຄວາມສໍາຄັນເພີ້ມ, ໂມເຊບອກອິສຣາເອນວ່າການມີຊີວິດທີ່ເຕັມໄປດ້ວຍພຣະພອນນັ້ນ ຈໍາເປັນຈະຕ້ອງເຊື່ອຟັງພຣະເຈົ້າ ດ້ວຍວ່າພຣະພອນນັ້ນມາຈາກການເຊື່ອຟັງ. ໃນບົດຮຽນວັນນີ້ເຮົາຈະມາເວົ້າກັນເຖິງໂມເຊບອກອິສຣາເອນວ່າເຂົາມີຊີວິດສອງຢ່າງທີ່ຈະເລືອກຄື: ຊີວິດທີ່ເຕັມໄປດ້ວຍພຣະພອນ ແລະຊີວິດທີ່ເຕັມໄປດ້ວຍພຣະເພີງ (ຕາມຄວາມອາຈານອິນຕາວ່າ) ຊຶ່ງຫມາຍຄວາມວ່າເປັນຊີວິດທີ່ເຕັມໄປດ້ວຍຄວາມສາບແຊ່ງ. ຊີວິດທັງສອງປະເພດນີ້ໂມເຊໄດ້ນໍາມາສເນີຕໍ່ອິສຣາເອນໃຫ້ເຂົາເລືອກເອົາຕາມໃຈຊອບ ແຕ່ໂມເຊຊັກຊວນ ໃຫ້ເລືອກເອົາຊີວິດທີ່ເຕັມໄປດ້ວຍພຣະພອນ.

1. ຄໍາສັ່ງໃຫ້ເຊື່ອຟັງ 30:11-14

ໂມເຊພະຍາຍາມອະທິບາຍພຣະບັນຍັດຂອງພຣະເຈົ້າໃນບົດ 5 ເຖິງ ບົດ 28 ບອກວ່າກົດບັນຍັດຂອງພຣະເຈົ້າບໍ່ແມ່ນການຍາກພິລຶກທີ່ຈະຕ້ອງປະຕິບັດ, ພຣະບັນຍັດທຸກຂໍ້, ທຸກຄວາມຍັງເປັນການດີຕໍ່ຜູ້ປະຕິບັດທຸກໆຄົນ. ການປະຕິບັດຕາມຄໍາສັ່ງຂອງອົງພຣະຜູ້ເປັນເຈົ້າ ເຮັດໃຫ້ຊີວິດຂອງຕົນເອງປ່ຽນແປງຈາກຈິດໃຈທີ່ມືດມົວມາເປັນຈິດໃຈທີ່ໃສສະອາດ ຄຣິສຕຽນທີ່ບໍ່ໄດ້ປະຕິບັດຕາມພຣະບັນຍັດຂອງພຣະເຈົ້ານັ້ນບໍ່ແມ່ນຄົນທີ່ບໍ່ເຂົ້າໃຈ ແຕ່ແມ່ນຄົນທີ່ມີຈິດໃຈທີ່ແຂງກະດ້າງຕໍ່ພຣະທັມ ແລະອ່ອນແອຕໍ່ຄວາມບາບຈຶ່ງເຮັດຕາມບາບ. ໂມເຊກ່າວວ່າ "ພຣະບັນຍັດທີ່ຂ້າພະເຈົ້າຈະບອກທ່ານ ໃນມື້ນີ້ບໍ່ແມ່ນວ່າເປັນຂອງຍາກຫລືເຫລືອວິໄສທີ່ທ່ານຈະເຂົ້າໃຈໄດ້ ມັນບໍ່ໄດ້ຢູ່ເທິງຟ້າຫລືທະເລ" (ຂໍ້ 11). ໂມເຊເວົ້າ ຄ້າຍຄືຄໍາພະຫຍາທີ່ພວກເຖົ້າແກ່ບູຮານມັກເວົ້າ, ຫາກພຣະບັນຍັດຢູ່ເທິງຟ້າມັນກໍເຫລືອວິໄສທີ່ມນຸດຈະຂຶ້ນໄປປະຕິບັດແທ້ ຫລືຢູ່ກາງທະເລກໍມີນ້ອຍຄົນທີ່ສຸດທີ່ສາມາດຂີ່ເຮືອໄປກາງທະເລເພື່ອປະຕິບັດຕາມພຣະບັດຍັດ. ນັກສາສນາສາດຜູ້ນຶ່ງກ່າວວ່າ ພຣະບັດຍັດຂອງພຣະເຈົ້າບໍ່ໄດ້ສູງເໝືອນຢູ່ເທິງຟ້າທີ່ມະນຸດບໍ່ສາມາດຄວ້າເຖິງໄດ້ ແລະຍັງບໍ່ຢູ່ກາງທະເລພໍທີ່ຈະຂີ່ເຮືອເປັນມື້ເປັນຄືນໄປເອົາມາໄດ້ ແຕ່ໄດ້ບັນທຶກໃນປຶ້ມບັນທຶກເປັນພາສາມະນຸດທີ່ອ່ານແລ້ວສາມາດເຂົ້າໃຈທຸກຂໍ້ຄວາມ. ເມື່ອເປັນເຊັ່ນນີ້ຈຶ່ງບໍ່ເປັນການຍາກເຫລືອວິໄສທີ່ຈະປະຕິບັດໄດ້ ຫາກເຮົາເລືອກປະ

ຕິບັດ. ພຣະບັນຍັດນີ້ໂມເຊກ່າວວ່າ "ມັນຢູ່ກັບທ່ານເອງ ຊຶ່ງທ່ານສາມາດເຂົ້າໃຈແລະຍົກມາເປັນຂໍ້ອ້າງອີງໄດ້ ສະນັ້ນຈົ່ງປະພຶດຕາມເຖີ້ນ" (ຂໍ້ 14).

ທ່ານເຄີຽກິນແໜງບໍ່? ຄຳວ່າກິນແໜງໃຈແປວ່າເສັຍໃຈທີ່ບໍ່ໄດ້ເຮັດຕາມຄຳແນະນຳ ຫລືບໍ່ຮູ້, ຫລືບໍ່ເຂົ້າໃຈຈຶ່ງພາໃຫ້ເສັຽໃຈຕາມພາຍຫລັງ. ຂ້າພະເຈົ້າເຄີຽຖາມພີ່ນ້ອງໃນໂບດວ່າ ທ່ານເຄີຽກິນແໜງບໍ່? ພີ່ນ້ອງໃນໂບດກໍພາກັນງຶກຫົວ, ຕໍ່ມາກໍຖາມອີກວ່າກິນແໜງແຊບບໍ່? ເຂົາເຈົ້າກໍພາກັນຍິ້ມຊື່ໆ. ຂ້າພະເຈົ້າກິນແໜງທີ່ບໍ່ຟັງຄວາມພໍ່ແມ່ແລະຍັງກິນແໜງທີ່ບໍ່ຍອມເຊື່ອຟັງພຣະທັມພຣະເຈົ້າ ແຕ່ຄາວໄດ້ຍິນຂ່າວປະເສີດຄັ້ງແຣກທີ່ໝູ່ໂຮງຮຽນເລົ່າໃຫ້ຟັງ, ຫາກຟັງຄວາມພໍ່ແມ່ແລະເຊື່ອພຣະເຈົ້າແຕ່ຕອນແຣກຊີວິດຄົງຈະບໍ່ໂຊກຊືນຈົນເກືອບຈະເອົາຊີວິດບໍ່ລອດຈຶ່ງຮູ້ຈັກກັບພຣະເຈົ້າ.

2. <u>ເລືອກເອົາເອງ</u> 30:15-20

ເບິ່ງຄ້າຍຄືວ່າໂມເຊໄດ້ເອົາຂອງສອງຢ່າງມາວາງຕໍ່ໜ້າປະຊາຊົນ ແລ້ວຊີ້ແຈງຂອງທັງສອງຢ່າງແລ້ວບອກປະຊາຊົນວ່າໃຫ້ເຂົາເລືອກເອົາຕາມໃຈຊອບ. ພຣະເຈົ້າບໍ່ເຄີຽບັງຄັບໃຜໃຫ້ເຊື່ອໃນພຣະອົງເລີ້ມແຕ່ສມັຍສ້າງໂລກເປັນຕົ້ນມາ, ຫລັງຈາກພຣະເຈົ້າສ້າງອາດາມແລະເອວາແລ້ວ "ໝາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ໝົດ ເວັ້ນແຕ່ກົກທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ" (ປຖກ 2: 16-17). ຫລັງຈາກນັ້ນມາທັງສອງກໍເລືອກເຮັດຕາມໃຈຕົນເອງຈຶ່ງກາຍເປັນຄວາມຜິດບາບ ພຣະເຈົ້າຈຶ່ງຖາມວ່າ "ບໍ່ແມ່ນເຈົ້າກິນໝາກໄມ້ທີ່ເຮົາໄດ້ຫ້າມນັ້ນຫລື? ຊາຍຜູ້ນັ້ນຕອບວ່າ ໂດຍຂ້ານ້ອຍ ແມ່ນຜູ້ຍິງທີ່ພຣະອົງປະທານໃຫ້ ນັ້ນເອົາໝາກໄມ້ໃຫ້ຂ້ານ້ອຍກິນ" (ປຖກ 3: 11-12).

ພຣະບັດຍັດທີ່ໂມເຊກ່າວຕໍ່ອິສຣາເອນກໍມີລັກສະນະຄ້າຍຄືກັນກັບພຣະເຈົ້າຊົງສັ່ງອາດາມແລະເອວາ, ໂມເຊເວົ້າວ່າ "ມື້ນີ້ຂ້າພະເຈົ້າໄດ້ເອົາຄວາມຮັ່ງມີແລະຊີວິດ ຫລືການທຳແລະຄວາມຕາຍມາໃຫ້ທ່ານເລືອກ" (ຂໍ້ 15). ເບິ່ງຄ້າຍກັບວ່າໂມເຊແບ່ງເປັນສອງພູດດັ່ງນີ້:

ພູດທີ 1 ແມ່ນຄວາມຮັ່ງມີແລະຊີວິດ ໂດຍກ່າວວ່າ: "ຖ້າວ່າທ່ານເຮັດຕາມ ພຣະບັນຍັດຂອງພຣະຜູ້ເປັນເຈົ້າທີ່ຂ້າພະເຈົ້າໃຫ້ໃນມື້ນີ້ ຄືວ່າຮັກແລະເຊື່ອຟັງພຣະອົງພ້ອມທັງປະຕິບັດຕາມກົດບັນຍັດພຣະທັມ ແລະຮີດຄອງປະເພນີທັງໝົດ ທ່ານກໍຈະເຮີນຮຸ່ງເຮືອງ ແລະກາຍເປັນຊົນຊາດໃຫຍ່ ພຣະຜູ້ເປັນເຈົ້າຈະຊົງອວຍພອນທ່ານໃນແຜ່ນດິນທີ່ເຂົ້າຍຶດຄອງ" (ຂໍ້ 16).

ພູດທີ 2 ແມ່ນການທຳລາຍແລະຄວາມຕາຍໂດຍກ່າວວ່າ: ຖ້າມີໃຈດື້ດ້ານບໍ່ຍອມຟັງ ແລະຖືກເຂົາລໍ້ລວງໃຫ້ຂາບໄຫວ້ພຣະອື່ນ ຂ້າພະເຈົ້າຂໍເຕືອນທ່ານໃນທີ່ນີ້ແລະດຽວນີ້ວ່າພວກທ່ານຈະຖືກທຳລາຍ ຈະມີຊີວິດບໍ່ຍືນນານຢູ່ໃນແຜ່ນດິນທີ່ກຳລັງຈະຂ້າມແມ່ນ້ຳຈໍແດນໄປຍຶດຄອງ" (ຂໍ້ 17-18).

ໃນຣະຫວ່າງສອງພູດທີ່ໂມເຊແບ່ງນັ້ນໄດ້ວາງຕໍ່ໜ້າອິສຣາເອນ ແລະສອງພູດນັ້ນຍັງວາງຕໍ່ໜ້າເຮົາທັງຫລາຍໄດ້ເລືອກຄືກັນ, ອິສຣາເອນຈະເລືອກເອົາພູດໃດນັ້ນກໍສຸດແລ້ວແຕ່ໃຈມັກ ແຕ່ໂມເຊພະຍາຍາມບອກອິສຣາເອນໃຫ້ເລືອກ ເອົາພູດຂອງຄວາມຮັ່ງມີແລະຊີວິດ ແລະຂ້າພະເຈົ້າກໍຢາກຊັກຊວນທ່ານເລືອກເອົາພູດທີ່ໂມເຊແນະນຳນັ້ນຄືກັນ. "ບັດນີ້ຂ້າພະເຈົ້າຂໍໃຫ້ທ່ານເລືອກເອົາລະຫວ່າງຊີວິດກັບຄວາມຕາຍ ລະຫວ່າງພຣະພອນກັບຄຳສາບແຊ່ງຂອງພຣະເຈົ້າ ຂໍສິ່ງສັກສິດໃນສວັນແລະໂລກ ຈົ່ງເປັນພະຍານຕໍ່ການເລືອກນີ້ ສະນັ້ນຂໍໃຫ້ທ່ານເລືອກເອົາຊີວິດເຖີ້ນ" (ຂໍ້ 19).

ເມື່ອເຮົາທັງຫລາຍເບິ່ງພູດຂອງຊີວິດທີ່ເຕັມໄປດ້ວຍພຣະພອນ ແລະຄວາມຕາຍທີ່ເຕັມໄປດ້ວຍຄວາມສາບແຊ່ງແລ້ວແນ່ນອນໃຜໆກໍຈະເລືອກພູດຂອງຊີວິດທີ່ເຕັມໄປດ້ວຍພຣະພອນ ແຕ່ຊີວິດທີ່ເຕັມໄປດ້ວຍພຣະພອນນັ້ນບໍ່ແມ່ນເລືອກ

ແລ້ວກໍແລ້ວໄປ ເພາະວ່າຊີວິດທີ່ເຕັມໄປດ້ວຍພຣະພອນນັ້ນແມ່ນເພິ່ນໄດ້ບອກແລ້ວວ່າຕ້ອງ "ຮັກແລະເຊື່ອຟັງພຣະອົງ ພ້ອມທັງປະຕິບັດຕາມກົດບັນຍັດ ພຣະທັມ ແລະຮີດຄອງປະ ເພນີທັງຫມົດ" (ຂໍ້ 16).

ຄໍາຖາມ:

1. ໂມເຊນໍາເອົາຫຍັງມາໃຫ້ອິສຣາເອນ?

2. ເປັນຫຍັງອິສຣາເອນຈໍາຕ້ອງຮັກແລະເຊື່ອຟັງແລ້ວປະຕິບັດຕາມພຣະບັດຍັນຂອງພຣະເຈົ້າ?

3. ພຣະບັດຍັດນີ້ພຣະເຈົ້າໃຫ້ອິສຣາເອນຕອນໃດ?

4. ໂມເຊບອກວ່າພຣະບັດຍັດນີ້ຢູ່ໃກ້ແລະໄກຢ່າງໃດ?

5. ຫາກອິສຣາເອນປະຕິບັດຕາມພຣະບັນຍັດຈະມີຫຍັງດີແດ່?

6. ຫາກອິສຣາເອນບໍ່ປະຕິບັດມີຜົນຮ້າຍຢ່າງໃດ?

7. ໂມເຊຢາກໃຫ້ອິສຣາເອນເລືອກເອົາພຣະພອນພູດໃດ?

8. ທ່ານເດຈະເລືອກເອົາພູດໃດ?

ສຈ. ຫູມພັນ ວົງສຸຣິດທ໌

# ບົດຮຽນວັນການຄືນພຣະຊົນ
## ຕອບສນອງຕໍ່ການຄືນພຣະຊົນຂອງພຣະເຢຊູ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ມັດທາຍ 28:1-10, 16-20
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ມັດທາຍ 28
ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຕອບສນອງຕໍ່ການຄືນພຣະຊົນຂອງພຣະເຢຊູດ້ວຍຄວາມປິຕິຍິນດີ, ດ້ວຍການນະມັສການ, ແລະດ້ວຍການເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງໃຫ້ໄປເຮັດໃຫ້ທຸກຄົນເປັນລູກສິດຂອງພຣະອົງ.
ຄຳຖາມເພື່ອການສຳຫລວດ: ພວກເຮົາໄດ້ສະແດງອອກໃຫ້ຄົນອື່ນເຫັນວ່າພວກເຮົາເຊື່ອໃນການຄືນພຣະຊົນຂອງພຣະເຢຊູຫລາຍປານໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ຂ້າພະເຈົ້າຕັດສິນໃຈວ່າ ມີຫລາຍວິທີທາງທີ່ຂ້າພະເຈົ້າຈະຕອບສນອງຕໍ່ຂ່າວປະເສີດໃນການຄືນພຣະຊົນຂອງອົງພຣະເຢຊູ.

## ບົດຮຽນ

### ຄຳນຳ

ການຄືນພຣະຊົນຂອງອົງພຣະເຢຊູເປັນຮາກຖານຂອງຄວາມຫວັງແລະໃຫ້ກຳລັງໃຈໃນການດຳເນີນຊີວິດແຕ່ລະວັນ.

### 1. ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍຄວາມຍິນດີ (28:1-10)

ການຄືນພຣະຊົນເປັນເຫດການອັນຂັ້ນຕອນໃນຂ່າວປະເສີດທີ່ມັດທາຍໄດ້ບັນທຶກໄວ້ ແລະເປັນເຣື່ອງລາວຫລັງຈາກທີ່ພຣະເຢຊູໄດ້ຖືກນຳໄປຄຶງໄວ້ທີ່ໄມ້ກາງແຂນ. ຜູ້ຍິງກຸ່ມນີ້ໄດ້ເປັນພຍານເຖິງເຫດການຄວາມທາລຸນຂອງການຄຶງພຣະອົງໄວ້ທີ່ໄມ້ກາງແຂນ ພວກເຂົາຍັງເປັນພຍານເຖິງເຫດການຂອງການຄືນພຣະຊົນຂອງພຣະອົງອີກດ້ວຍ. ພວກເຂົາແມ່ນມາຣີອາໄທມັກດາລາແລະມາຣີອາອີກຄົນນຶ່ງ, ມາຣີອາມານດາຂອງຢາໂກໂບແລະໂຢເຊບ ກັບມານດາຂອງລູກຊາຍຂອງເຊເບດາຍ (ມັດທາຍ 27:56, 61; 28:1).

ຫລັງຈາກວັນຊາບາໂຕ (ວັນພຣະ ຫລື ວັນສິນ ເລີ້ມຈາກຕອນແລງຕາເວັນຕົກດິນຂອງວັນສຸກໄປຈົນເຖິງຕອນແລງຂອງວັນເສົາ) ໃນວັນອາທິດຕອນເຊົ້າ ມາຣີອາໄທມັກດາລາແລະມາຣີອາອີກຄົນນຶ່ງກໍໄດ້ພາກັນໄປເບິ່ງອຸບໂມງບ່ອນທີ່ພວກເຂົາວາງພຣະເຢຊູໄວ້ ເມື່ອໄປຮອດພວກເຂົາກໍເຫັນເຫດການອັນອັສຈັນເກີດຂຶ້ນ ພວກເຂົາໄດ້ເປັນພຍານເຖິງການຄືນພຣະຊົນຂອງພຣະອົງ. ໃນສມັຍນັ້ນ ສັງຄົມຂອງພວກເຂົາເຫັນວ່າຜູ້ຍິງບໍ່ມີຣະດັບອັນໃດເລີຍ ພວກເຂົາຈະບໍ່ຮັບຮູ້ຄຳເວົ້າອັນໃດຂອງຜູ້ຍິງຈະຢູ່ໃນທີ່ສາທາຣະນະຊົນ ຫລືຢູ່ໃນສານກໍຕາມ. ໃນສັຕວັດທີນຶ່ງຜູ້ຍິງຖືກຈັດໄວ້ຢູ່ໃນປະເພດອັນດັບສອງ. ແຕ່ເຖິງຢ່າງໃດກໍຕາມ ໃນຂ່າວປະເສີດຂອງອົງພຣະເຢຊູ ການຄືນພຣະຊົນຂອງພຣະອົງ ແມ່ນຜູ້ຍິງທີ່ເປັນຜູ້ທຳອິດເປັນພຍານໃຫ້ການເຖິງຂ່າວປະເສີດນີ້. ເຣື່ອງລາວອັນພິເສດສຸດຂອງຂ່າວປະເສີດໄດ້ບອກເຖິງການມາຂອງຍຸກສມັຍໃຫມ່ດ້ວຍເຣື່ອງລາວຊີວິດຂອງພຣະເຢຊູ, ການສິ້ນພຣະຊົນ, ແລະການຄືນພຣະຊົນຂອງພຣະອົງ. ໃນຍຸກສມັຍໃຫມ່ນີ້ໄດ້ຮຽກຮ້ອງເຖິງຄວາມສເມີພາບລະຫວ່າງຜູ້ຊາຍແລະຜູ້ຍິງ (ຄາລາເຕັຽ 3:28).

ເຣື່ອງລາວການຄືນພຣະຊົນຂອງພຣະເຢຊູ ມີແຕ່ມັດທາຍເທົ່ານັ້ນທີ່ໃຫ້ການວ່າ ເກີດມີແຜ່ນດິນຫວັ່ນໄຫວໃນຂນະທີ່ພວກຜູ້ຍິງມາຮອດອຸບໂມງ (ມັດທາຍ28:2). ສິ່ງທີ່ຫນ້າສົນໃຈທີ່ໃຫ້ສັງເກດການນັ້ນ ພຣະອົງຊົງຄືນພຣະຊົນແລ້ວ

ໃນເຫດການຕອນນີ້. ສະນັ້ນແຫລະ ເທວະດາບໍ່ໄດ້ກິ້ງກ້ອນຫີນອອກຈາກອຸບໂມງເພື່ອໃຫ້ພຣະອົງອອກມາ ແຕ່ກ້ອນຫີນນັ້ນຖືກກິ້ງອອກກໍເພື່ອເປັນພຍານໃຫ້ພວກຜູ້ຍິງເຫັນວ່າອຸບໂມງນັ້ນວ່າງເປົ່າ. ກ້ອນຫີນທີ່ປິດປາກອຸບໂມງຫລືປະຕູຫ້ອງຊັ້ນບົນບ່ອນພວກລູກສິດຂອງພຣະອົງຊຸມນຸມຢູ່ນັ້ນ ບໍ່ສາມາດຈະຂັດຂວາງພຣະອົງໄດ້ເລີຍ (ໂຢຮັນ 20:19). ແຜ່ນດິນຫວັ່ນໄຫວແລະການຊົງປາກົດຂອງເທວະດາເຮັດໃຫ້ຄົນເຝົ້າຍາມອຸບໂມງນັ້ນຢ້ານແລະກາຍເປັນເຫມືອນຄົນຕາຍ ຜູ້ຍາມຄົນຕາຍກາຍເປັນເຫມືອນຄົນຕາຍໃນຂນະທີ່ຜູ້ຕາຍກັບກາຍຄືນມາມີຊີວິດ (ມັດທາຍ 28:4).

ພວກຜູ້ຍິງເກີດຄວາມຢ້ານ ເທວະດາຈຶ່ງກ່າວຕໍ່ພວກເຂົາວ່າ "ພວກເຈົ້າຢ່າຊູ່ຢ້ານ." ຄວາມຢ້ານຫລືຄວາມຕົກໃຈນັ້ນອາດຈະເປັນຍ້ອນວ່າພວກເຂົາບໍ່ເຫັນພຣະສົບຂອງພຣະເຢຊູຢູ່ໃນອຸບໂມງ ແຕ່ວ່າພຣະອົງຊົງຄືນມາແລ້ວ. ຄໍາໃຫ້ການຂອງເທວະດານັ້ນແມ່ນຫົວໃຈຂອງຂ່າວປະເສີດ ພຣະອົງ ຖືກບັນດານໃຫ້ເປັນຄືນມາ (28:6). ພຣະເຈົ້າບັນດານໃຫ້ພຣະເຢຊູຄືນມາ. ພວກຜູ້ຍິງທັງຢ້ານແລະທັງຍິນດີຫລາຍເມື່ອໄດ້ຍິນແລະໄດ້ເຫັນເຫດການນັ້ນ (28:8). ຄວາມຮູ້ສຶກດັ່ງກ່າວເປັນຂອງທັມມະດາ ຄວາມຢ້ານແລະຄວາມຍິນດີໄປນໍາກັນເມື່ອຮັບໃຊ້ພຣະເຈົ້າ.

ເຫດການຕໍ່ມາ ແມ່ນພຣະເຢຊູຊົງປາກົດໃຫ້ພວກຜູ້ຍິງເຫັນ ໃນຂນະທີ່ພວກເຂົາກໍາລັງຈະນໍາເອົາຂ່າວດີຈາກເທວະດາໄປບອກພວກສາວົກຂອງພຣະອົງ (28:9-10). ພຣະອົງຊົງທັກທາຍພວກເຂົາວ່າ "ຈົ່ງຈະເຣີນເທີ້ນ." ພວກເຂົາໄດ້ຈັບ "ພຣະບາດນະມັສການພຣະອົງ" (28:9). ໃນສມັຍນັ້ນ ການຈັບພຣະບາດຫມາຍເຖິງການຖວາຍຕົວແລະການສະແດງອອກເຖິງຄວາມຈົງຮັກພັກດີຕໍ່ເຈົ້ານາຍຫລືກະສັດ.

ໃນເທສການວັນຄືນພຣະຊົນຂອງພຣະເຢຊູ ທ່ານຈະເຫັນພຣະອົງຫລືບໍ່? ທ່ານຈະເຫັນພຣະອົງດ້ວຍຊີວິດທີ່ປ່ຽນແປງຫລືບໍ່? ທ່ານສາມາດສັມຜັດກັບຄວາມຈິງຂອງພຣະເຢຊູເຊິ່ງສະຖິດຢູ່ໃນຊີວິດຂອງທ່ານຫລືບໍ່?

2. ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍການນະມັສການ (28:16-18)
ພວກສາວົກເຊື່ອຖ້ອຍຄໍາຂອງພວກຜູ້ຍິງແລະພວກເຂົາໄດ້ໄປແຂວງຄາລີເລ. ແຂວງຄາລີເລເປັນບ່ອນທີ່ເທວະດາຮ່ວມທັງພຣະເຢຊູໄດ້ບອກໃຫ້ພວກຜູ້ຍິງໄປບອກພວກສາວົກຂອງພຣະອົງໃຫ້ໄປລໍຖ້າຢູ່ທີ່ນັ້ນ (28:7, 10). ແຂວງຄາລີເລເປັນບ່ອນທີ່ພຣະອົງແລະພວກສາວົກຂອງພຣະອົງໄປພັກຜ່ອນ ແຕ່ເປັນບ່ອນທີ່ຖືກັນວ່າເປັນ "ແຂວງຄາລີເລແຫ່ງບັນດາປະຊາຊາດ" (4:15). ຄໍາວ່າ "ປະຊາຊາດ" ໃນທີ່ນີ້ແມ່ນຮ່ວມກັບຄົນຕ່າງຊາດອີກດ້ວຍ. ຂົງເຂດນີ້ເປັນຈຸດສໍາຄັນ ພຣະອົງຊົງເລືອກເອົາຂົງເຂດນີ້ເປັນບ່ອນລິເລີ້ມການປະກາດ ແລະເປັນບ່ອນສົ່ງຜູ້ຮັບໃຊ້ຂອງພຣະອົງອອກໄປປະກາດໃຫ້ກັບບັນດາປະຊາຊາດແລະເຮັດໃຫ້ພວກເຂົາເປັນລູກສິດຂອງພຣະອົງ ບໍ່ພຽງແຕ່ຄົນຢິວເທົ່ານັ້ນ ແຕ່ໄປຫາຄົນຕ່າງຊາດອີກດ້ວຍ. ກ່ອນວັນຄືນພຣະຊົນຫລືວັນຫລັງຄືນພຣະຊົນກໍຕາມ ພຣະອົງສຸມໃສ່ການປະກາດແລະການສັ່ງສອນ ເພື່ອສ້າງພື້ນຖານໃຫ້ມີກອງປະກາດຂອງຄຣິສຕຽນ.

ເມື່ອພວກສາວົກຂອງພຣະເຢຊູເຫັນພຣະອົງແລ້ວພວກເຂົາຂາບໄຫວ້ນະມັສການ (28:17). ແຕ່ມັດທາຍໄດ້ບັນທຶກຕື່ມໄປອີກວ່າ "ລາງຄົນຍັງສົງສັຍຢູ່" (28:17). ໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າພວກເຂົາສົງສັຍວ່າແມ່ນພຣະອົງແທ້ຫລືບໍ່ ຖ້າບໍ່ແມ່ນພຣະອົງແທ້ ພວກເຂົາຄົງຈະບໍ່ນະມັສການພຣະອົງ. ພວກເຂົາອາດຈະສົງສັຍໄປວ່າແມ່ນຫຍັງຈະເກີດຂຶ້ນຕໍ່ໄປໃນຂ້າງຫນ້າ. ພວກເຂົາອາດຈະຢູ່ໃນສະພາບບໍ່ສາມາດເອົາແນ່ນອນໃນການຕັດສິນໃຈ. ພຣະອົງຢັ່ງຮູ້ຈິດໃຈແລະຄວາມສົງສັຍຂອງພວກເຂົາ ພຣະອົງຊົງຫຍັບເຂົ້າມາໃກ້ "ພວກສາວົກສິບເອັດຄົນ" (ແລະບາງທີອາດຈະມີຈໍານວນຜູ້ຕິດຕາມຫ້າຮ້ອຍຄົນກໍໄດ້; ໃຫ້ເບິ່ງ 1ໂກຣິນໂທ 15:6) ແລ້ວປະກາດຕໍ່ພວກເຂົາວ່າ "ອໍານາດທັງຫມົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ" (ມັດທາຍ 28:18). ພຣະເຈົ້າຊົງມອບອໍານາດທັງຫມົດຂອງພຣະອົງໃຫ້ກັບພຣະເຢຊູ.

ສິ່ງທຳອິດທີ່ບົ່ງບອກໃຫ້ເຫັນວ່າ ພຣະເຢຊູໄດ້ຮັບອຳນາດທັງໝົດໃນສວັນແລະທີ່ແຜ່ນດິນໂລກ ການປະກາດຂອງພຣະອົງຈຶ່ງຂະຫຍາຍວົງກວ້າງກວມໄປໝົດຫລັງຈາກການຄືນພຣະຊົນຂອງພຣະອົງ. ພຣະອົງມີອຳນາດແລະສິດທິປະກາດຢ່າງເຕັມປ່ຽມຈຶ່ງເປັນພະລັງເພີ່ງໃຫ້ກັບພວກສາວົກມີຄວາມໝັ້ນໃຈອອກໄປທຸກທົ່ວມຸມໂລກປະກາດຂ່າວປະເສີດເຊິ່ງເປັນພຍານເຣື່ອງລາວຂອງພຣະອົງ.

ການນະມັສການດ້ວຍຄວາມຈິງໃຈຈະຕ້ອງມີຜົນ ຄືຍອມອອກໄປຕາມບັນຊາສັ່ງ. ຜູ້ປະກາດພຣະທັມເອຊາຢາມີປະສົບການກັບຊີວິດທີ່ມີການປ່ຽນແປງໃນການນະມັສການຈຶ່ງໄດ້ສອນໃຫ້ພວກເຮົາເວົ້າວ່າ "ຂ້ານ້ອຍຈະໄປດອກ ໂຜດໃຊ້ຂ້ານ້ອຍຖ້ອນ" (ເອຊາຢາ 6:8). ວັນຄືນພຣະຊົນຂອງປີນີ້ໄດ້ສົ່ງທ່ານໄປໃສແດ່? ທ່ານຖືກສົ່ງໄປຫາຜູ້ໃດ?

3. <u>ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍການເຊື່ອຟັງ</u> (28:19-20)
ຄຳສັ່ງຂອງພຣະເຢຊູທີ່ໄດ້ສັ່ງໃຫ້ພວກສາວົກອອກໄປນັ້ນມີຄຳນຶ່ງທີ່ບົ່ງບອກວ່າ "ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ". ໃນຂໍ້ຄວາມດັ່ງກ່າວຕິດຕາມດ້ວຍຂໍ້ຄຳສັ່ງສາມປະການ <u>ຈົ່ງໄປ</u>, "ໃຫ້ເຂົາຮັບບັບຕິສະມາ," ແລະ "ສັ່ງສອນເຂົາ."

ໃຫ້ຈຳໄວ້ວ່ານີ້ເປັນຄຳສັ່ງໃຫ້ປະຕິບັດຕາມດ້ວຍການເຊື່ອຟັງ. ເມື່ອມາຮອດນີ້ແລ້ວ ຂໍຖາມແດ່ ທ່ານໄດ້ເຮັດໃຫ້ຜູ້ໃດຜູ້ນຶ່ງເປັນລູກສິດແລ້ວຫລືຍັງໃນຊີວິດຂອງທ່ານ? ເມື່ອພຣະອົງສັ່ງວ່າຈົ່ງໄປແລະຄຳຕໍ່ມາແມ່ນຈົ່ງເຮັດໃຫ້ "ຄົນທຸກຊາດ" ຄວາມໝາຍຂອງຄຳນີ້ແມ່ນໝາຍເຖິງຄຣິສຕະຈັກທີ່ມີນິມິດເບິ່ງເຫັນ ເພື່ອເຮັດໃຫ້ຄົນໃນທ້ອງຖິ່ນແລະຄົນໃນໂລກດ້ວຍ.

ໃຫ້ພວກເຮົາໂຈະໄວ້ແລະຖາມຕົວຂອງພວກເຮົາເອງແລະຄຣິສຕະຈັກຂອງພວກເຮົາອີກດ້ວຍວ່າ: <u>ຖ້າວ່າຈະເຮັດໃຫ້ "ຄົນທຸກຊາດ" ເປັນລູກສິດ, ມີຊາດໃດແດ່ໃນຄຸ້ມຄອງຂອງທ່ານແລະໄປຈົນເຖິງທຸກທົ່ວມຸມໂລກ ທ່ານຈະເຮັດໃຫ້ພວກເຂົາເປັນລູກສິດໄດ້ຢ່າງໃດແລະວິທີໃດ?</u> ນີ້ຄືນິມິດທີ່ພວກເຮົາໄດ້ເຫັນມາແລ້ວໃນປະວັດສາດຂອງການຊົງໄຖ່: "ມີຝູງຄົນຫລວງຫລາຍເຫລືອຄະນານັບ ມາຈາກທຸກປະເທດ, ທຸກກະກຸນ, ທຸກຊາດ, ແລະທຸກພາສາ ຄົນເຫລົ່ານັ້ນນຸ່ງເຄື່ອງສີຂາວ, ຖືກ້ານຕານ, ຢືນຢູ່ຕໍ່ໜ້າພຣະຣາຊບັນລັງແລະຕໍ່ພຣະພັກພຣະເມສານ້ອຍ (ພຣະນິມິດ 7:9).

ພື້ນຖານຂອງການເຮັດໃຫ້ເປັນລູກສິດ ແມ່ນເຮັດໃຫ້ຜູ້ໃດຜູ້ນຶ່ງເປັນລູກສິດຂອງພຣະເຢຊູ. ອ້າງອີງຕາມພຣະທັມມັດທາຍ ເຮັດໃຫ້ຜູ້ໃດຜູ້ນຶ່ງເປັນລູກສິດ ແມ່ນເຮັດໃຫ້ຜູ້ນັ້ນຕິດຕາມຄວາມຊອບທັມເຊິ່ງພົບໄດ້ໃນຄຳສອນຂອງພຣະເຢຊູ (ມັດທາຍ 7:24-29).

ປະການທີສອງໃນພຣະທັມມັດທາຍ 28:19 ແມ່ນ "ໃຫ້ເຂົາຮັບບັບຕິສະມາ." ການຮັບບັບຕິສະມາແມ່ນຜົນສະທ້ອນຈາກຄວາມສັມພັນລະຫວ່າງພຣະເຢຊູແລະລູກສິດໃໝ່ຂອງພຣະອົງ. ລູກສິດໃໝ່ມີສິດເຂົ້າຮ່ວມສາຍສັມພັນກັບພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ.

ປະການທີສາມແມ່ນ "ສັ່ງສອນ." ພຣະເຢຊູຊົງສັ່ງວ່າ "ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ" (28:20). ການເຮັດໃຫ້ຜູ້ໃດຜູ້ນຶ່ງເປັນລູກສິດ ໝາຍຄວາມວ່າໃຫ້ພວກເຮົາສອນລູກສິດຜູ້ນັ້ນໃຫ້ເຊື່ອຟັງຂໍ້ຄຳສອນທຸກຕອນຂອງອົງພຣະເຢຊູ. ກ່ອນອື່ນ ໃຫ້ຊອກສແວງຫາຣາຊອານາຈັກຂອງພຣະເຈົ້າແລະຄວາມຊອບທັມຂອງພຣະອົງນັ້ນຄືເປົ້າໝາຍທີ່ຈະຕ້ອງສຸມໃສ່ຕາມພຣະທັມມັດທາຍ. ນຳເອົາຄຳສັ່ງສອນຂອງພຣະອົງມາປະຕິບັດ, ປະກອບໃນຊີວິດ, ໃຫ້ເປັນອັນທີ່ຮູ້ແທ້ເຫັນຈິງນັ້ນຄືເປົ້າໝາຍຂອງການເປັນລູກສິດ.

ນອກເຫນືອໄປກວ່ານັ້ນອີກ ໃນຂນະທີ່ພວກເຮົາເຮັດຢ່າງນີ້ ພຣະຜູ້ເປັນເຈົ້າຜູ້ຊົງຄືນພຣະຊົນໄດ້ສະຖິດຢູ່ນຳພວກເຮົາ ເພື່ອຊ່ອຍພວກເຮົາໃຫ້ກາຍເປັນລູກສິດຂອງພຣະອົງແຕ່ລະວັນເລື້ອຍໄປ.

ໃນເທສການຂອງວັນຄືນພຣະຊົນຂອງພຣະເຢຊູນີ້ ເປັນຣະດູການສັຣເສີນແລະເປັນຣະດູການເຮັດໃຫ້ມີຄວາມໝາຍ. ໃຫ້ເຕັມລົ້ນໄປດ້ວຍຄວາມຍິນດີ. ໃຫ້ມີພາບພົດໃຫມ່ໃນການນະມັສການ ທາງສ່ວນຕົວແລະໃນທີ່ຊຸມຊົນດ້ວຍ. ໃຫ້ເຊື່ອຟັງໃນການເຮັດໃຫ້ຄົນອື່ນເປັນລູກສິດໃນປີນີ້.

<u>ຄຳຖາມ</u>

1. ທ່ານມີແຜນການຢ່າງໃດທີ່ຈະເຮັດໃຫ້ຊີວິດຂອງຄົນໃນຄອບຄົວຂອງທ່ານໄດ້ຮັບຄວາມຍິນດີໃນການຄືນພຣະຊົນຂອງພຣະເຢຊູ?

2. ທ່ານມີແຜນການອັນໃດ ທີ່ຈະເຮັດໃຫ້ງານສເລີມສລອງໃນວັນຄືນພຣະຊົນຂອງພຣະເຢຊູໃຫ້ມີຄວາມໝາຍອັນເລິກເຊິ່ງໃນຊີວິດຂອງທ່ານ?

3. ທ່ານໄດ້ຈັດຕຽມຈິດໃຈຂອງທ່ານຢ່າງໃດ ໃນວັນສຸກຂອງວັນທີ່ພຣະເຢຊູສິ້ນພຣະຊົນ ແລະວັນຄືນພຣະຊົນຂອງພຣະອົງ?

4. ທ່ານຈະໜູນໃຈສິດຍາພິບານຂອງທ່ານ, ຜູ້ນຳດົນຕຣີ, ຜູ້ນຳການນະມັສການໃຫ້ຈັດຕຽມການນະມັສການໃຫ້ມີປະສິດທິພາບໃນການປ່ຽນແປງຊີວິດໃນເທສການວັນຄືນພຣະຊົນຂອງພຣະເຢຊູຢ່າງໃດ?

5. ພຣະເຈົ້າໄດ້ເອົາຊົນຊາດໃດມາໃຫ້ທ່ານ ເພື່ອໃຫ້ໄປເຮັດໃຫ້ຄົນໃນຊົນຊາດນັ້ນເປັນລູກສິດຂອງພຣະອົງ?

6. ຊີວິດຂອງທ່ານຈະຕ້ອງມີການປ່ຽນແປງອັນໃດແດ່ ເພື່ອຈະໃຊ້ເວລາຂອງທ່ານເຮັດໃຫ້ຄຣິສຕຽນໃຫມ່ມາເປັນລູກສິດຂອງພຣະເຢຊູ?

ສຈ. ບຸນເຮັ້ງ ພົງປຣະພັນ